Institute for Legal Support and Technical Assistance

ກອງປະຊຸມແຫ່ງຊາດ ປະຈຳປີ 2025

ຍົກສູງວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ: ເສັ້ນທາງຂອງ ສປປ ລາວ ໃນການປະຕິບັດມາດຕະຖານສາກົນ ກ່ຽວກັບການຄຸ້ມຄອງ, ການບັງຄັບໃຊ້ກົດໝາຍ, ຕຸລາການ ແລະ ການຮ່ວມມືລະຫວ່າງປະເທດທາງອາຍາ

ວັນທີ 25 – 26 ມີນາ 2025
ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ

ຮ່ວມຈັດໂດຍ:

ອົງການໄອຍະການປະຊາຊົນສູງສຸດ (SPP)

ສຳນັກງານຂໍ້ມູນຕ້ານການຟອກເງິນ ແຫ່ງ ສປປ ລາວ (AMLIO)

ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ (ILSTA)

สถานเอกอัครราชทูตไทย
Royal Thai Embassy

สำนักงานอัยการสูงสุด
OFFICE OF THE ATTORNEY GENERAL

สำนักงานป้องกันและปราบปรามการฟอกเงิน
Anti-Money Laundering Office (AMLO)

អគ្គភាពស៊ើបការណ៍ហិរញ្ញវត្ថុកម្ពុជា
Cambodia Financial Intelligence Unit

AMLC
Anti-Money Laundering Council

ສະໜັບສະໜຸນໂດຍ:

LE GOUVERNEMENT
DU GRAND-DUCHÉ DE LUXEMBOURG
Ministère des Finances

LUXEMBOURG
AID & DEVELOPMENT

ສະຖາບັນຊ່ວຍເຫຼືອດ້ານກົດໝາຍ ແລະ ວິຊາການ
ຊັ້ນ 6, ອາຄານ NNN, ຖະໜົນ ບູຣິຈັນ, ບ້ານ ໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: (+856) 21 41 0095, ອີເມວ: contact@ilsta.org, ເວັບໄຊທ໌: www.ilsta.org

ບົດລາຍງານນີ້ ສັງລວມຈຸດພົ້ນເດັ່ນຂອງບົດນຳສະເໜີຂອງບັນດາຊ່ຽວຊານ, ຜູ້ແທນຕ່າງປະເທດ ແລະ ເຈົ້າໜ້າທີ່ພາກລັດຂອງລາວ ໃນ ລະຫວ່າງກອງປະຊຸມແຫ່ງຊາດ. ເກັບກຳ ແລະ ຮຽບຮຽງໂດຍ ສະຖາບັນ ILSTA, ບົດລາຍງານນີ້ ສະແດງພາບລວມ ແລະ ຈຸດສຳຄັນ ຂອງການປຶກສາຫາລື, ແນວໃດກໍຕາມ ເນື່ອງຈາກພື້ນທີ່ຈຳກັດຂອງບົດລາຍງານ ຈຶ່ງບໍ່ສາມາດສະແດງໄດ້ທັງໝົດຂອງເອກະສານທີ່ຖືກ ນຳສະເໜີໃນກອງປະຊຸມ.

ບົດນຳສະເໜີໃນກອງປະຊຸມ ເຮັດເປັນທັງພາສາ ອັງກິດ ແລະ ພາສາລາວ ໂດຍມີການແປໂດຍທີມງານນາຍແປທີ່ມີຄຸນນະພາບ. ເຊັ່ນດຽວ ກັບຫຼາຍໆພາສາ, ມັນເປັນໄປບໍ່ໄດ້ທີ່ຈະສາມາດແປຄວາມໝາຍໃຫ້ໄດ້ແຕ່ລະຄຳສັບສະເພາະຈາກພາສາລາວເປັນພາສາອັງກິດ ກໍ່ຄື ຈາກພາສາອັງກິດເປັນພາສາລາວ. ໃນບົດລາຍງານສະບັບນີ້, ເນື້ອໃນທີ່ເປັນພາສາລາວ ສະທ້ອນເຖິງການຕີຄວາມໝາຍທີ່ຖືກຕ້ອງທີ່ສຸດ ຂອງບົດນຳສະເໜີ ທີ່ຖືກນຳສະເໜີໃນລະຫວ່າງກອງປະຊຸມ.

ກອງປະຊຸມແຫ່ງຊາດ ປະຈຳປີ 2025

ໃນປີ 2023, ສປປ ລາວ ໄດ້ຮັບການປະເມີນຮອບດ້ານ (ME) ຄັ້ງທີສອງໂດຍ ຄະນະສະເພາະກິດເພື່ອດຳເນີນການທາງດ້ານການເງິນ ເພື່ອຕ້ານການຟອກເງິນ ຫຼື ອົງການຕ້ານການຟອກເງິນສາກົນ (FATF) ຊຶ່ງໄດ້ປະເມີນການປະຕິບັດມາດຕະຖານສາກົນກ່ຽວກັບ ການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ພາຍຫຼັງການປະເມີນ, ອົງການ FATF ໄດ້ອອກບົດລາຍງານການປະເມີນ (MER) ຊຶ່ງໄດ້ຈັດ ສປປ ລາວ ເຂົ້າຢູ່ພາຍໃຕ້ຊ່ວງສັງເກດການຫຼັງການປະເມີນ ເພື່ອດຳເນີນການແກ້ໄຂຕາມລາຍການດຳເນີນການທີ່ແນະນຳ. ພາຍຫຼັງການສົ່ງບົດລາຍງານສັງເກດການຫຼັງການປະເມີນຂອງຕົນ ໃນເດືອນພະຈິກ 2024, ອົງການ FATF ໄດ້ດຳເນີນການທົບທວນຄືນໃນລະຫວ່າງກອງປະຊຸມໃຫຍ່ຂອງຕົນໃນເດືອນ ກຸມພາ 2025 ແລະ ໄດ້ພິຈາລະນາຈັດ ສປປ ລາວ ເຂົ້າໃນບັນຊີເທົາ (grey list), ສົ່ງຜົນໃຫ້ ສປປ ລາວ ຕ້ອງສົ່ງບົດລາຍງານຄວາມຄືບໜ້າຂອງຕົນ ສາມຄັ້ງຕໍ່ປີ ນັບແຕ່ປີ 2025 ເຖິງປີ 2027.

ອົງການໄອຍະການປະຊາຊົນສູງສຸດ ແຫ່ງ ສປປ ລາວ ແລະ ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍແລະ ວິຊາການ ໄດ້ຈັດກອງປະຊຸມລະດັບຊາດຄັ້ງທີ 6 ຂຶ້ນ ໃນລະຫວ່າງວັນທີ 25 – 26 ມີນາ 2025 ທີ່ ຫໍປະຊຸມແຫ່ງຊາດ ນະຄອນຫຼວງວຽງຈັນ ພາຍໃຕ້ຫົວຂໍ້ “ຍົກສູງວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ: ເສັ້ນທາງຂອງ ສປປ ລາວ ໃນການປະຕິບັດມາດຕະຖານສາກົນ ກ່ຽວກັບການຄຸ້ມຄອງ, ການບັງຄັບໃຊ້ກົດໝາຍ, ຕຸລາການ ແລະ ການຮ່ວມມືລະຫວ່າງປະເທດທາງອາຍາ” . ກອງປະຊຸມຄັ້ງນີ້ ໄດ້ເປີດໂອກາດໃຫ້ແກ່ ການເຕົ້າໂຮມຂອງຜູ້ທີ່ມີສ່ວນກ່ຽວຂ້ອງທີ່ສຳຄັນໃນຄວາມພະຍາຍາມຂອງ ສປປ ລາວ ໃນການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ມີຜູ້ແທນເຂົ້າຮ່ວມກອງປະຊຸມຫຼາຍກວ່າ 200 ທ່ານ ຈາກ 17 ແຂວງທົ່ວປະເທດ ແລະ ຈາກບັນດາໜ່ວຍງານທີ່ກ່ຽວຂ້ອງຂັ້ນສູນກາງ.

ໜ່ວຍງານຂໍ້ມູນຂ່າວກອງດ້ານການເງິນ (FIUs) ຂອງປະເທດ ກຳປູເຈຍ, ໄທ ແລະ ຟີລິບປິນ ກໍ່ໄດ້ສົ່ງຜູ້ຕາງໜ້າຂອງຕົນເຂົ້າຮ່ວມເພື່ອແບ່ງປັນປະສົບການກ່ຽວກັບ ຂະບວນການປະເມີນຮອບດ້ານຂອງອົງການຕ້ານການຟອກເງິນສາກົນ ຊຶ່ງເປັນຈຸດເນັ້ນໜັກອັນສຳຄັນຂອງກອງປະຊຸມ.

ຜູ້ຕາງໜ້າຈາກ ສຳນັກງານໄອຍະການສູງສຸດຂອງປະເທດໄທ ໄດ້ນຳສະເໜີບາງຕົວຢ່າງພື້ນເດັ່ນກ່ຽວກັບ ອາຊະຍາກຳຂ້າມແດນ ແລະ ຄວາມເຊື່ອມໂຍງຂອງພວກມັນຕໍ່ກັບການຟອກເງິນ. ທີມງານຊ່ຽວຊານດ້ານການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ ໄດ້ນຳສະເໜີຂໍ້ມູນລົງເລິກກ່ຽວກັບຂະບວນການປະເມີນຮອບດ້ານ ໂດຍເນັ້ນໃສ່ ຄວາມສຳຄັນຂອງການປະເມີນການຈັດຕັ້ງປະຕິບັດໂດຍລວມຂອງລະບົບ ຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃນລະດັບຊາດ (AML-CFT systems).

ຂໍສະແດງຄວາມຂອບໃຈເປັນຢ່າງສູງຕໍ່ ສະມາຄົມທະນາຄານໄທ, ທະນາຄານໄທພານິດ, ທະນາຄານກະຊິກອນໄທ ແລະ ທະນາຄານການຄ້າຕ່າງປະເທດລາວ ສຳລັບການເຂົ້າຮ່ວມກອງປະຊຸມຄັ້ງນີ້ ແລະ ການປະກອບສ່ວນອັນມີຄຸນຄ່າໃນເວທີເສວະນາ ພາຍໃຕ້ຫົວຂໍ້ “ປະສົບການຈາກປະເທດໄທ: ຜົນກະທົບຂອງ “ບັນຊີເທົາ” ທີ່ມີຕໍ່ພາກທະນາຄານ”. ຄວາມຊ່ຽວຊານ ແລະ ມຸມມອງຂອງພວກເພິ່ນມີສ່ວນສຳຄັນຕໍ່ການປຶກສາຫາລື ແລະ ປະກອບສ່ວນຕໍ່ຜົນສຳເລັດໂດຍລວມຂອງກອງປະຊຸມ.

ການຈັດກອງປະຊຸມແຫ່ງຊາດຄັ້ງນີ້ ໄດ້ຮັບການສະໜັບສະໜູນຈາກ ອົງການຊ່ວຍເຫຼືອ ແລະ ພັດທະນາຂອງປະທດລຸກຊຳບວກ ແລະ ກະຊວງການເງິນຂອງປະເທດລຸກຊຳບວກ.

ບົດກ່າວເປີດ

- *ທ່ານ ຮອງຜູ້ວ່າທະນາຄານ ແຫ່ງ ສປປ ລາວ*
- *ທ່ານ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ*
- *ບັນດາທ່ານ ທູຕະນຸທູດ, ຜູ້ຕາງໜ້າສະຖານທູດ, ອົງການຈັດຕັ້ງສາກົນ*
- *ບັນດາທ່ານ ທີ່ນັບຖື ແລະ ຮັກແພງທັງຫຼາຍ*

ໃນນາມຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ,ກໍຄື ໃນນາມ ຄະນະກຳມະການແຫ່ງຊາດຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂ້າພະເຈົ້າ ຮູ້ສຶກເປັນກຽດຢ່າງສູງ ແລະ ມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ຮັບກຽດ ເຂົ້າຮ່ວມກ່າວເປີດກອງປະຊຸມສຳມະນາລະດັບຊາດ ໃນຫົວຂໍ້: "ຍົກສູງການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ : ເສັ້ນທາງຂອງ ສປປ ລາວ ໃນການປະຕິບັດມາດຕະຖານສາກົນ ກ່ຽວກັບການຄຸ້ມຄອງ, ການບັງຄັບໃຊ້ກົດໝາຍ, ຕຸລາການ ແລະ ຮ່ວມມືລະຫວ່າງປະເທດອາຍາ "ໃນມື້ນີ້, ເຊິ່ງເປັນກອງປະຊຸມສຳມະນາ ທີ່ມີຄວາມໝາຍຄວາມສຳຄັນຫຼາຍ ຕໍ່ກັບ ສປປ ລາວ ແລະ ເປັນທັງການສະແດງໃຫ້ເຫັນເຖິງຄວາມໝາຍໝັ້ນ ແລະ ຄວາມເອົາໃຈໃສ່ໃນການປະຕິບັດຕາມພັນທະສາກົນຂອງລັດຖະບານ ແຫ່ງ ສປປ ລາວ ໃນວຽກງານດັ່ງກ່າວ.



ທ່ານ ສະເຫລີມໄຊ ກົມມະສິດ
ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ປະທານ ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ບັນດາທ່ານ ທີ່ຮັກແພງ,

ການຟອກເງິນ ແລະ ການກໍ່ການຮ້າຍ ແມ່ນໜຶ່ງໃນບັນດາອາຊະຍາກຳຂ້າມຊາດ ຊຶ່ງເປັນບັນຫາພື້ນເດັ່ນທີ່ໄດ້ເກີດຂຶ້ນ ແລະ ແຜ່ຫຼາຍຢູ່ໃນພາກພື້ນ ແລະ ໃນໂລກ ດ້ວຍຫຼາຍຮູບແບບ, ຫຼາຍວິທີການ ອັນໄດ້ກາຍເປັນໄພຂົ່ມຂູ່ຕໍ່ສະເຖຍລະພາບທາງດ້ານການເມືອງ, ການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດຂອງບັນດາປະເທດໃນພາກພື້ນ ແລະ ໃນໂລກ.

ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນໜຶ່ງໃນບັນດາອາຊະຍາກຳຂ້າມຊາດ ທີ່ຕິດພັນໂດຍກົງ ກັບ ບັນຫາຢາເສບຕິດ, ການຄ້າອາວຸດ, ການຄ້າມະນຸດ, ການພະນັນທີ່ຜິດກົດໝາຍ, ການສໍ້ລາດບັງຫຼວງ ແລະ ອື່ນໆ ໂດຍຜ່ານລະບົບທະນາຄານ ຫຼື ນອກລະບົບທະນາຄານ, ສະຖາບັນການເງິນ, ອັນໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ຍິ່ງໄປກວ່ານັ້ນ ໄດ້ເຮັດໃຫ້ສັງຄົມ ມີຄວາມອຸ້ນອາຍ ບໍ່ມີຄວາມສະຫງົບ ກາຍເປັນປາກົດການຫຍໍ້ທໍ້ ທີ່ກີດຂວາງການພັດທະນາປະເທດຊາດ. ອັນນີ້ໄດ້ກາຍເປັນສິ່ງທ້າທາຍຢ່າງໃຫຍ່ຫລວງໃຫ້ແກ່ປະເທດຕ່າງໆ ໃນພາກພື້ນ ລວມທັງ ສປປ ລາວ, ເຊິ່ງມັນຮຽກຮ້ອງໃຫ້ມີການຮ່ວມມືຢ່າງກວ້າງຂວາງ ຂອງທຸກຂະແໜງການ ແລະ ທຸກປະເທດ.

ຕະຫຼອດໄລຍະທີ່ຜ່ານມາ, ລັດຖະບານ ໄດ້ຖືເອົາວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ໂດຍໄດ້ມີມາດຕະການລະດັບຊາດ ແລະ ລະດັບສາກົນ ຢ່າງຊັດເຈນ, ວາງຍຸດທະສາດສະເພາະໜ້າ ແລະ ຍາວນານ ພ້ອມທັງໄດ້ສ້າງຕັ້ງເປັນຄະນະລະດັບຊາດ ເພື່ອຮັບຜິດຊອບໃນການແກ້ໄຂບັນຫາດັ່ງກ່າວ ຄື: ສ້າງຕັ້ງໜ່ວຍງານຂໍ້ມູນຕ້ານການຟອກເງິນ ໃນປີ 2007, ໂດຍໄດ້ປັບປຸງ ມາເປັນສຳນັກງານຂໍ້ມູນຕ້ານການຟອກເງິນ ໃນປັດຈຸບັນ ແລະ ໃນປີ 2014 ໄດ້ສ້າງຕັ້ງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ (ຄຕຟງ) ເພື່ອກຳນົດນະໂຍບາຍລະດັບຊາດໃນແຕ່ລະໄລຍະ ແລະ ເປັນກົນໄກການປະສານງານແຫ່ງຊາດ, ຄະນະກຳມະການກວດກາ ແລະ ຄວບຄຸມ ຢາເສບຕິດ, ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ.

ສປປ ລາວ ໄດ້ເປັນພາຄີສົນທິສັນຍາຂອງການອົງ ສະຫະປະຊາຊາດ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດ, ສົນທິສັນຍາສອງຝ່າຍວ່າດ້ວຍການຮ່ວມມືທາງດ້ານຍຸຕິທຳ ກ່ຽວກັບບັນຫາທາງແພ່ງ ແລະ ອາຍາ ສສ ຫວຽດນາມ, ສປ ຈີນ ແລະ ສ. ເກົາຫຼີ, ສົນທິສັນຍາວ່າດ້ວຍການຮ່ວມມືທາງດ້ານຍຸຕິທຳ ກ່ຽວກັບບັນຫາທາງແພ່ງ ແລະ ອາຍາ ກັບບັນດາປະເທດສະມາຊິກ ອາຊຽນ; ສົນທິສັນຍາສອງຝ່າຍວ່າການສົ່ງຜູ້ຮ້າຍຂ້າມແດນ ລະຫວ່າງ ລາວ-ຈີນ, ລາວ-ກຳປູເຈຍ, ລາວ-ໄທ, ລາວ-ລັດເຊຍ ແລະ ໄດ້ລົງນາມສົນທິສັນຍາສອງຝ່າຍວ່າດ້ວຍການໂອນໂຕ ນັກໂທດ ລະຫວ່າງ ລາວ-ໄທ ແລະ ລາວ-ອັງກິດ ແລະ ເປັນສະມາຊິກຂອງກຸ່ມອາຊີ-ປາຊີຟິກ ວ່າດ້ວຍການຕ້ານການ ຟອກເງິນ.

ສປປ ລາວ ໄດ້ຮັບຮອງເອົາກົດໝາຍວ່າດ້ວຍການຕ້ານ ການສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍໃນປີ 2014, ກົດໝາຍວ່າດ້ວຍການດຳເນີນ ຄະດີອາຍາ, ປະມວນກົດໝາຍອາຍາ, ສ້າງປຶ້ມຄູ່ມືຫຼັກຖານໃນ ຄະດີອາຍາ, ປຶ້ມຄູ່ມືການສົ່ງຜູ້ຮ້າຍຂ້າມແດນ ແລະ ນິຕິກຳຈຳນວນ ໜຶ່ງ ທີ່ພົວພັນເຖິງວຽກງານຕ້ານການຟອກເງິນ ແລະ ການສະໜອງ ທຶນໃຫ້ແກ່ການກໍ່ການຮ້າຍ, ເຮັດໃຫ້ບັນດາອົງການດຳເນີນຄະດີ ທີ່ກ່ຽວຂ້ອງ ຖືກຕ້ອງ, ຄົບຖ້ວນ, ຮອບດ້ານ ແລະ ພາວະວິໃສ ໂດຍ ຮັບປະກັນໃຫ້ຜູ້ກະທຳຜິດ ຕ້ອງຖືກລົງໂທດຕາມກົດໝາຍ ແລະ ຜູ້ບໍ່ກະທຳຜິດແມ່ນບໍ່ຖືກລົງໂທດແນ່ໃສ່ປົກປ້ອງຜົນປະໂຫຍດອັນ ຊອບທຳຂອງຜົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ.

ບັນດາທ່ານ ທີ່ຮັກແພງທັງໜ້າ,

ຜ່ານການຈັດຕັ້ງຕີບັດຕົວຈິງ ເຫັນວ່າ ການດຳເນີນຄະດີ ກ່ຽວກັບການຟອກເງິນ ຢູ່ ສປປ ລາວ ຍັງບໍ່ທັນມີຫຼາຍ, ແຕ່ວ່າ ການ ກະທຳຜິດໃນຄະດີອາດຈະນຳມາເປັນສາຍເຫດຂອງການຟອກ ເງິນເກີດຂຶ້ນແຜ່ຫຼາຍໃນ ສປປ ລາວ ເປັນຕົ້ນແມ່ນ ຄະດີ ຢາເສບຕິດ, ການຄ້າມະນຸດ, ການສໍ້ໂກງ ແລະ ອື່ນໆ ທີ່ມີ ຄວາມສ່ຽງ ນຳໄປສູ່ອາຊະກຳຟອກເງິນ ແລະ ການກໍ່ການຮ້າຍ. ເມື່ອເບິ່ງຄືນ ທາງດ້ານ ປະສົບການຂອງພະນັກງານໄອຍະການ ປະຊາຊົນ, ສານປະຊາຊົນ ແລະ ເຈົ້າໜ້າທີ່ ສືບສວນ-ສອບສວນ ກໍຄື ອົງການອື່ນທີ່ກ່ຽວຂ້ອງ ຂອງ ສປປ ລາວ ຍັງມີຄວາມຈຳກັດ ດ້ານຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກໍຄື ການເກັບຫຼັກຖານ, ການສືບສວນ-ສອບສວນ, ເຕັກນິກ ແລະ ວິທີການສືບສວນ-ສອບສວນທາງດ້ານການເງິນ, ການສັ່ງອາຍັດ ແລະ ການພິຈາລະນາ ຄະດີດັ່ງກ່າວ.

ໃນເດືອນ ມັງກອນ 2025, ອົງກອນ FATF (Financial Action Task Force) ໄດ້ປະເມີນຜົນການຈັດຕັ້ງປະຕິບັດຕາມ ມາດຕະການ ແລະ ພັນທະຂອງ ສປປ ລາວ ໃນການຕ້ານ ແລະ ສະກັດກັ້ນການຟອກເງິນ, ເຊິ່ງເຫັນວ່າ ສປປ ລາວ ຍັງມີມາດ ຕະການຈຳນວນໜຶ່ງທີ່ຈະຕ້ອງໄດ້ຮັບການແກ້ໄຂ ແລະ ປັບປຸງ ເພື່ອປະຕິບັດໃຫ້ໄດ້ຕາມມາດຕະຖານຂອງ FAFT. ສະນັ້ນ, ຈຶ່ງເປັນສາຍເຫດໃຫ້ ສປປ ລາວ ຖືກຈັດເຂົ້າໃນບັນຊີສີເທົາ (Greylisting).

ໂດຍໄດ້ເຫັນຄວາມສຳຄັນຄືແນວນັ້ນ ແລະ ເພື່ອສາມາດ ເຮັດໜ້າທີ່ໃນການສະກັດກັ້ນ, ຕ້ານອາຊະຍາກຳຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ປະເທດເຮົາ ມີຜົນສຳເລັດລັດຖະບານ ແຫ່ງ ສປປ ລາວ ຈຶ່ງຕົກລົງເຫັນດີໃຫ້ ອົງການໄອຍະການປະຊາຊົນສູງສຸດ ແລະ ທະນາຄານແຫ່ງ ສປປ ລາວ ໂດຍໄດ້ຮັບການສະໜັບສະໜູນຮອບດ້ານຂອງ ທ່ານ ລຸກຊຳບວກ, ສະຖານເອກອັກຄະທູດ ແຫ່ງ ທ ຊ ອ ນ ຈັກ ໄທ ແລະ ສະຖາບັນຊ່ວຍເຫຼືອດ້ານກົດໝາຍ ແລະ ວິຊາການ ແຫ່ງ ທ ຊ ອ ນ ຈັກ ລຸກຊຳບວກ ຈັດກອງປະຊຸມ ນີ້ຂຶ້ນ ເປັນຄັ້ງທີ 2 ຊຶ່ງຄັ້ງທີ່ຜ່ານມາ ໄດ້ດຳເນີນໃນປີ 2023 ເພື່ອ ໃຫ້ຜູ້ແທນກອງປະຊຸມ ໄດ້ແລກປ່ຽນບົດຮຽນ, ປະສົບການ ແລະ ພຶດຕິກຳທີ່ດີ ກ່ຽວກັບການສະກັດກັ້ນ, ການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ການຮ່ວມມື ລະຫວ່າງປະເທດທາງອາຍາ, ການຍຶດຊັບສິນ ແລະ ການດຳເນີນ ຄະດີ ກ່ຽວກັບການຟອກເງິນ ໂດຍຜູ້ຊ່ຽວຊານ ພາຍໃນ ແລະ ຕ່າງປະເທດ ຈຳນວນໜຶ່ງ ເປັນຜູ້ສະເໜີ ຈຶ່ງສະເໜີມາຍັງບັນດາ ທ່ານ ຈົ່ງພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນ ແລະ ແລກປ່ຽນ ບົດຮຽນປະສົບການໃນແຕ່ລະບັນຫາ ແນ່ໃສ່ ຍົກສູງຄຸນນະພາບ ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ ການຮ້າຍຢູ່ປະເທດເຮົາ ຢ່າງມີປະສິດທິຜົນ.

*ຂ້າພະເຈົ້າ ເຊື່ອໝັ້ນວ່າ ໃນກອງປະຊຸມນີ້, ບັນດາທ່ານ ຈະ ໄດ້ຮັບບົດຮຽນອັນໃໝ່ ແລະ ບົດຮຽນທີ່ດີ ໃນການສະກັດກັ້ນ ແລະ ຕ້ານອາຊະຍາກຳຂ້າມຊາດ ມາຮັບໃຊ້ຢູ່ປະເທດ ໃນຊຸມປີຕໍ່ໜ້າ ຢ່າງມີປະສິດທິຜົນ; ຍົກສູງຄວາມຮູ້ຂອງຂະບວນການຕິດຕາມ ກວດກາຂອງອົງການ FAFT, ບົດບາດຂອງຄະນະກວດສອບ ການຮ່ວມມືສາກົນ (ICRG) ແລະ ແຜນປະຕິບັດງານຂອງອົງການ FAFT; ເຂົ້າໃຈໝິ່ນກະທົບທີ່ອາດຈະເກີດຂຶ້ນ ຈາກອົງກອນ FAFT ທີ່ຂຶ້ນບັນຊີ *ສີເທົາ* ຕໍ່ເສດຖະກິດ, ຊື່ສຽງໃນເວທີສາກົນຂອງ ສສປ ລາວ ເຮົາ.*

ໃນນາມຕາງໜ້າລັດຖະບານ ແຫ່ງ ສສປ ລາວ ກໍຄືໃນນາມ ປະທານຄະນະກຳມະການແຫ່ງຊາດຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ຂໍສະແດງຄວາມຂອບໃຈ ສ ະ ຖ າ ບ ັ ນ ຊ ່ ວ ຍ ເ ຫ ຼ ື ອ ດ ້ ານ ກ ົ ດ ໝ າ ຍ ແ ລ ະ ວ ິ ຊ າ ກ ານ ແຫ່ງ ທ ຊ ອ ນ ຈ ັ ກ ລ ຸ ກ ຊ ຳ ບ ວ ກ ທ ີ ່ ໃ ຫ ້ ກ ານ ຊ ່ ວ ຍ ເ ຫ ຼ ື ອ ໃ ນ ກ ານ ຈັດກອງປະຊຸມໃນຄັ້ງນີ້, ຂໍສະແດງຄວາມຂອບໃຈ ມາຍັງນັກ ຊ່ຽວຊານຈາກ ທ ຊ ອ ນ ຈ ັ ກ ໄ ທ , ກ ຳ ປ ູ ເ ຈ ຍ , ຟ ິ ລ ິ ບ ປ ິ ນ ທ ີ ່ ມ າ ຮ ່ ວ ມ ແ ລ ກ ປ ່ ຽ ນ ບ ົ ດ ຮ ຽ ນ ໃ ນ ວ ຽ ກ ງ ານ ດ ັ ງ ກ ່ າ ວ ແ ລ ະ ຫ ວ ັ ງ ຢ ່ າ ງ ຍ ິ ່ ງ ວ ່ າ ຈ ະ ໄ ດ ້ ຮ ັ ບ ກ ານ ຊ ່ ວ ຍ ເ ຫ ຼ ື ອ ເ ຕ ີ ມ ອ ີ ກ ໃ ນ ຕ ໍ ່ ໜ ້ າ .

ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງ ທ່ານ ຮອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ທ່ານ ຮອງ ຜູ້ວ່າ ທະນາຄານແຫ່ງ ສປປ ລາວ, ບັນດາທ່ານ ເອກອັກຄະລັດຖະທູດ, ທູ ຕະນຸທູດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ ທີ່ໄດ້ສະຫຼະເວລາອັນ ມີຄຸນຄ່າຂອງທ່ານ ມາເຂົ້າຮ່ວມນຳພວກເຮົາ. ອວຍພອນແດ່ ບັນດາທ່ານທີ່ໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້, ຈົ່ງມີພາລະບາໄມທີ່ ສົມບູນ ມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃນໜ້າທີ່ ອັນມີ ກຽດ ແລະ ສູງສົ່ງ ຂອງບັນດາທ່ານ. ຂ້າພະເຈົ້າ ຂໍກ່າວເປີດກອງ ປະຊຸມ ຄັ້ງນີ້ ຢ່າງເປັນທາງການ ແລະ ຂໍອວຍພອນໃຫ້ກອງປະຊຸມ ໃນຄັ້ງນີ້ ຈົ່ງປະສົບຜົນສຳເລັດຕາມລະດັບຄາດໝາຍ.

(ຂໍຂອບໃຈ)




LUXEMBOURG
AID & DEVELOPMENT
ຍົກສູງການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ: ເສັ້ນທາງ ຂອງ ສປປ ລາວ ໃນການປະຕິບັດ
ມາດຕະຖານສາກົນກ່ຽວກັບ ການຄຸ້ມຄອງ, ການບັງຄັບໃຊ້ກົດໝາຍ, ຕຸລາການ ແລະ ການຮ່ວມມືລະຫວ່າງປະເທດທາງອາຍາ
Enhancing AML/CFT Frameworks: Lao PDR's Path to implement the FATF AML/CFT Global
Standards for Supervision, Law Enforcement, the Judiciary and MLA

ບົດກ່າວຂອງບຸກຄົນສຳຄັນ



ທ່ານ ຄຳເພັດ ສົມວໍລະຈິດ,
ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແຫ່ງ ສປປ ລາວ

ອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ ໂດຍສະເພາະແມ່ນ ການຄ້າຂາຍຢາເສບຕິດ ແລະ ການຟອກເງິນ ຍັງຄົງສືບຕໍ່ສົ່ງຜົນກະທົບຕໍ່ຊຸມຊົນທີ່ມີຄວາມສ່ຽງ ຢ່າງບໍ່ສົມສ່ວນ. ເພື່ອຕໍ່ສູ້ກັບບັນຫານີ້, ລັດຖະບານ ແຫ່ງ ສປປ ລາວ ໄດ້ຖືເອົາຄວາມພະຍາຍາມໃນການ ປາບປາມຢາເສບຕິດເປັນບຸລິມະສິດວາລະແຫ່ງຊາດ ໂດຍການສ້າງຕັ້ງຄະນະກຳມະການ ສະເພາະ ເພື່ອແກ້ໄຂບັນຫາທີ່ກ່ຽວຂ້ອງ ເຊັ່ນ: ບັນຫາການຄ້າຂາຍຢາເສບຕິດທີ່ ຜິດກົດໝາຍ ແລະ ການຄ້າມະນຸດ. ການປັບປຸງທາງດ້ານກົດໝາຍກໍ່ໄດ້ຮັບການຈັດຕັ້ງ ປະຕິບັດ ລວມທັງການປັບ ປຸງບັນດາກົດໝາຍທີ່ກ່ຽວຂ້ອງ ແລະ ພັດທະນາຄູ່ມືກ່ຽວກັບ ຫຼັກຖານທາງອາຍາ ແລະ ລະບຽບການ-ຂັ້ນຕອນສຳລັບການສົ່ງຜູ້ຮ້າຍຂ້າມແດນ. ກອງ ປະຊຸມລະດັບຊາດເປັນເວລາສອງວັນ ພາຍໃຕ້ຫົວຂໍ້ ຍົກສູງວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ກຳລັງໄຂຂຶ້ນທີ່ ຫໍປະຊຸມແຫ່ງຊາດ ມີຈຸດປະສົງເພື່ອນຳສະເໜີ, ແບ່ງປັນຂໍ້ມູນເຊີງເລິກໃນລະດັບພາກພື້ນ ແລະ ສາກົນ ແລະ ເສີມຂະຫຍາຍຍຸດທະສາດຂອງ ສປປ ລາວ ເພື່ອຮັບມືກັບ ການຖືກຈັດເຂົ້າໃນບັນຊີເທົາ. ໃນການກ່າວຈຸດປະສົງກອງປະຊຸມ, ທ່ານ ຄຳເພັດ ໄດ້ກ່າວຕ້ອນຮັບຜູ້ແທນກອງປະຊຸມ ແລະ ເພີ່ນໄດ້ເນັ້ນໜັກຄວາມສຳຄັນຂອງການແລກປ່ຽນບົດຮຽນ ແລະ ປະສົບການໃນ ການສົ່ງເສີມການຮ່ວມມືໃນລະດັບທີ່ກວ້າງຂວາງຂຶ້ນ ເພື່ອຕໍ່ຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ເຊັ່ນດຽວກັນ, ເພີ່ນຍັງສະແດງຄວາມຫວັງສູງ ສຳລັບ ການປຶກສາຫາລືຢ່າງສ້າງສັນ ແລະ ມີປະສິດທິຜົນສູງຕະຫຼອດໄລຍະເວລາຂອງ ການປະຊຸມ.

ລຸກຊຳບວກ ເປັນຄູ່ຮ່ວມພັດທະນາທີ່ໝັ້ນຄົງຂອງ ສປປ ລາວ ທີ່ເຮັດວຽກຮ່ວມກັນເພື່ອ ສົ່ງເສີມການສ້າງລັດທີ່ປົກຄອງດ້ວຍກົດໝາຍ, ການເຂົ້າເຖິງລະບົບຍຸຕິທຳ ແລະ ການປົກຄອງທີ່ດີ. ນັບຕັ້ງແຕ່ ປີ 2023 ເປັນຕົ້ນມາ ທີ່ກຸ່ມຕ້ານການຟອກເງິນໃນພາກພື້ນ ອາຊີ-ອາຊີຟິກ ໄດ້ແຈ້ງວ່າ ສປປ ລາວ ຕ້ອງດຳເນີນການຕາມຂໍ້ແນະນຳ 95 ຂໍ້ຂອງຕົນ ແລະ ມີຫຼາຍຂໍ້ໃນຂໍ້ແນະນຳດັ່ງກ່າວໄດ້ຮັບການແກ້ໄຂ. ທ່ານອຸປະທູດ ແລມມາຣ໌ ໄດ້ສະແດງຄວາມຊົມເຊີຍ ສປປ ລາວ ຕໍ່ພາກສ່ວນດັ່ງກ່າວ. ການມີມາດຕະການຕ້ານການ ຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍທີ່ພຽງພໍ ແລະ ເໝາະສົມ ແມ່ນ ບາດກ້າວໜຶ່ງທີ່ສຳຄັນ ເພື່ອກ້າວເຂົ້າສູ່ການສ້າງສະພາບແວດລ້ອມທາງການເງິນທີ່ມີ ຄວາມໂປ່ງໃສ ແລະ ໜ້າເຊື່ອຖື, ດຶງດູດການລົງທຶນ, ຊ່ວຍໃຫ້ເກີດຄວາມຫຼາກຫຼາຍ ແລະ ຂັບເຄື່ອນການພັດທະນາຢ່າງຄອບຄຸມ. ລັດຖະບານລຸກຊຳບວກ ຍັງຄົງຮັກສາໄວ້ ຄວາມ ມຸ້ງໝັ້ນຂອງຕົນ ທີ່ຈະໃຫ້ການສະໜັບສະໜູນ ສປປ ລາວ ໃນການປັບປຸງຂອບວຽກທາງ ກົດໝາຍ ແລະ ການບັນລຸມາດຕະຖານສາກົນ ເພື່ອເສີມຂະຫຍາຍຄວາມໝັ້ນຄົງ ແລະ ການຈະເລີນເຕີບໂຕຢ່າງຕໍ່ເນື່ອງ.



ທ່ານ ໂທມາດສ໌ ແລມມາຣ໌
ອຸປະທູດ, ສະຖານທູດລຸກຊຳບວກ ປະຈຳ ສປປ ລາວ



ທ່ານ ຣິຊາດ ຟິລິບປາດ
ປະທານ ແລະ ຫົວໜ້າສະຖາບັນຊ່ວຍເຫຼືອ ທາງດ້ານກົດໝາຍ ແລະ ວິຊາການ (ILSTA)

ການປະຕິບັດຕາມມາດຕະຖານຂອງອົງການຕ້ານການຟອກເງິນສາກົນ (FATF) ເປັນສິ່ງ ຈຳເປັນ ໂດຍບໍ່ມີທາງເລືອກ. ສປປ ລາວ ມີຄວາມຄືບໜ້າ ໃນການສ້າງຄວາມສາມາດດ້ານ ການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ເຖິງຢ່າງໃດກໍຕາມ ຄວາມທ້າທາຍຍັງຄົງມີຢູ່. ໃນປີ 2023, ສປປ ລາວ ຖືກປະເມີນເປັນຄັ້ງທີສອງ ແລະ ຂະບວນການປະເມີນໄດ້ຮັບຮູ້ເຖິງຄວາມຄືບໜ້າ ແຕ່ ໃນຂະນະດຽວກັນ ກໍ່ໄດ້ລະບຸຈຸດອ່ອນ ທີ່ສຳຄັນ ແລະ ຈຳເປັນຕ້ອງໄດ້ຮັບການແກ້ໄຂ. ຈາກຜົນຂອງການປະເມີນ, ສປປ ລາວ ໄດ້ ຖືກຈັດເຂົ້າໃນ “ບັນຊີເທົາ” (grey list) ຂອງອົງການ FATF ແລະ ຕ້ອງດຳເນີນການຢ່າງ ສຳຄັນ ເພື່ອແກ້ໄຂບັນດາຂໍ້ບົກຜ່ອງໃນເຊີງຍຸດທະສາດ ໃຫ້ສຳເລັດພາຍໃນປີ 2026-2027. ການຖືກຈັດເຂົ້າໃນບັນຊີເທົາ ອາດກໍ່ໃຫ້ເກີດຜົນກະທົບໃນຫຼາຍດ້ານ ລວມທັງ ຂໍ້ຈຳກັດທາງ ດ້ານການເງິນ, ການລົງທຶນທີ່ຫຼຸດລົງ ແລະ ຄ່າໃຊ້ຈ່າຍໃນການເຮັດທຸລະກຳທີ່ສູງຂຶ້ນ ແຕ່ ໃນ ຂະນະດຽວກັນ ມັນກໍ່ເປັນໂອກາດສຳລັບການປັບປຸງ. ຜູ້ແທນຈາກປະເທດໄທ, ກຳປູເຈຍ ແລະ ຟິລິບປິນ ເຂົ້າຮ່ວມກອງປະຊຸມນີ້ ເພື່ອແບ່ງປັນປະສົບການຂອງເຂົາເຈົ້າ ໃນການຮັບ ມື ແລະ ແກ້ໄຂຕາມຂໍ້ແນະນຳ ໃນເວລາທີ່ປະເທດຕົກຢູ່ໃນບັນຊີ ເທົາ. ທ່ານ ຣິຊາດ ຟິລິບ ປາດ ໄດ້ເນັ້ນໜັກຄວາມສຳຄັນຂອງ ການຮ່ວມມືລະຫວ່າງປະເທດທາງອາຍາ ເພື່ອຕໍ່ສູ້ກັບ ອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ ແລະ ພາລະບົບບາດຂອງພາກສ່ວນຕ່າງໆ ໃນການປະຕິບັດຕາມຂອບມາດຕະຖານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ.

ການນຳສະເໜີ : ມື້ທີ 1, ວັນທີ 25 ມີນາ 2025

ບົດບາດຂອງອົງການຕ້ານການຟອກເງິນສາກົນ ແລະ ຄະນະທົບທວນການຮ່ວມມືສາກົນ



ທ່ານ ອຸງ ແມັດທິວສ໌, ຊ່ຽວຊານ ສະຖາບັນ ILSTA

ອົງການຕ້ານການຟອກເງິນສາກົນ (FATF) ຖືກສ້າງຕັ້ງຂຶ້ນໃນ ປີ 1989 ເພື່ອກຳນົດມາດຕະຖານສາກົນເພື່ອຕໍ່ຕ້ານການຟອກ ເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການ ຂະຫຍາຍອາວຸດທຳລາຍລ້າງສູງ. ມີການດຳເນີນງານຮ່ວມກັນ ຂອງ 9 ຄະນະປະຕິບັດງານໃນລະດັບພູມີພາກ ລວມທັງ ກຸ່ມ ຕ້ານການຟອກເງິນໃນພາກພື້ນອາຊີ-ປາຊີຟິກ (APG) ເພື່ອ ສະໜັບສະໜູນ ຂໍ້ແນະນຳຂອງອົງການ FATF. ອົງການ FATF ຈັດກອງປະຊຸມໃຫຍ່ ແລະ ກອງປະຊຸມຂອງຄະນະປະຕິບັດງານ ສາມຄັ້ງຕໍ່ປີ ໃນນັ້ນລວມທັງ ກຸ່ມຜູ້ຊ່ຽວຊານເຊັ່ນ: ກຸ່ມປະເມີນ ແລະ ກວດກາການປະຕິບັດຕາມລະບຽບການ ແລະ ກຸ່ມທົບ ທວນການຮ່ວມມືສາກົນ.


ການປະເມີນການປະຕິບັດຕາມມາດຕະຖານຂອງ FATF ແມ່ນ ລວມທັງ ການປະຕິບັດຕາມຂໍ້ກຳນົດທາງເຕັກນິກ ແລະ ປະສິດທິຜົນ. ສຳລັບການປະຕິບັດຕາມຂໍ້ກຳນົດທາງເຕັກນິກ ແມ່ນ ການປະເມີນຂອບວຽກທາງກົດໝາຍ ແລະ ທາງສະຖາບັນ ຂອງປະເທດ ໂດຍອີງໃສ່ 40 ຂໍ້ແນະນຳຂອງ FATF. ບັນດາ ປະເທດທີ່ຖືກປະເມີນ ຈະຖືກຈັດລຽງຕັ້ງແຕ່ ການປະຕິບັດຕາມ ໄປຈົນເຖິງການບໍ່ປະຕິບັດຕາມຂໍ້ກຳນົດ. ທາງດ້ານປະສິດທິຜົນ ແມ່ນປະເມີນວ່າ ບັນດາປະເທດສາມາດບັນລຸໄດ້ດີຊ່ຳໃດ ກ່ຽວກັບການຕ້ານການຟອກເງິນ ແລະ ການສະໜອງທຶນໃຫແກ່ ການກໍ່ການຮ້າຍ ໂດຍຈະມີການຈັດລຽງຕັ້ງແຕ່ ລະດັບຕ່ຳ ໄປຈົນ ເຖິງລະດັບສູງຂອງປະສິດທິຜົນໃນການຈັດຕັ້ງປະຕິບັດ.

ໃນເດືອນ ກັນຍາ 2023, ໃນບົດລາຍງານການປະເມີນຮອບດ້ານຂອງ ສປປ ລາວ (MER) ໃນການໃຫ້ຄະແນນຕໍ່ການປະຕິບັດຕາມ ຂໍ້ກຳນົດທາງເຕັກນິກ ສະແດງໃຫ້ເຫັນວ່າ ມີ 9 ລາຍການ ທີ່ບໍ່ເປັນໄປຕາມຂໍ້ກຳນົດ, ມີ 22 ລາຍການທີ່ເປັນໄປຕາມຂໍ້ກຳນົດໃນບາງ ສ່ວນ ແລະ ມີ 8 ລາຍການທີ່ເປັນໄປຕາມຂໍ້ກຳນົດເປັນສ່ວນໃຫຍ່. ບັນດາຂໍ້ແນະນຳຫຼັກເຊັ່ນ R.3, R.6, R.10, R.11 ແລະ R.20 ໄດ້ຮັບ ການຈັດລຳດັບວ່າ ເປັນໄປຕາມຂໍ້ກຳນົດໃນບາງສ່ວນ ໃນຂະນະທີ່ R.5 ແມ່ນບໍ່ສາມາດເຮັດໄດ້ຕາມຂໍ້ກຳນົດ.

ໃນແງ່ຂອງປະສິດທິຜົນ, ສປປ ລາວ ໄດ້ຮັບຄະແນນຕ່ຳສຳລັບ ຜົນໄດ້ຮັບທັນທີ (Immediate Outcomes) 9 ຂໍ້ ແລະ ຄະແນນປານ ກາງສຳລັບ 2 ຂໍ້.



ຂໍ້ກຳນົດການລາຍງານຂອງຄະນະທົບທວນການຮ່ວມມືສາກົນ



ທ່ານ ອາລາສແຕຣ໌ ແບລນດ໌, ຊ່ຽວຊານສະຖາບັນ ILSTA

ຄະນະທົບທວນການຮ່ວມມືສາກົນ (ICRG) ດຳເນີນການລະບຸ ແລະ ຕິດຕາມບັນດາໜ່ວຍງານທີ່ມີສິດອຳນາດ ຊຶ່ງມີຂໍ້ບົກຜ່ອງທາງຍຸດທະສາດໃນຂອບການປະຕິບັດງານດ້ານການຕ້ານການຟອກເງິນ, ຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຂະຫຍາຍອາວຸດທຳລາຍລ້າງສູງ. ບັນດາປະເທດອາດຈະຕົກຢູ່ພາຍໃຕ້ການຕິດຕາມກວດກາຂອງ ICRG ເນື່ອງຈາກບໍ່ໄດ້ເຂົ້າຮ່ວມໃນ ອົງກອນລະດັບພູມີພາກຕາມຮູບແບບຂອງອົງການຕ້ານການຟອກເງິນສາກົນ (FSRB), ການເຜີຍແຜ່ບົດລາຍງານການປະເມີນຮອບດ້ານ (MER) ມີຄວາມຊັກຊ້າ, ຖືກສະເໜີຊື່ໂດຍຄະນະຜູ້ແທນຂອງ FATF ຫຼື FSRB, ຫຼື ມີຜົນຮັບໃນບົດລາຍງານການປະເມີນທີ່ຕ່ຳກວ່າເກນກຳນົດແບບສະເພາະເຈາະຈົງ ເຊັ່ນ: ມີຫຼາຍກວ່າຊາວລາຍການ (20+) ສຳລັບການບໍ່ເປັນໄປຕາມຂໍ້ກຳນົດ (NC) ຫຼື ເປັນໄປຕາມຂໍ້ກຳນົດໃນບາງສ່ວນ (PC), ໄດ້ຮັບຄະແນນ NC/PC ໃນຂໍ້ແນະນຳຫຼັກ (ເຊັ່ນ: R.3, R.5, R.6, R.10, R.11, R.20) ຫຼື ໄດ້ຮັບຄະນແນນປະສິດທິຜົນຕ່ຳໃນທຸກລາຍການ ສຳລັບຜົນໄດ້ຮັບທັນທີ (Immediate Outcomes).

ໃນພາກພື້ນອາຊີ-ປາຊີຟິກ, ປະເທດໃດໜຶ່ງ ຈະມີເວລາປະມານ 16 ເດືອນ ໃນການສະແດງໃຫ້ເຫັນຄວາມກ້າວໜ້າຜ່ານການລາຍງານຫຼັງການສັງເກດການ (POPR) ແລະ ຈະມີການທົບທວນໂດຍ ກຸ່ມຕ້ານການຟອກເງິນພາກພື້ນອາຊີ-ປາຊີຟິກ (APG). ຖ້າວ່າ ຍັງບໍ່ທັນມີຄວາມກ້າວໜ້າພຽງພໍ, ແຜນດຳເນີນງານ (Action Plan) ກໍ່ຈະຖືກພັດທະນາຂຶ້ນ ໂດຍກຳນົດບາດກ້າວຕ່າງໆສຳລັບໄລຍະເວລາ 2–3 ປີ ເພື່ອແກ້ໄຂຊ່ອງຫວ່າງທີ່ສຳຄັນ.

ໃນເດືອນ ກຸມພາ 2025, ສປປ ລາວ ແລະ ເນປານ ຖືກຈັດເຂົ້າໃນບັນຊີເທົາ ພາຍຫຼັງການປະເມີນ ໃນຂະນະທີ່ ຟິລິບປິນຖືກຖອນອອກຈາກບັນຊີດັ່ງກ່າວ. ສປປ ລາວ ໄດ້ສະແດງຄວາມມຸ້ງໝັ້ນທາງການເມືອງຂອງຕົນ ທີ່ຈະເຮັດວຽກຮ່ວມກັບ FATF ແລະ APG ເພື່ອເສີມຂະຫຍາຍປະສິດທິຜົນທາງດ້ານການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ນັບແຕ່ມີບົດລາຍງານການປະເມີນໃນເດືອນສິງຫາ 2023, ສປປ ລາວ ໄດ້ມີບາດກ້າວເສີມສ້າງຄວາມເຂັ້ມແຂງໃຫ້ແກ່ໜ່ວຍງານຂໍ້ມູນຂ່າວກອງທາງດ້ານການເງິນຂອງຕົນ ແລະ ກຳຈັດການອອກໃບຫຸ້ນໃຫ້ແກ່ຜູ້ຖື ໂດຍບໍ່ມີການລະບຸຊື່ (bearer shares). ສຳລັບແຜນດຳເນີນງານແມ່ນ ເນັ້ນໃສ່ ປັບປຸງການທຳຄວາມເຂົ້າໃຈຕໍ່ຄວາມສ່ຽງ, ການຄວບຄຸມພາກສ່ວນທີ່ມີຄວາມສ່ຽງສູງ (ເຊັ່ນ: ຄາຊີໂນ ແລະ ເຂດເສດຖະກິດພິເສດ), ເສີມສ້າງຄວາມສາມາດຂອງໜ່ວຍງານຂໍ້ມູນຂ່າວກອງທາງການເງິນ ແລະ ໜ່ວຍງານບັງຄັບໃຊ້ກົດໝາຍ, ເພີ່ມທະວີການດຳເນີນຄະດີການຟອກເງິນ ແລະ ການແກ້ໄຂຂໍ້ບົກຜ່ອງຕາມລາຍການຂໍ້ແນະນຳຂອງ FATF.

ສຳລັບປະເທດທີ່ຖືກຈັດຢູ່ໃນບັນຊີເທົາ ແມ່ນຕົກຢູ່ພາຍໃຕ້ການຕິດ ຕາມກວດກາທີ່ເຂັ້ມຂຸ້ນເພີ້ມຂຶ້ນ ແລະ ຕ້ອງສົ່ງລາຍງານຄວາມຄືບໜ້າຂອງການແກ້ໄຂຂໍ້ບົກຜ່ອງຢ່າງເປັນປົກະຕິ. ສປປ ລາວ ໄດ້ຖືກຄາດຫວັງໃຫ້ລາຍງານຕໍ່ກອງປະຊຸມໃຫຍ່ຂອງ FATF ໃນແຕ່ລະຄັ້ງ ໂດຍເລີ່ມຕົ້ນແຕ່ເດືອນກໍລະກົດ 2025 ເປັນຕົ້ນໄປ. ກ່ອນປະເທດໃດໜຶ່ງຈະຖືກຖອນອອກຈາກບັນຊີເທົາ ຈຳເປັນຕ້ອງຈັດຕັ້ງປະຕິບັດເກືອບສຳເລັດທັງໝົດຕາມແຜນດຳເນີນງານ ຊຶ່ງຈະມີການຢັ້ງຢືນ-ຮັບຮອງຜົນສຳເລັດໂດຍການຢ້ຽມຢາມພາກສະໜາມ.

ຖ້າວ່າ ສປປ ລາວ ຫາກບໍ່ສາມາດສະແດງຄວາມກ້າວໜ້າ ຫຼື ເຈດຕະນາທາງດ້ານການເມືອງຂອງຕົນ, ກໍ່ອາດຈະມີຄວາມສ່ຽງທີ່ຈະຖືກຈັດເຂົ້າໃນບັນຊີດຳ (blacklisted). ສຳລັບປະເທດທີ່ຖືກຈັດເຂົ້າໃນບັນຊີດຳ ໝາຍເຖິງເຂດປົກຄອງທີ່ມີຄວາມສ່ຽງສູງ ຊຶ່ງ ໃນປັດຈຸບັນມີປະເທດເກົາຫຼີເໜືອ, ອີຣານ ແລະ ມຽນມ້າ ຊຶ່ງຕ້ອງເພີ້ມທະວີການປະຕິບັດຕາມມາດຕະຖານກວດສອບທີ່ເຂັ້ມຂຸ້ນສູງຂຶ້ນ. ກໍລະນີນີ້, ຈຳເປັນຕ້ອງມີການນຳໃຊ້ມາດຕະການຕອບໂຕ້ທີ່ສຳຄັນ ເພື່ອປົກປ້ອງລະບົບການເງິນໂລກ.



ຜົນກະທົບທາງເສດຖະກິດທີ່ອາດຈະເກີດຂຶ້ນ ເນື່ອງຈາກການຖືກຈັດເຂົ້າໃນ “ບັນຊີເທົາ”



ທ່ານ ນາງ ເຊຊີເລຍ ມາຮຽນ, ຊ່ຽວຊານສະຖາບັນ ILSTA

ອົງການ FATF ອອກຖະແຫຼງການຕໍ່ສາທາລະນະໂດຍລະບຸວ່າ ບັນດາປະເທດທີ່ນອນໃນບັນຊີເທົາ ຫຼື ບັນຊີດຳ ອາດຈະນຳໄປສູ່ການໄດ້ຮັບຜົນກະທົບທາງເສດຖະກິດທີ່ຮ້າຍແຮງ. ສະຖານະພາບຂອງການຕົກຢູ່ໃນບັນຊີເທົາ ນຳໄປສູ່ການທຳລາຍພາບພົດທາງການເງິນຂອງປະເທດ, ການເພີ້ມຂຶ້ນຂອງຄ່າໃຊ້ຈ່າຍດ້ານການທະນາຄານສຳລັບພົນລະເມືອງ ແລະ ການເພີ້ມຂຶ້ນຂອງອຸປະສັກທີ່ກ່ຽວຂ້ອງກັບ ການເຮັດທຸລະກຳຂ້າມປະເທດ. ນອກຈາກນີ້, ບໍລິສັດຕ່າງປະເທດອາດຈະໂຈະ ຫຼື ໂຍກຍ້າຍຖານປະຕິບັດງານ ແລະ ການໄຫຼເຂົ້າ ຂອງການລົງທຶນ ກໍ່ຈະຫຼຸດລົງ ເນື່ອງຈາກການເພີ້ມຂຶ້ນຂອງການກວດສອບທີ່ເຂັ້ມງວດ ແລະ ຄວາມສ່ຽງກ່ຽວກັບການປະຕິບັດຕາມຂໍ້ກຳນົດ. ສ່ວນການຖືກຈັດເຂົ້າໃນບັນຊີດຳ (Blacklisting) ຫຍິ່ງສົ່ງຜົນກະທົບທີ່ຮຸນແຮງຂຶ້ນ, ສ່ວນໃຫຍ່ກໍ່ຈະແມ່ນອຸປະສັກຂັດຂວາງການລົງທຶນຈາກຕ່າງປະເທດ, ການໂອນເງິນທຶນຂອງຜູ້ໃຫ້ທຶນມີຂັ້ນຕອນທີ່ຊັບຊ້ອນຫຼາຍຂຶ້ນ ແລະ ຖືກຈຳກັດຕໍ່ການເຂົ້າເຖິງຕະຫຼາດສິນເຊື່ອລະດັບໂລກ. ນອກຈາກນີ້ ບັນດາອົງການຈັດຕັ້ງທີ່ບໍ່ແມ່ນຂອງລັດ (NGOs) ອາດຈະປະເຊີນຄວາມທ້າທາຍໃນການເຂົ້າເຖິງແຫຼ່ງທຶນ ແລະ ຄ່າໃຊ້ຈ່າຍໃນການເຮັດທຸລະກຳ ໂດຍລວມເພີ້ມຂຶ້ນ, ດັ່ງທີ່ເຫັນໄດ້ໃນຊ່ວງເວລາທີ່ ຟິລິບປິນ ຕົກຢູ່ໃນບັນຊີເທົາ, ມີແຮງງານຕ່າງຊາດຫຼາຍກວ່າ 2.3 ລ້ານຄົນ ຕ້ອງແບກຫາບຄ່າໃຊ້ຈ່າຍໃນການສົ່ງ (ໂອນ) ເງິນທີ່ເພີ້ມຂຶ້ນ.

ອີງຕາມບົດລາຍງານປີ 2021 ຂອງອົງການກອງທຶນສາກົນ (IMF), ການຖືກຈັດເຂົ້າໃນບັນຊີເທົາ ເຮັດໃຫ້ເງິນທຶນໄຫຼເຂົ້າ ໂດຍສະເລ່ຍ ແມ່ນຫຼຸດລົງເຖິງ 7.6% ຂອງຜະລິດຕະພັນມວນລວມພາຍໃນ (GDP). ໃນສະພາບເສດຖະກິດທີ່ບອບບາງ, ອາດເປັນສະນວນທີ່ນຳໄປສູ່ການສູນເສຍເງິນສຳຮອງພາຍນອກ ແລະ ອາດເກີດວິກິດການໃນດຸ່ນດ່ຽງການຊຳລະ, ເກີດຄວາມຊັກຊ້າໃນການແກ້ໄຂປັບປຸງທີ່ສຳຄັນ ແລະ ສົ່ງຜົນກະທົບຕໍ່ການພັດທະນາໃນໄລຍະຍາວ. ການທຳຄວາມເຂົ້າໃຈຕໍ່ຄວາມສ່ຽງເຫຼົ່ານີ້ ເນັ້ນຍ້ຳເຖິງຄວາມຮີບດ່ວນຂອງການແກ້ໄຂຂໍ້ບົກຜ່ອງດ້ານການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.



ການຈັດການ-ຄຸ້ມຄອງ ຂະບວນການ ແລະ ການລາຍງານຂອງຄະນະທົບທວນການຮ່ວມມືສາກົນ (ICRG) ສຳລັບ ສປປ ລາວ



ທ່ານ ນາງ ວິນຄຳ ລຸນທອນ,
ຮັກສາການຫົວໜ້າ ສຳນັກງານຂໍ້ມູນຕ້ານການຟອກເງິນ

I. ການຈັດຕັ້ງປະຕິບັດຂໍ້ກຳນົດຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML-CFT) ເພື່ອແກ້ໄຂຂໍ້ບົກຜ່ອງໃນອະດີດ

ໃນລະຫວ່າງປີ 2018 ຫາ 2022, ສປປ ລາວ ສຳເລັດການປະເມີນຄວາມສ່ຽງລະດັບຊາດ (NRA) ຄັ້ງທຳອິດຂອງຕົນ ແລະ ໄດ້ຮັບຮອງເອົາແຜນດຳເນີນງານ ເພື່ອ ດຳເນີນການແກ້ໄຂຊ່ອງຫວ່າງຕາມທີ່ຖືກລະບຸໄວ້ ໃນ ຂະນະດຽວກັນ ກໍ່ໄດ້ກະກຽມສຳລັບການປະເມີນຮອບດ້ານ (ME) ຄັ້ງທີສອງ. ການປະເມີນຮ່ວມໄດ້ຖືກຮັບຮອງເພື່ອນຳໃຊ້ໂດຍ ກຸ່ມ ຕ້ານການຟອກເງິນພາກພື້ນອາຊີ-ປາຊີຟິກ (APG) ໃນຊ່ວງທ້າຍ ປີ 2023. ໃນວັນທີ 6 ພະຈິກ 2024 ສປປ ລາວ ໄດ້ສຳເລັດ ການປະເມີນຄວາມສ່ຽງລະດັບຊາດ ຄັ້ງທີສອງຂອງຕົນ ແລະ ໄດ້ ສົ່ງບົດລາຍງານຫຼັງການສັງເກດການ ແລະ ຄຳຊີ້ແຈງການຕິດຕາມ ຜົນ ໃນວັນ 3 ມັງກອນ 2025 ກ່ຽວກັບປະສິດທິຜົນ ແລະ ນິຕິກຳ ໄປຍັງ ICRG. ໃນວັນທີ 21 ກຸມພາ 2025, ສປປ ລາວ ຖືກຈັດ ເຂົ້າໃນບັນຊີເທົ່າຂອງ ອົງການຕ້ານການຟອກເງິນສາກົນ (FATF).

ສ່ວນໜຶ່ງໃນການປັບປຸງ, 4 ນິຕິກຳສຳຄັນທີ່ກ່ຽວຂ້ອງກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໄດ້ ຖືກທົບທວນ ລວມທັງ ກົດໝາຍວ່າດ້ວຍ ການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ເລກທີ 64/ສພຊ ລົງວັນທີ 1 ກໍລະກົດ 2024) ແລະ ຂໍ້ແນະນຳການປະຕິບັດງານ. ນອກນີ້, ຍັງມີ 9 ນິຕິກຳສຳຄັນເພີ່ມຕື່ມ ກຳລັງຢູ່ໃນຂັ້ນຕອນການ ທົບທວນ ຊຶ່ງກວມເອົາຂົງເຂດວຽກງານທີ່ກ່ຽວຂ້ອງເຊັ່ນ: ການຊອກຮູ້ລູກຄ້າ/ການເພີ່ມມະວິຄວາມເອົາໃຈໃສ່ຕໍ່ລູກຄ້າ (KYC/CDD), ການຄຸ້ມຄອງ ຄາຊີໂນ, ຕ້ານການສະໜອງທຶນແກ່ການຂະຫຍາຍອາວຸດທຳລາຍລ້າງສູງ ແລະ ເກນກຳນົດການເຮັດທຸລະກຳ.

II. ການປະຕິບັດພັນທະທີ່ກຳນົດໃນບັນຊີເທົ່າຂອງອົງການຕ້ານການຟອກເງິນສາກົນ (FATF)

ເມື່ອຖືກຈັດເຂົ້າໃນບັນຊີເທົ່າ (greylisting), ສປປ ລາວ ໄດ້ສະແດງຄວາມມຸ້ງໝັ້ນທີ່ຈະເຮັດວຽກຮ່ວມກັບ FATF ແລະ APG ເພື່ອແກ້ໄຂ ຂໍ້ບົກຜ່ອງທີ່ສຳຄັນ 9 ປະການທີ່ຖືກລະບຸໄວ້ໃນບົດລາຍງານການປະເມີນຂອງຕົນ. ການປະຕິບັດພັນທະເຫຼົ່ານັ້ນ ລວມມີ ການເສີມສ້າງ ຄວາມເຂັ້ມແຂງທາງດ້ານການທຳຄວາມເຂົ້າໃຈຕໍ່ຄວາມສ່ຽງ, ເສີມຂະຫຍາຍການຄຸ້ມຄອງບັນດາຂະແໜງການທາງການເງິນ ເຊັ່ນ: ທະນາຄານ, ຄາຊີໂນ ແລະ ເຂດເສດຖະກິດພິເສດ (SEZs), ປັບປຸງຂອດການເຜີຍແຜ່ຂໍ້ມູນຂ່າວກອງ, ເພີ້ມທະວີການສືບສວນ-ສອບສວນ ແລະ ດຳເນີນຄະດີ ການຟອກເງິນ (ໂດຍສະເພາະແມ່ນກ່ຽວຂ້ອງກັບອາຊະຍາກຳຂ້າມຊາດ) ແລະ ການຮັບປະກັນຄວາມເຂັ້ມແຂງຂອງຂອບກົດໝາຍ ເພື່ອການ ຍຶດຊັບສິນ ແລະ ການລົງໂທດທາງການເງິນຕາມເປົ້າໝາຍທີ່ກຳນົດໄວ້. ເຊັ່ນດຽວກັນ, ສປປ ລາວ ຍັງ ດຳເນີນການແກ້ໄຂຂໍ້ບົກຜ່ອງໃນ ການປະຕິບັດນິຕິກຳ ພາຍໃຕ້ເຂ້ແນະນຳທີ 5, 6, 7, 10 ແລະ 11.

ສປປ ລາວ ຕ້ອງສົ່ງບົດລາຍງານຄວາມຄືບໜ້າ ສາມຄັ້ງຕໍ່ປີ ເລີ້ມຈາກປີ 2025 ເຖິງ 2027. ກຳນົດເວລາສຳລັບບົດລາຍງານສະບັບທຳອິດແມ່ນ ເດືອນກໍລະກົດ 2025, ຕິດຕາມດ້ວຍກອງປະຊຸມທົບທວນຄວາມຄືບໜ້າແບບໜ້າເຊິ່ງໜ້າ ໃນເດືອນກັນຍາ 2025.



III. ດຳເນີນງານຂອງ ສປປ ລາວ ສຳລັບປີ 2025 – 2027

ແຜນດຳເນີນງານຂອງ ສປປ ລາວ ກວມເອົາບັນດາກິດຈະກຳທີ່ກ່ຽວຂ້ອງ ໃນນັ້ນລວມມີ ການເຜີຍແຜ່ຄວາມສ່ຽງດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ການປັບປຸງທາງດ້ານການຄຸ້ມຄອງຂະແໜງການທີ່ມີຄວາມສ່ຽງສູງ, ການຮັບຮອງເອົານິຕິກຳເສີມ 12 ສະບັບ ແລະ ເສີມຂະຫຍາຍການຝຶກອົບຮົມສຳລັບນັກສືບສວນ-ສອບສວນ. ເຊັ່ນດຽວກັນ, ສຕຟງ ຈະເນັ້ນໜັກໃສ່ການວິເຄາະ ແລະ ແບ່ງປັນຂໍ້ມູນຂ່າວກອງທາງການເງິນໃຫ້ດີຂຶ້ນ.

ສປປ ລາວ ຈະດຳເນີນການເກັບກຳສະຖິຕິລະອຽດກ່ຽວກັບຄະດີຟອກເງິນ ແລະ ພັດທະນາເຄື່ອງມືທາງດ້ານກົດໝາຍ ແລະ ການປະຕິບັດການ ເພື່ອ ຕິດຕາມ, ຍຶດ ແລະ ຮິບຊັບສິນທີ່ໄດ້ຈາກການກໍ່ອາຊະຍາກຳ. ການປັບປຸງນິຕິກຳສຳຄັນເຊັ່ນ: ຍົກລະດັບ ຄຳສັ່ງເລກທີ 03/ນຍ ວ່າດ້ວຍການຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂຶ້ນເປັນດຳລັດ ແລະ ເຮັດໃຫ້ສຳເລັດຄຳສັ່ງເລກທີ 20/ນຍ ວ່າດ້ວຍການຕ້ານການສະໜອງທຶນໃຫ້ແກ່ການແຜ່ຂະຫຍາຍອາວຸດທຳລາຍລ້າງສູງ. ເຊັ່ນດຽວກັນ, ສປປ ລາວ ຈະເສີມສ້າງຄວາມເຂັ້ມແຂງທາງດ້ານການບັງຄັບໃຊ້ ມາດຕະການລົງໂທດຂອງສະຫະປະຊາຊາດ (UN sanctions) ແລະ ນຳໃຊ້ມາດຕະການລົງໂທດຢ່າງເໝາະສົມຕໍ່ກັບບັນດາຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ບໍ່ປະຕິບັດຕາມຂໍ້ກຳນົດ.

IV. ບູລິມະສິດຂອງ ສປປ ລາວ

ສປປ ລາວ ຖືສຳຄັນເປັນອັນດັບຕົ້ນໆ ຕໍ່ການປະສານງານກັບຄູ່ຮ່ວມງານສາກົນ ໃນນັ້ນລວມມີ ສະຖາບັນ ILSTA, ອົງການ UNODC, ທະນາຄານໂລກ (World Bank), ອົງການກອງທຶນສາກົນ (IMF), ທະນາຄານພັດທະນາອາຊີ (ADB), ບັນດາສະຖານທູດທີ່ສຳຄັນ ແລະ ໜ່ວຍງານຂ່າວກອງທາງດ້ານການເງິນຂອງຕ່າງປະເທດ (FIUs) ເພື່ອຮັບປະກັນໃຫ້ໄດ້ຮັບຄວາມຊ່ວຍເຫຼືອທາງວິຊາການ ຕະຫຼອດສອງປີຂອງຊ່ວງໄລຍະເວລາທີ່ປະເທດຖືກຈັດເຂົ້າໃນບັນຊີເທົາ. ລັດຖະບານມີແຜນດຳເນີນການເຜີຍແຜ່ ກົດໝາຍວ່າດ້ວຍ ການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍສະບັບປັບປຸງ ຢ່າງກວ້າງຂວາງ, ລວມທັງ ການເຜີຍແຜ່ ຜົນຂອງການປະເມີນຄວາມສ່ຽງລະດັບຊາດ (NRA) ຄັ້ງທີສອງ ແລະ ບັນດານິຕິກຳທີ່ກ່ຽວຂ້ອງ ເພື່ອຍົກສູງຄວາມເຂົ້າໃຈໃນທົ່ວປະເທດ. ນອກຈາກນີ້, ຍັງຈະດຳເນີນ ການປະເມີນຄວາມສ່ຽງດ້ານ ML/TF ຄັ້ງທີສອງ ສຳລັບຂະແໜງທີ່ບໍ່ທັນຖືກປະເມີນໃນຄັ້ງຜ່ານມາ ແລະ ຈະສືບຕໍ່ປັບປຸງບັນດານິຕິກຳສຳຄັນທີ່ກ່ຽວຂ້ອງກັບການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອປິດຊ່ອງຫວ່າງທາງກົດໝາຍ.





ເວທີເສວະນາ - ໜ່ວຍງານນຳພາວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງບັນດາປະເທດ ແລະ ບົດຮຽນທີ່ຖອດຖອນໄດ້ ໃນລະຫວ່າງຂະບວນການຂອງຄະນະທົບທວນການຮ່ວມມືສາກົນ



ຜູ້ຮ່ວມເສວະນາ:

- ທ່ານ ສັຈໄຊ ແສງເສໂຍ, ສຳນັກງານໄອຍະການສູງສຸດ, ປະເທດໄທ
- ທ່ານ ເຮັງ ໂບມາກາຣາ, ຫົວໜ້າໜ່ວຍງານຂ່າວກອງທຶງການເງິນ, ກຳປູເຈຍ
- ທ່ານ ອາໂນລດ໌ ແຟຣນຊ໌, ຮອງຫົວໜ້າ ສະພາທີ່ປຶກສາຕ້ານການຟອກເງິນ, ຟີລິບປິນ
- ທ່ານ ທິບສະຫວັນ ວົງພະນະຄອນ, ສຕຟງ, ສປປ ລາວ

ພິທີກອນ:

1. ກະລຸນາ ອະທິບາຍພາບລວມກ່ຽວກັບຊ່ວງເວລາທີ່ປະເທດຂອງທ່ານຖືກຈັດເຂົ້າໃນບັນຊີເທົາ ແລະ ການນຳພາປະເທດອອກຈາກບັນຊີດັ່ງກ່າວ.



ປະເທດໄທ ເລີ່ມຕົ້ນການລາຍງານກ່ຽວກັບການນຳໃຊ້ມາດຕະການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML-CFT) ໃນປີ 2007 ແລະ ຖືກຈັດເຂົ້າໃນບັນຊີເທົາ ໃນປີ 2009. ໃນຂະນະທີ່ການປັບປຸງທາງດ້ານຂອບກົດໝາຍກຳລັງຖືກດຳເນີນການ, ປະເທດໄທຖືກຈັດເຂົ້າໃນບັນຊີເທົາອີກຄັ້ງ ໃນປີ 2012. ເຖິງຢ່າງໃດກໍຕາມ, ພາຍຫຼັງການປັບປຸງນິຕິກຳສຳເລັດ ແລະ ປະກາດໃຊ້ໃນປີ 2013, ປະເທດໄທກໍ່ປະສົບຄວາມສຳເລັດໃນການນຳປະເທດອອກຈາກບັນຊີເທົາ ພາຍໃນປີດຽວກັນ. ຜົນສຳເລັດນີ້ ໄດ້ມາເນື່ອງຈາກແຮງຂັບເຄື່ອນຂອງການຮ່ວມມືທີ່ເຂັ້ມແຂງລະຫວ່າງບັນດາອົງການນິຕິບັນຍັດ ແລະ ອົງການຈັດຕັ້ງສາກົນ ນຳໄປສູ່ການເສີມຂະຫຍາຍຂອບການປະຕິບັດງານທາງດ້ານກົດໝາຍ ແລະ ຍຸດທະສາດການຄຸ້ມຄອງທີ່ມີປະສິດທິຜົນຫຼາຍຂຶ້ນ.

ກຳປູເຈຍ ຖືກຈັດເຂົ້າໃນບັນຊີເທົາ ໃນປີ 2011 ເນື່ອງຈາກຄວາມລົ້ມເຫຼວໃນການປະຕິບັດຂໍ້ແນະນຳຂອງອົງການ FATF ແລະ ປະສົບຜົນສຳເລັດໃນການນຳພາປະເທດອອກຈາກບັນຊີດັ່ງກ່າວໃນປີ 2015. ເຖິງແມ່ນວ່າ ມີຫຼາຍຄວາມພະຍາຍາມໄດ້ຮັບການປັບປຸງ ລວມທັງການສ້າງຕັ້ງຄະນະປະສານງານແຫ່ງຊາດ ແລະ ການປັບປຸງທາງດ້ານກົດໝາຍຫຼາຍຢ່າງ,ກຳປູເຈຍ ຍັງຖືກຈັດເຂົ້າໃນບັນຊີເທົາອີກຄັ້ງໃນປີ 2019. ແນວໃດກໍຕາມ, ຜ່ານການປະຕິຮູບທີ່ສຳຄັນ ເຊັ່ນ: ການປັບປຸງກົດໝາຍ AML-CFT ຄືນໃໝ່ ແລະ ການສ້າງຕັ້ງບັນດາອະນຸກຳມະການທີ່

ກ່ຽວຂ້ອງ, ໃນທີ່ສຸດ ກຳປູເຈຍ ກໍ່ຖືກຖອນອອກຈາກບັນຊີເທົາໃນປີ 2023. ຈຸດສຳຄັນຂອງຄວາມສຳເລັດດັ່ງກ່າວແມ່ນ ການເນັ້ນໜັກໃສ່ການຈັດຕັ້ງປະຕິບັດກົດໝາຍຢ່າງມີປະສິດທິຜົນ, ເພີ້ມທະວີການດຳເນີນຄະດີ ແລະ ເສີມສ້າງຄວາມເຂັ້ມແຂງຂອງການປະສານງານພາຍໃນ.

2. ທ່ານສາມາດແບ່ງປັນໄດ້ບໍ່ວ່າ ບໍລິບົດຂອງຮອບການລາຍງານເປັນແນວໃດແດ່ ຕົວຢ່າງ: ຂອບກຳນົດເວລາລະຫວ່າງສອງຮອບການລາຍງານເປັນແນວໃດ?

ສຳລັບ ຟີລິບປິນ, ຮອບການລາຍງານໃນຂະບວນການຂອງ ICRG ໂດຍປົກກະຕິແມ່ນກິນເວລາ 4 ເດືອນ ແຕ່ ໃນພາກປະຕິບັດຕົວຈິງ ບົດລາຍງານຈະຖືກສົ່ງຖີ່ຂຶ້ນ ເນື່ອງຈາກຄວາມຕ້ອງການ ໃນການທົບທວນເບື້ອງຕົ້ນ, ຄຳຄິດເຫັນຈາກຜູ້ປະເມີນ ແລະ ການປັບປຸງທາງດ້ານຂໍ້ມູນ-ສະຖິຕິ. ເຖິງຢ່າງໃດກໍຕາມ, ຕະຫຼອດຂະບວນການແມ່ນ ຕ້ອງມີການປະສານງານລະດັບສູງ ເນື່ອງຈາກວ່າ ບົດລາຍງານຕ້ອງກວມເອົາ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດຂໍ້ແນະນຳຂອງ FATF.

3. ຖ້າທ່ານສາມາດຄິດຫາ ສາມຄຳເວົ້າ ເພື່ອອະທິບາຍປະສົບການຂອງທ່ານໃນຊ່ວງຂະບວນການຂອງ ICRG, ຄຳເວົ້າເຫຼົ່ານັ້ນ ຈະແມ່ນຫຍັງ?

ສຳລັບ ຟີລິບປິນ, ຈາກປະສົບການແມ່ນ ຄວາມມຸ້ງໝັ້ນ, ການຮ່ວມມື ແລະ ຄວາມຄືບໜ້າ. ແທ້ຈິງແລ້ວ, ການຮ່ວມມືຕ້ອງນຳໄປສູ່ຜົນຮັບ ແລະ ຜົນຮັບຈະສະແດງໃຫ້ເຫັນວ່າ ເຮົາມີການປັບປຸງ. ນີ້ຄືວິທີ ທີ່ທ່ານກ້າວຈາກການລາຍງານທີ່ບໍ່ມີຫຍັງ ສູ່ບົດລາຍງານທີ່ດີຂຶ້ນ - ຄວາມທ້າທາຍໃນຂະບວນການກໍຄື ບົດລາຍງານຄັ້ງຕໍ່ໄປຂອງທ່ານ ຕ້ອງດີກວ່າບົດລາຍງານທີ່ຄັ້ງຜ່ານມາສະເໝີ.

ສຳລັບ ກຳປູເຈຍ, ການອອກຈາກບັນຊີເທົາ ຄືບູລິມະສິດສູງສຸດ ແລະ ມັນຕ້ອງການຄວາມມຸ້ງໝັ້ນຈາກທຸກພາກສ່ວນ ແລະ ພວກເຮົາຕ້ອງໃຫ້ຄວາມສຳຄັນຕໍ່ໝາກໄມ້ທີ່ຫ້ອຍຢູ່ຕ່ຳກ່ອນ , ເຊັ່ນດຽວກັນ ອີກປະເດັນສຳຄັນໜຶ່ງແມ່ນ ການຮ່ວມມືຂອງທຸກໆຂະແໜງການທີ່ຢູ່ພາຍໃຕ້ຂະບວນການຂອງ ICRG (ເຊັ່ນ: ໜ່ວຍງານຂໍ້ມູນຂ່າວກອງທາງການເງິນ, ໜ່ວຍງານບັງຄັບໃຊ້ກົດໝາຍ, ພາກເອກະຊົນ ແລະ ອື່ນໆ.).



4. ກະລຸນາອະທິບາຍກ່ຽວກັບການຮ່ວມມືໃນຂະບວນການນີ້ ແລະ ໃນເວລາກະກຽມບົດລາຍງານ?

ໃນປະເທດໄທ, ຄະນະກຳມາທິການ ແລະ ລັດຖະສະພາ ເຮັດວຽກຮ່ວມກັນຢ່າງໃກ້ຊິດ ຕະຫຼອດຂະບວນການສ້າງ ແລະ ຮ່າງກົດໝາຍ. ເຊັ່ນດຽວກັນ, ປະເທດໄທ ຍັງໄດ້ຮັບການສະໜັບສະໜູນຈາກ ອົງການກອງທຶນສາກົນ (IMF) ໃນຊ່ວງທີ່ປະເທດຖືກຈັດເຂົ້າໃນບັນຊີເທົາ ເປັນການຮ່ວມມືຢ່າງໃກ້ຊິດກັບຜູ້ໃຫ້ຄວາມຊ່ວຍເຫຼືອທາງວິຊາການໃນໄລຍະຍາວນີ້.

ໃນກຳປູເຈຍ, ຜູ້ທີ່ມີສ່ວນກ່ຽວຂ້ອງທັງໝົດເຮັດວຽກຮ່ວມກັນ ເພື່ອໃຫ້ບັນລຸເປົ້າໝາຍອັນດຽວກັນ ແລະ ເສີມຄວາມພະຍາຍາມໃຫ້ກັນ ແລະ ກັນ.

ໃນ ສປປ ລາວ, ບັນດາກຸ່ມປະຕິບັດງານໄດ້ຖືກສ້າງຕັ້ງຂຶ້ນ ໂດຍຈຸດປະສົງເພື່ອນຳເອົາຂະແໜງການກ່ຽວຂ້ອງມາເຮັດວຽກຮ່ວມກັນ ໂດຍຄຳນຶງວ່າ ໜ້າທີ່ນີ້ ບໍ່ສາມາດເຮັດໄດ້ພຽງລຳພັງ. ຄວາມພະຍາຍາມຮ່ວມກັນ ແລະ ການຮ່ວມມືທັງພາຍໃນ ແລະ ພາຍນອກມີຄວາມສຳຄັນຕໍ່ການບັນລຸເປົ້າໝາຍ.



5. ອະທິບາຍກ່ຽວກັບກິດຈະກຳສຳຄັນທີ່ປະເທດຂອງທ່ານໄດ້ຈັດຕັ້ງປະຕິບັດ ຊຶ່ງຊ່ວຍໃຫ້ປະເທດສາມາດຫຼຸດພົ້ນຈາກ ຂະບວນການຂອງ ICRG.

ປະເທດໄທ ຫຼຸດພົ້ນຈາກບັນຊີເທົາ ແລະ ຂະບວນການຂອງ ICRG ໄດ້ຍ້ອນການປະຕິຮູບທີ່ສຳຄັນທາງດ້ານນິຕິກຳ ແລະ ທາງດ້ານຍຸດທະສາດ. ປະເທດໄທ ຈັດຕັ້ງປະຕິບັດ ແຜນດຳເນີນງານຄຽງຄູ່ກັບຂໍ້ແນະນຳພິເສດ ຂອງ FATF ຄື: ຂໍ້ 1 ແລະ 2 ພ້ອມທັງຮັບ ຮອງການນຳໃຊ້ຍຸດທະສາດ ລະດັບຊາດ ດ້ານ AML-CFT ໂດຍການສະໜັບສະໜູນ ຂອງ IMF. ໂດຍສະເພາະແມ່ນ ຍຸດທະສາດ ໄດ້ຖືກຈັດຕັ້ງປະຕິບັດຢ່າງຄົບຖ້ວນ ຜ່ານການສ້າງແຜນຜັງ ແລະ ຂໍ້ແນະນຳທີ່ມີໂຄງສ້າງ. ໃນປັດຈຸບັນ, ປະເທດໄທ ກຳລັງດຳເນີນແຜນຍຸດທະສາດທີສີ່ ດ້ານ AML-CFT ເພື່ອຮັບປະກັນຄວາມຕໍ່ເນື່ອງຂອງການປະຕິບັດຕາມຂໍ້ກຳນົດ ແລະ ຫຼີກລ້ຽງ ການຖືກຈັດເຂົ້າໃນບັນຊີເທົາຄືນອີກ.

ກຳປູເຈຍ ມີການປະຕິຮູບທີ່ສຳຄັນທາງດ້ານກົດໝາຍ ແລະ ທາງສະຖາບັນ ນຳໄປສູ່ປະເທດຫຼຸດພົ້ນຈາກບັນຊີເທົາ. ໃນເດືອນມິຖຸນາ 2020, ໄດ້ມີການຮັບຮອງເອົາສາມກົດໝາຍຫຼັກທີ່ກ່ຽວຂ້ອງກັບ AML-CFT, ການຮ່ວມມືລະຫວ່າງປະເທດທາງອາຍາ ແລະ ຕ້ານການແຜ່ຂະຫຍາຍອາວຸດທຳລາຍລ້າງສູງ. ເຊັ່ນດຽວກັນ, ໄດ້ມີການສ້າງຕັ້ງຄະນະປະສານງານລະດັບຊາດເພື່ອຕ້ານການຟອກເງິນ (NCC) ແລະ ອະນຸກຳມະການທີ່ກ່ຽວຂ້ອງ ເພື່ອຮັບປະກັນ ການມີສ່ວນຮ່ວມຂອງທຸກຂະແໜງການ ແລະ ການຈັດຕັ້ງປະຕິບັດທີ່ມີປະສິດທິຜົນ. ນັບດາໜ່ວຍງານບັງຄັບໃຊ້ກົດໝາຍ ໄດ້ພັດທະນາ ຄູ່ມືມາດຕະຖານການປະຕິບັດງານ (SOPs), ເພີ້ມທະວີການສືບສວນ-ສອບສວນ, ການດຳເນີນຄະດີ ແລະ ການຕັດສິນລົງໂທດ.

ຟີລິບປິນ ຕີລາຄາສູງຕໍ່ຄວາມກ້າວໜ້າຂອງຕົນວ່າ ເປັນຜົນຈາກການສ້າງຕັ້ງສະພາທີ່ປຶກສາແຫ່ງຊາດ ຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (NACC) ຊຶ່ງເປັນຜູ້ເຕົ້າໂຮມຄວາມພະຍາຍາມ ແລະ ແກ້ໄຂຊ່ອງຫວ່າງຂອງການປະຕິບັດຕາມຂໍ້ກຳນົດ, ຊ່ວຍເສີມຂະຫຍາຍຄວາມສາມາດດ້ານການສືບສວນ ແລະ ປັບປຸງການຮ່ວມມືລະຫວ່າງໜ່ວຍງານ ໂດຍສະເພາະແມ່ນໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ໄອຍະການ. ກະຊວງຍຸຕິທຳ ໄດ້ອອກຄຳສັ່ງແນະນຳລະດັບຊາດ ເພື່ອຄັດກອງ ແລະ ຍື່ນຟ້ອງຄະດີຟອກເງິນ ນຳໄປສູ່ການຍື່ນຟ້ອງຄະດີ ເພີ້ມຂຶ້ນ ແລະ ມີປະສິດທິຜົນໂດຍລວມ.

6. ຂໍໃຫ້ທ່ານຊ່ວຍອະທິບາຍການປະຕິບັດງານຂອງ ສະພາທີ່ປຶກສາແຫ່ງຊາດດ້ານການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນຟີລິບປິນ?

ສະພາທີ່ປຶກສາແຫ່ງຊາດດ້ານການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (NACC) ທີ່ນຳພາໂດຍ ເລຂານຸການຜູ້ບໍລິຫານ ພາຍໃຕ້ຄຳສັ່ງຂອງປະທານາທິບໍດີ, ໂດຍການລວມເອົາບັນດາໜ່ວຍງານບັງຄັບໃຊ້ກົດໝາຍທີ່ສຳຄັນ ເພື່ອຮັບປະກັນ ການປະສານງານ ແລະ ຄວາມຮັບຜິດຊອບໃນລະດັບສູງ. ການລາຍງານຢ່າງເປັນປົກກະຕິຕໍ່ສຳນັກງານປະທານາທິບໍດີ ຊ່ວຍຂັບເຄື່ອນປະສິດທິຜົນຂອງການປະຕິບັດງານ ທັງເປັນການຊ່ວຍປັບປຸງຂອດການຮ່ວມມືລະຫວ່າງບັນດາໜ່ວຍງານບັງຄັບໃຊ້ກົດໝາຍ (LEAs) ແລະ ໄອຍະການ ກໍ່ຊ່ວຍເພີ້ມຄຸນນະພາບຂອງການດຳເນີນຄະດີ. ການສ້າງຕັ້ງ NACC ຍັງສະທ້ອນໃຫ້ເຫັນ ແນວທາງລວມຂອງລັດຖະ ບານທີ່ເນັ້ນໃສ່ການປະຕິບັດຕາມຂໍ້ກຳນົດ, ຄວາມມຸ້ງໝັ້ນ ແລະ ການຈັດຕັ້ງປະຕິບັດທີ່ມີປະສິດທິຜົນ.



7. ໃນລະຫວ່າງການປະເມີນຮອບດ້ານ (ME) ແລະ ຕໍ່ມາແມ່ນ ຂະບວນການຂອງ ICRG, ຍຸດທະສາດລະດັບຊາດໄດ້ຖືກປ່ຽນແປງຈັກເທື່ອ ໃນປະເທດຂອງທ່ານ?

ໃນຟີລິບປິນ, ຄະນະທີ່ປຶກສາແຫ່ງຊາດ (NACC) ທີ່ຖືກສ້າງຕັ້ງຂຶ້ນ ແລະ ນຳພາໂດຍເລຂານຸການຜູ້ບໍລິຫານ ໄດ້ຮັບການປັບປຸງສອງຄັ້ງ ໃນປີ 2023 ແລະ 2024, ຕາມຄຳແນະນຳຂອງປະທານາທິບໍດີ ແມ່ນ ໃຫ້ສາມາດຫຼຸດພົ້ນຈາກຂະບວນການຂອງ ICRG ພາຍໃນປີ 2024. ໃນລະ

ຫວ່າປີ 2021 ຫາ 2024, ມີພຽງ 3 ການດຳເນີນການເທົ່ານັ້ນ ທີ່ໄດ້ຮັບການແກ້ໄຂ ແຕ່ ດ້ວຍການຟື້ນຟູຂອງ NACC, ການດຳເນີນການແກ້ໄຂສາມາດເຮັດໄດ້ຢ່າງປະສົບຜົນສຳເລັດເພີ້ມອີກ 15 ລາຍການ ໃນປີ 2024.

ໃນກຳປູເຈຍ, ຈຸດເນັ້ນໜັກແມ່ນ ການຈັດຕັ້ງປະຕິບັດແຜນດຳເນີນການໂດຍສະເພາະແມ່ນລາຍການແກ້ໄຂທີ່ຖືກສະເໜີແນະໂດຍ ICRG ຄຽງຄູ່ກັບຍຸດທະສາດລະດັບຊາດ ໂດຍອີງໃສ່ຄວາມຈຳເປັນຂອງປະເທດ ຕິດຕາມດ້ວຍການຮັກສາຍຸດທະສາດເຫຼົ່ານີ້ໄວ້.

8. ປະເທດຂອງທ່ານມີການອຸທິດຊັບພະຍາກອນແນວໃດ ເພື່ອຕອບສະໜອງຕໍ່ຄວາມຕ້ອງການໃນລະຫວ່າງຂະບວນການຂອງ ICGR ເພື່ອຈັດການກັບການແບກຫາບພາລະທີ່ເພີ້ມຂຶ້ນ?

ໃນກຳປູເຈຍ, ໜ່ວຍງານຂໍ້ມູນຂ່າວກອງທຶນດ້ານການເງິນ (CAFIU) ເປັນຕົວຫຼັກໃນການປະສານງານກ່ຽວກັບກິດຈະກຳ AML-CFT ແຕ່ ກໍ່ໄດ້ອີງໃສ່ບັນດາອະນຸກຳມະການທີ່ມີຄວາມຊ່ຽວຊານສະເພາະດ້ານທີ່ແຕກຕ່າງກັນ ສຳລັບແຕ່ລະພາກຂອງແຜນດຳເນີນງານ.
ໃນປະເທດໄທ, ບໍ່ໄດ້ມີການຈັດສັນບຸກຄະລາກອນເພີ້ມຕື່ມ ໂດຍທີ່ມງານທີ່ມີຢູ່ແລ້ວຕ້ອງເຮັດວຽກໃຫ້ມີປະສິດທິຜົນຫຼາຍຂຶ້ນ. ຄະນະປະຕິບັດງານ 3 ຄະນະ ໄດ້ຖືກສ້າງຕັ້ງຂຶ້ນ ໂດຍກຳນົດລະດັບຄວາມຮັບຜິດຊອບທີ່ແຕກຕ່າງກັນ ລວມທັງຄະນະກຳມະການລະດັບສູງ ທີ່ໃຫ້ກຽດເປັນປະທານໂດຍ ນາຍົກລັດຖະມົນຕີ ແລະ ອະນຸກຳມະການໜຶ່ງຄະນະ ທີ່ເນັ້ນໜັກໃສ່ພາກປະຕິບັດໜ້າທີ່ດ້ານ AML-CFT.
ໃນຟີລິບປິນ, ຂະບວນການ ICRG ນຳໄປສູ່ການເພີ້ມຂຶ້ນຂອງພະນັກງານໃນໜ່ວຍງານຂໍ້ມູນຂ່າວກອງທຶນດ້ານການເງິນ (FIU) ເຖິງ 30% ແຕ່ ຄວາມທ້າທາຍກໍ່ຍັງຄົງຢູ່ ເນື່ອງຈາກການແບກຫາບພາລະທີ່ເພີ້ມຂຶ້ນ. ໄດ້ມີການມອບໝາຍໜ້າທີ່ໃຫ້ຫົວໜ້າຂອງແຕ່ຄະນະປະຕິບັດງານ ແລະ ວຽກງານທັງໝົດຖືກແບ່ງອອກເປັນ 11 ຂົງເຂດການປະຕິບັດງານ ແຕ່ລະຂົງເຂດຖືກຄຸ້ມຄອງໂດຍບຸກຄົນທີ່ໄດ້ຮັບການມອບໝາຍ.

9. ຄວາມສຳພັນກັບຜູ້ໃຫ້ຄວາມຊ່ວຍເຫຼືອທາງວິຊາການເປັນແນວໃດ ເພື່ອຊ່ວຍເຫຼືອແກ່ປະເທດຂອງທ່ານໃນລະຫວ່າງຂະບວນການ?

ປະເທດໄທ ໄດ້ຮັບການສະໜັບສະໜູນທາງວິຊາການຢ່າງຕໍ່ເນື່ອງຈາກ IMF ແລະ ຜູ້ຊ່ຽວຊານ ເຊັ່ນ: ທ່ານ Tom Hansen.
ກຳປູເຈຍ ເນັ້ນໜັກຄວາມຊ່ວຍເຫຼືອໃສ່ການພັດທະນາຂອບກົດໝາຍ ໃຫ້ສອດຄ່ອງກັບມາດຕະຖານຂອງ FATF, ສ້າງຄວາມສາມາດທາງດ້ານຊັບພະຍາ ກອນມະນຸດ, ການປະເມີນຄວາມສ່ຽງລະດັບຊາດ (NRA) ແລະ ກຳນົດຍຸດທະສາດລະດັບຊາດ.
ຟີລິບປິນ ສະເໜີໃຫ້ສະໜັບສະໜູນທາງວິຊາການຕາມຄວາມຕ້ອງການທີ່ຈຳເພາະເຈາະຈົງ. ໄດ້ຮັບຄວາມຊ່ວຍເຫຼືອຈາກທະນາຄານໂລກ ໃນການຮ່າງບົດ NRA, ຜູ້ຊ່ຽວ ຊານທີ່ມີປະສົບການໃນຂະບວນການຂອງ FATF ແລະ ການຂຽນບົດລາຍງານ ແລະ ຈາກກະຊວງຍຸຕິທຳຂອງ ສະຫະລັດອາເມຣິກາ ສຳລັບການຝຶກອົບຮົມໜ່ວຍງານບັງຄັບໃຊ້ ກົດໝາຍ ພ້ອມທັງການຊ່ວຍເຫຼືອທາງວິຊາການ ອື່ນໆ.
ສປປ ລາວ ເນັ້ນຍ້ຳວ່າ ການຈັດຕັ້ງປະຕິບັດວຽກງານ AML-CFT ບໍ່ ສາມາດດຳເນີນການໄດ້ໂດຍປະເທດພຽງລຳພັງ, ຂໍສະແດງຄວາມ ຂອບໃຈຕໍ່ສະຖາບັນ ILSTA ແລະ ຜູ້ໃຫ້ທຶນສາກົນອື່ນໆ ສຳລັບການ ສະໜັບສະໜູນຊ່ວຍເຫຼືອທາງດ້ານກົດໝາຍ, ທາງດ້ານວິຊາການ ແລະ ທາງດ້ານຍຸດທະສາດ.



10. ໃນເວລາກະກຽມບົດລາຍງານສຳລັບຄະນະກຳມະການຮ່ວມ (Joint Group), ຜູ້ໃຫ້ທຶນຂອງທ່ານ ໄດ້ສະເໜີໃຫ້ການສະໜັບສະໜູນບໍ່? ແລະ ທ່ານໄດ້ຂໍຄວາມຊ່ວຍເຫຼືອທາງວິຊາການຈາກຄະນະກຳມະການຮ່ວມບໍ່?

ໃນຟີລິບປິນ, ທີມງານຊ່ຽວຊານທີ່ມີປະສົບການອັນຍາວນານກ່ຽວກັບ FATF ແລະ ຂະບວນການ ICRG ໄດ້ໃຫ້ຄວາມຊ່ວຍເຫຼືອທີ່ມີຄ່າ ແລະ ຄຳແນະນຳຕໍ່ ຜູ້ທີ່ມີສ່ວນກ່ຽວຂ້ອງກັບ AML/CFT ໃນລະຫວ່າງ ສິບ (10) ຮອບການລາຍງານ ລວມທັງ ການຮ່າງບົດລາຍງານ ຄວາມຄືບໜ້າ ແລະ ຂໍ້ສະເໜີແນະສຳລັບ ການເກັບກຳຂໍ້ມູນທີ່ຈຳເປັນ. ເຊັ່ນດຽວກັນ, ຟີລິບປິນ ຍັງໄດ້ຮັບການສະໜັບສະໜູນຈາກ ຊ່ຽວຊານໃນການຈັດເຫດການ “ຈຳລອງ” ເພື່ອຊ່ວຍໃນການກະກຽມສຳລັບ ການປະຊຸມແບບ “ໜ້າເຊິ່ງໜ້າ” ກັບຄະນະກຳມະການຮ່ວມ ຂອງ ICRG ເພື່ອເປັນການກວດສອບເນື້ອໃນຂອງບົດລາຍງານຄວາມຄືບໜ້າ ກ່ອນທີ່ບົດລາຍງານ ແລະ ຄຳແນະນຳທີ່ກ່ຽວຂ້ອງຈະຖືກ ຮັບຮອງຂັ້ນສຸດທ້າຍໂດຍ FATF.
ຄ້າຍຄືກັນ, ໃນກຳປູເຈຍແມ່ນ ອີງໃສ່ທີມງານຊ່ຽວຊານທີ່ມີປະສົບການກ່ຽວກັບ FATF ເປັນຜູ້ສະໜອງຄຳແນະນຳ - ໂດຍລວມແລ້ວ ແມ່ນຄືກັບແນວທາງປະຕິບັດທີ່ປະເທດ ຟີລິບປິນ.

11. ທ່ານຈະອະທິບາຍແນວໃດຕໍ່ກັບ ສິ່ງທີ່ເປັນອຸປະສັກ ຫຼື ທ້າທ້າຍທີ່ສຸດ ໃນຂະບວນການຂອງ ICRG?

ໃນປະເທດໄທ, ການລາຍງານຕໍ່ຜູ້ນຳທາງການເມືອງ ແລະ ສາທາລະນະຊົນ ລ້ວນແຕ່ມີຄວາມທ້າທາຍ ໂດຍສະເພາະແມ່ນການອະທິບາຍ ບັນຫາທີ່ສະລັບສັບຊ້ອນກ່ຽວກັບ FATF ໃນຮູບແບບທີ່ສາມາດເຂົ້າໃຈໄດ້.

ກຳປູເຈຍ ເນັ້ນຍ້ຳເຖິງການສະແດງຄວາມຮັບຜິດຊອບຮ່ວມກັນຂອງບັນດາໜ່ວຍງານທີ່ມີສ່ວນກ່ຽວຂ້ອງທີ່ຫຼາກຫຼາຍ ໂດຍສະເພາະແມ່ນ ໃນການເກັບກຳຂໍ້ມູນ ແລະ ເຮັດໃຫ້ທັນຕາມກຳນົດເວລາຂອງ ICRG.
ຟີລິບປິນປະເຊີນກັບຄວາມທ້າທາຍໃນການລາຍງານ ໂດຍສະເພາະໃນເວລາທີ່ມີເລື່ອງຕ້ອງລາຍງານບໍ່ຫຼາຍ ໃນຂະນະທີ່ຂະບວນການຂອງຄະນະກຳມະການຮ່ວມ ໄດ້ມີການຂະຫຍາຍຂອບເຂດຂອງແຜນດຳເນີນງານຕົ້ນສະບັບອອກໄປ.
ສປປ ລາວ ກໍ່ປະເຊີນກັບຄວາມທ້າທາຍເຊັ່ນກັນ ໂດຍສະເພາະແມ່ນ ການເກັບກຳ ແລະ ແປຂໍ້ມູນຈາກຫຼາຍໜ່ວຍງານ, ອຸປະສັກທາງດ້ານພາສາ ຍັງເພີ່ມຄວາມສັບຊ້ອນໃນຂັ້ນຕອນການປະມວນຂໍ້ມູນຈາກພາສາລາວເປັນພາສາອັງກິດໃຫ້ແກ່ FATF ແລະ APG. ສປປ ລາວ ໄດ້ອີງໃສ່ຄວາມຊ່ວຍເຫຼືອຈາກທີມຊ່ຽວຊານຂອງສະຖາບັນ ILSTA ເພື່ອຊ່ວຍໃນການຮ່າງບົດລາຍງານຄວາມຄືບໜ້າໃຫ້ແກ່ ICRG ຊຶ່ງ ຄ້າຍຄືກັບແນວທາງທີ່ຖືກດຳເນີນການໃນ ຟີລິບປິນ ແລະ ກຳປູເຈຍ ທີ່ ການສະໜັບສະໜູນຂອງຜູ້ຊ່ຽວຊານແມ່ນມີສ່ວນສຳຄັນຕໍ່ຄວາມພະຍາຍາມໃຫ້ປະເທດຫຼຸດພົ້ນອອກຈາກຂະບວນການຕິດ ຕາມກວດສອບຂອງ ICRG ຢ່າງສຳເລັດຜົນ.

12. ພາຍຫຼັງຫຼຸດພົ້ນອອກຈາກຂະບວນການ ICRG, ທ່ານສັງເກດເຫັນຄວາມແຕກຕ່າງຫຍັງແດ່ໃນຂອບການປະຕິບັດງານດ້ານ AML-CFT ຂອງທ່ານ?

ປະເທດໄທ ໄດ້ຮັບຜົນປະໂຫຍດຈາກການສ້າງພື້ນຖານອັນແຂງແກ່ນ ໂດຍການຊ່ວຍເຫຼືອທາງວິຊາການຂອງ IMF ໃນນັ້ນລວມທັງ ການສ້າງກົດໝາຍ, ຄູ່ມືມາດຕະຖານການປະຕິບັດງານ (SOPs) ສຳລັບການຄຸ້ມຄອງ ແລະ ການປະຕິບັດງານຂອງໜ່ວຍງານຂໍ້ມູນຂ່າວກອງທາງດ້ານການເງິນ (FIU) ທີ່ຊ່ວຍຮັບປະກັນ ຄວາມຕໍ່ເນື່ອງຂອງການປະຕິບັດຕາມມາດຕະຖານສາກົນ. ເຊັ່ນດຽວກັນ, ປະເທດໄທ ໄດ້ມີການເພີ່ມຈຳນວນພະນັກງານຕ້ານການຟອກເງິນຂຶ້ນຈາກ 550 ເປັນ 800 ຄົນ ນຳໄປສູ່ການໄດ້ຮັບຄວາມເຊື່ອໝັ້ນຈາກລັດຖະບານ ຜ່ານປະສິດທິພາບການປະຕິບັດງານທີ່ສະແດງອອກ.
ກຳປູເຈຍໄດ້ມີການປັບປຸງລະບົບຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML-CFT) ຢ່າງມີຄວາມໝາຍສຳຄັນ ພ້ອມທັງຂອບປະຕິບັດງານທາງດ້ານກົດໝາຍທີ່ຄອບຄຸມຫຼາຍຂຶ້ນ ແລະ ມີຄວາມເຂົ້າໃຈທີ່ດີຂຶ້ນຂອງທຸກພາກສ່ວນ ທີ່ມີສ່ວນກ່ຽວຂ້ອງກັບ ຄວາມສຳຄັນຂອງວຽກງານນີ້.
ຟີລິບປິນໄດ້ເພີ່ມຄວາມຮັບຮູ້ທົ່ວທຸກໜ່ວຍງານກ່ຽວກັບບັນຫາທາງດ້ານ ການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML-CFT), ນຳໄປສູ່ການປັບໂຄງສ້າງຄືນໃໝ່ ແລະ ການມີຄວາມມຸ້ງໝັ້ນຮ່ວມກັນ ເພື່ອຫຼີກລ້ຽງການຖືກຈັດເຂົ້າໃນບັນຊີເທົາອີກຄັ້ງ ໃນຂະນະດຽວກັນ ກໍ່ກຳລັງເຮັດວຽກທາງດ້ານ ການປະເມີນຄວາມສ່ຽງລະດັບຊາດ (NRA) ແລະ ນິຕິກຳທີ່ກ່ຽວຂ້ອງ ເພື່ອກຽມຮອງຮັບການປະເມີນຮອບດ້ານ (Mutual Evaluation) ຄັ້ງຕໍ່ໄປ ທີ່ຈະມີຂຶ້ນໃນປີ 2027.

13. ກຳນົດເວລາລາຍງານການປະເມີນຮອບດ້ານ (MER) ຄັ້ງຕໍ່ໄປຂອງປະເທດທ່ານແມ່ນປີໃດ?

ປະເທດໄທ : ປີ 2028
ກຳປູເຈຍ : ປີ 2027
ຟີລິບປິນ : ປີ 2028
ສປປ ລາວ : ປີ 2030

14. ສິ່ງທີ່ກົດດັນທີ່ສຸດໃນຂະບວນການຂອງ ICGR ແມ່ນຫຍັງ?



ກຳປູເຈຍເນັ້ນຍ້ຳເຖິງຄວາມສຳຄັນຂອງຄວາມສອດຄ່ອງ ເພື່ອຮັບປະກັນວ່າ ທຸກໆບ່ອນມີຜົນຮັບອັນດຽວກັນ.
ສຳລັບຟີລິບປິນ, ຂະບວນການຮ່າງ ແລະ ສົ່ງບົດລາຍງານມີຄວາມທ້າທາຍ ເນື່ອງຈາກວ່າ ໃນບາງຄັ້ງຄາວ ຂໍ້ມູນຍັງບໍ່ທັນພ້ອມໃນທັນທີທັນໃດ ຊຶ່ງບົດລາຍງານຈຳເປັນຕ້ອງຖືກຂຽນຄືນໃໝ່.

ສະຫຼຸບ

ທ່ານ Tom Hansen ໄດ້ກ່າວເນັ້ນຍ້ຳເຖິງຄວາມກົດດັນທີ່ເກີດຂຶ້ນໃນລະຫວ່າງຂະບວນການຂອງ FATF, ຄວາມຄືບໜ້າຂອງການແກ້ໄຂ ບໍ່ພຽງແຕ່ຈະຕ້ອງຖືກລາຍງານຕໍ່ FATF ເທົ່ານັ້ນ ແຕ່ ຍັງຕ້ອງລາຍງານຕໍ່ເຈົ້າໜ້າທີ່ຂັ້ນສູງຂອງລັດຖະບານ ແລະ ສື່ມວນຊົນ ນຳອີກ. ສິ່ງເຫຼົ່ານີ້ສ້າງຄວາມກົດດັນຢ່າງໜັກໜ່ວງຕໍ່ບັນດາໜ່ວຍງານທີ່ກ່ຽວຂ້ອງ ໂດຍສະເພາະແມ່ນ ໜ່ວຍງານຂໍ້ມູນຂ່າວກອງທາງການເງິນ (FIUs) ຊຶ່ງເປັນຜູ້ຮັບຜິດຊອບສຳລັບການປະສານງານກ່ຽວກັບການລາຍງານ. ເພີ່ມຍັງໄດ້ ເນັ້ນໜັກເຖິງຄວາມສຳຄັນຂອງການເຮັດວຽກເປັນທີມ ເນື່ອງຈາກວ່າ ຜົນຮັບໃນທາງບວກ ສາມາດປັບປຸງປະສິດທິພາບຂອງການປະຕິບັດງານ, ປ້ອງກັນອາຊະຍາກຳ ແລະ ສົ່ງສັນຍານທີ່ຊັດເຈນວ່າ ອາຊະຍາກອນຕ້ອງຖືກຈັບໄດ້. ຍົກຕົວຢ່າງ, ປະເທດໄທ ທີ່ຜ່ານມາແມ່ນ ຈຳເປັນຕ້ອງດຳເນີນການແກ້ໄຂຂໍ້ແນະນຳເຖິງ 143 ລາຍການ.

ຄວາມສຳຄັນຂອງການຮ່ວມມືລະຫວ່າງປະເທດທາງອາຍາ ເພື່ອ ການຕ້ານການຟອກເງິນ ແລະ ການສະໜອງ ທຶນໃຫ່ແກ່ການກໍ່ການຮ້າຍທີ່ມີປະສິດທິຜົນ



ທ່ານ ຈຸມພົນ ພັນສຳຣິດ,
ຮອງຫົວໜ້າໄອຍະການສູງສຸດ ແຫ່ງປະທດໄທ

ໃນຊຸມປີຜ່ານມາ, ປະເທດໄທ ສັງເກດເຫັນວ່າ ມີການເພີ້ມຂຶ້ນຢ່າງຈະແຈ້ງຕໍ່ກັບ ຄຳຮ້ອງຂໍ ການຮ່ວມມືລະຫວ່າງປະເທດທາງອາຍາ (MLA) ໃນນີ້ແມ່ນລວມມີ ການຂໍຄວາມຮ່ວມມື ດ້ານການຍຶດຊັບ ແລະ ການຮ່ວມມືແບບເປັນທາງການ ແລະ ແບບບໍ່ເປັນທາງການ. ມາດຕາ 27 ຂອງສົນທິສັນຍາສະຫະປະຊາຊາດວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດ ທີ່ມີການຈັດຕັ້ງ (UNTOC) ໄດ້ເນັ້ນໃສ່ການຮ່ວມມືລະຫວ່າງປະເທດແບບບໍ່ເປັນທາງການ ຜ່ານ “ການຮ່ວມມືລະຫວ່າງເຈົ້າໜ້າທີ່ຕຳຫຼວດ” ໂດຍທົ່ວໄປແມ່ນ ຜ່ານບົດບັນທຶກ ຄວາມເຂົ້າໃຈທີ່ບໍ່ມີການຜູກມັດ (non-binding MoUs). ໃນທາງກົງກັນຂ້າມ, ການຮ່ວມ ມືທາງອາຍາລະຫວ່າງປະເທດຢ່າງເປັນທາງການ ຕ້ອງອີງໃສ່ MLA ຊຶ່ງຄອບຄຸມໂດຍ ສົນທິສັນຍາ ແລະ ອານຸສັນຍາທີ່ກ່ຽວຂ້ອງ.

ໃນຊຸມປີຜ່ານມາ, ປະເທດໄທ ສັງເກດເຫັນວ່າ ມີການເພີ້ມຂຶ້ນຢ່າງຈະແຈ້ງຕໍ່ກັບ ຄຳຮ້ອງຂໍ ການຮ່ວມມືລະຫວ່າງປະເທດທາງອາຍາ (MLA) ໃນນີ້ແມ່ນລວມມີ ການຂໍຄວາມຮ່ວມມື ດ້ານການຍຶດຊັບ ແລະ ການຮ່ວມມືແບບເປັນທາງການ ແລະ ແບບບໍ່ເປັນທາງການ. ມາດຕາ 27 ຂອງສົນທິສັນຍາສະຫະປະຊາຊາດວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດ ທີ່ມີການຈັດຕັ້ງ (UNTOC) ໄດ້ເນັ້ນໃສ່ການຮ່ວມມືລະຫວ່າງປະເທດແບບບໍ່ເປັນທາງການ ຜ່ານ “ການຮ່ວມມືລະຫວ່າງເຈົ້າໜ້າທີ່ຕຳຫຼວດ” ໂດຍທົ່ວໄປແມ່ນ ຜ່ານບົດບັນທຶກ ຄວາມເຂົ້າໃຈທີ່ບໍ່ມີການຜູກມັດ (non-binding MoUs). ໃນທາງກົງກັນຂ້າມ, ການຮ່ວມ ມືທາງອາຍາລະຫວ່າງປະເທດຢ່າງເປັນທາງການ ຕ້ອງອີງໃສ່ MLA ຊຶ່ງຄອບຄຸມໂດຍ ສົນທິສັນຍາ ແລະ ອານຸສັນຍາທີ່ກ່ຽວຂ້ອງ.

ໃນການຮິບຊັບ ໂດຍສະເພາະ ໃນກໍລະນີທີ່ມີສ່ວນຮ່ວມຂອງໜ່ວຍງານຂໍ້ມູນຂ່າວກອງ ທາງການເງິນ (FIUs), ການປະສານງານເບື້ອງຕົ້ນມີຄວາມສຳຄັນຫຼາຍ. ເມື່ອມີຄຳຮ້ອງຂໍ ການຮ່ວມມືລະຫວ່າງປະເທດທາງອາຍາ, ຫຼັກຖານທີ່ກ່ຽວຂ້ອງກໍ່ສາມາດມາດຖືກແບ່ງປັນ ໄດ້. ຕົວຢ່າງ: ໃນຄະດີທີ່ປະເທດເຢຍລະມັນ ຊຶ່ງກ່ຽວຂ້ອງກັບຊັບສິນທີ່ເກາະອາດານຳ (Adanam Island), ສຳນັກງານປາບປາມ ແລະ ປ້ອງກັນການຟອກເງິນ (ປປງ) ຂອງໄທ ຈຳເປັນຕ້ອງໄດ້ກວດສອບຊັບສິນກ່ອນທີ່ຈະມີການດຳເນີນການ.
ປະເທດໄທ ເລີ່ມປະກາດນຳໃຊ້ກົດໝາຍວ່າດ້ວຍການຮິບຊັບສິນ ໃນປີ 1992 ແລະ ມີການປັບປຸງ ໃນປີ 2016 ໂດຍກຳນົດໃຫ້ມີການຮິບຊັບຕາມ ມູນຄ່າ ຊຶ່ງອະນຸຍາດໃຫ້ຍຶດຊັບສິນຕາມມູນຄ່າທຽບເທົ່າຈຳນວນລາຍໄດ້ຈາກອາຊະຍາກຳ ເຖິງວ່າຈະຜ່ານການສືບທອດມໍລະດົກກໍ່ຕາມ. ບາງປະເທດ ມີການກູ້ຄືນ ແລະ ສົ່ງຊັບສິນພາຍໃຕ້ສົນທິສັນຍາສອງຝ່າຍ ໃນຂະນະທີ່ປະເທດອື່ນໆ ອີງໃສ່ການເຈລະຈາ ແລະ ການຕຸ້ມການສະເພາະໜ້າ.
ການອາຍັດຊັບສິນ (ມາດຕາ 23 ຂອງກົດໝາຍວ່າດ້ວຍການຮິບຊັບສິນ) ຕ້ອງດຳເນີນການກ່ອນການຍຶດ ແລະ ຕ້ອງມີຄຳສັ່ງຂອງຜູ້ສືບສວນ-ສອບສວນ. ການຮິບຊັບສິນ (ມາດຕາ 34 ຂອງກົດໝາຍວ່າດ້ວຍການຮິບຊັບສິນ) ຕ້ອງມີຄຳຕັດສິນຂັ້ນສຸດທ້າຍຂອງສານຈາກປະເທດທີ່ຮ້ອງຂໍ ແລະ ຕ້ອງສອດຄ່ອງ ກັບມາດຕະຖານທາງກົດໝາຍຂອງປະເທດໄທ ເພື່ອໝັ້ນໃຈວ່າ ມີການພິຈາລະນາຕັດສິນຄະດີ ຢ່າງເປັນທຳ.
ການແບ່ງປັນຊັບສິນ ຈຳເປັນຕ້ອງມີຂໍ້ຕົກລົງລະຫວ່າງປະເທດ ແລະ ຖືກຮັບຮອງໃນລະດັບລັດຖະມົນຕີ. ປະເທດໄທມີຂໍ້ຕົກລົງສອງຝ່າຍກັບປະເທດ ສະວິດເຊີແລນ ສ່ວນກັບປະເທດອື່ນໆແມ່ນ ຕ້ອງມີການເຈລະນຳກັນ. ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ ເຊັ່ນ: ການແປພາສາ ແລະ ການຂາຍຊັບສິນ ຕ້ອງຖືກ ຫັກອອກ ກ່ອນການແບ່ງປັນ.

ພາຍໃຕ້ສົນທິສັນຍາຮ່ວມມືລະຫວ່າງປະເທດທາງອາຍາຂອງອາຊຽນ (ASEAN MLAT), ລະບຽບການ-ຂັ້ນຕອນການ ຍຶດຊັບສິນໄດ້ຖືກກຳນົດໄວ້ ແຕ່ ບໍ່ໄດ້ລວມເອົາ ການຮິບຊັບສິນຕາມມູນຄ່າຂອງເຫັນປະໂຫຍດຈາກອາຊະຍາກຳ. ສປປ ລາວ ຍັງບໍ່ທັນມີ ນິຕິກຳກ່ຽວກັບ ຫຼັກການຕ່າງຝ່າຍຕ່າງ ຕອບແທນທາງກົດໝາຍ (legal reciprocity) ຈຳເປັນຕ້ອງໄດ້ມີການເຈລະຈາເປັນແຕ່ລະກໍລະນີໄປ.
ທ່ານ ຈຸມພົນ ຍັງໄດ້ນຳສະເໜີຄະດີຕົວຢ່າງທີ່ພົ້ນເດັ່ນຈຳນວນໜຶ່ງຕໍ່ທີ່ປະຊຸມ. ທຳອິດແມ່ນ ຄະດີຕະຫຼາດມືດອອນລາຍ (AlphaBay case) ຊຶ່ງມີການ ຍຶດຊັບສິນ ແລະ ສະກຸນເງິນດິຈິຕອລ ມູນຄ່າລວມເຖິງ $50 ລ້ານໂດລາ. ການຮ່ວມມືທາງອາຍາລະຫວ່າງ ອາເມຣິກາ ແລະ ໄທ ນຳໄປສູ່ການເຂົ້າ ເຖິງໂຕຜູ້ເປັນເຈົ້າຂອງ AlphaBay, ນັ້ນຄື ອາເລັກຊັນເດີ ຄາເຊສ (Alexander Cazes) ຊຶ່ງຖືກຈັບກຸມໃນປີ 2017 ແລະ ສານໄທ ອະນຸມັດການຍຶດ ຊັບສິນ ໃນປີ 2022. ຕົວຢ່າງຄະດີທີສອງ, ພາຍຫຼັງການຕັດສິນຄວາມຜິດຖານຟອກເງິນໃນປີ 2016, ເງິນຈຳນວນ $2 ລ້ານໂດລາຖືກສົ່ງຄືນໃຫ້ ປະເທດໄທ ໃນປີ 2024 ເຖິງແມ່ນວ່າ ໄທ ແລະ ສະວິດເຊີແລນ ບໍ່ທັນມີສົນທິສັນຍາສອງຝ່າຍກໍຕາມ. ສຸດທ້າຍ ຄະດີຂອງ ຣາເກຊ ສັກເສນາ (Saxena Case) ຊຶ່ງມີຄວາມກ່ຽວພັນກັບເກາະ Guernsey, ໄດ້ມີການຮິບຊັບສິນມູນຄ່າ $7ລ້ານໂດລາ ໃນປີ 2023 ທີ່ປະເທດໄທ ແລະ ການດຳເນີນ ຄະດີຍັງຄົງສືບຕໍ່ ພາຍຫຼັງການເສຍຊີວິດຂອງ ສັກເສນາ ໃນປີ 2012.

ຂໍ້ສະເໜີແນະທີ່ສຳຄັນແມ່ນ ສົ່ງເສີມໃຫ້ມີການປຶກສາຫາລືຕັ້ງແຕ່ຂັ້ນເລີ້ມຕົ້ນ, ນຳໃຊ້ຊ່ອງທາງການຕິດຕໍ່ສື່ສານແບບບໍ່ເປັນທາງການ ແລະ ເສີມສ້າງ ຄວາມເຂັ້ມແຂງຂອງເຄືອຂ່າຍລະດັບພາກພື້ນເຊັ່ນ: ເຄືອຂ່າຍຄວາມຮ່ວມມືທາງຍຸຕິທຳ ພາກພື້ນອາຊີຕາເວັນອອກສຽງໃຕ້ (SEAJust) ແລະ ອົງການ ໄອຍະການອາຊຽນ (ASEAN Prosecutor Body) ທີ່ກຳລັງຈະຖືກສ້າງຕັ້ງຂຶ້ນ ເພື່ອຕໍ່ສູ້ກັບອາຊະຍາກຳຂ້າມຊາດ.



ການນຳສະເໜີ : ມື້ທີ 2, 26 ມີນາ 2025

ແຜນດຳເນີນງານ ລາຍການ ທີ 6.1 a) b) c) d) ຂໍ້ມູນຂ່າວກອງທາງການເງິນ ແລະ ແຜນດຳເນີນງານ ລາຍການ 7.1 / 7.2 ການບັງຄັບໃຊ້ກົດໝາຍ ແລະ ການດຳເນີນຄະດີກ່ຽວກັບການຟອກເງິນ



ທ່ານ Tom Hansen, ຊ່ຽວຊານ ILSTA

ເພື່ອບັນລຸໄດ້ແຜນດຳເນີນງານຂອງອົງການ FATF, ສປປ ລາວ ຕ້ອງໃຫ້ບູລິມະສິດກັບຜົນໄດ້ຮັບທັນທີ ຂໍ້ 6 (IO.6), ເຊິ່ງເນັ້ນໃສ່ການນຳໃຊ້ຂໍ້ມູນຂ່າວກອງທາງການເງິນຢ່າງມີປະສິດທິພາບ ເພື່ອຕ້ານການຟອກເງິນ ໂດຍສະເພາະໃນຂົງເຂດ ທີ່ມີຄວາມສ່ຽງສູງ ເຊັ່ນ: ການຄ້າຂາຍຢາເສບຕິດ, ການຄ້າມະນຸດ ແລະ ອາຊະຍາກຳທາງສິ່ງແວດລ້ອມ.

ບັນດາອົງການທີ່ກ່ຽວຂ້ອງ ລວມເຖິງບັນດາໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ກວດກາ ຈະຕ້ອງບໍ່ພຽງແຕ່ໄດ້ຮັບຂໍ້ມູນຂ່າວກອງຈາກ FIU ແລະ AMLIOs ແຕ່ຕ້ອງສະໜອງຄຳຄິດຄຳເຫັນ ເພື່ອສະແດງໃຫ້ເຫັນປະສິດທິພາບ ຫຼາຍກ່ວາການປະຕິບັດຕາມລະບຽບທາງດ້ານວິຊາການພຽງຢ່າງດຽວ.

AMLIO ຕ້ອງປັບປຸງຄຸນນະພາບ, ປະລິມານ ແລະ ຄວາມທັນການຂອງຂໍ້ມູນຂ່າວກອງ ທີ່ໄດ້ແບ່ງປັນໃຫ້ກັບໜ່ວຍງານບັງຄັບໃຊ້ກົດໝາຍ ເພື່ອຮັບປະກັນວ່າ ລາຍງານແມ່ນສາມາດນຳໄປປະຕິບັດໄດ້ຢ່າງແທ້ຈິງ. ໜ່ວຍງານບັງຄັບໃຊ້ກົດໝາຍ ຄວນໃຫ້ AMLIO ມີສ່ວນຮ່ວມໃນການສືບສວນ-ສອບສວນແຕ່ຫົວທີ ແລະ ໃຫ້ຄຳຄິດຄຳເຫັນຕໍ່ຜົນໄດ້ຮັບ ເຊັ່ນ: ການຈັບກຸມ, ການຍຶດຊັບ ຫຼື ການດຳເນີນຄະດີ. ການສືບສວນ-ສອບສວນແບບຄູ່ຂະໜານຕໍ່ບັນດາອາຊະຍາກຳ ທີ່ເປັນຄວາມຜິດຕົ້ນ ແລະ ການຟອກເງິນ ຕ້ອງໄດ້ມີການການເກັບກຳບັນທຶກເປັນກໍລະນີສຶກສາ ແລະ ໜ່ວຍງານດັ່ງກ່າວ ຄວນແບ່ງປັນຂໍ້ມູນທຸລະກຳ ທີ່ໜ້າສົງໄສ ແລະ ການດຳເນີນຄະດີໃຫ້ກັບ AMLIO ຊາບ ຢ່າງໜ້ອຍປີລະສາມຄັ້ງ ເພື່ອສະໜັບສະໜູນການລາຍງານລະດັບຊາດ.

ຄວນມີຂັ້ນຕອນການໃຫ້ຄຳຄິດຄຳເຫັນຢ່າງເປັນທາງການ ໂດຍມີການແຕ່ງຕັ້ງເຈົ້າໜ້າທີ່ໃນໜ່ວຍງານບັງຄັບໃຊ້ກົດໝາຍ ຮັບຜິດຊອບວຽກງານນີ້ສະເພາະ ເພື່ອປະເມີນການນຳໃຊ້ຂໍ້ມູນຂ່າວກອງຂອງ AMLIO. ນອກຈາກນີ້, AMLIO ຕ້ອງເພີ່ມການເຜີຍແຜ່ຂໍ້ມູນຂ່າວກອງແບບສະໝັກໃຈ, ອອກລາຍງານຂໍ້ມູນຂ່າວກອງຍຸດທະສາດ (SIRs) ເພື່ອຊີ້ໃຫ້ເຫັນຮູບແບບ ML ຢ່າງກ້ວາງຂວາງ. ບັນດາຫົວໜ່ວຍທີ່ມີໜ້າທີ່ລາຍງານ ເຊັ່ນ: ທະນາຄານ ແລະ ກາຊີໂນ ຕ້ອງໄດ້ຮັບການຝຶກອົບຮົມ ແລະ ມີຄູ່ມືທີ່ລະອຽດຊັດເຈນ ເພື່ອປັບປຸງປະສິດທິພາບຂອງການລາຍງານ STRs.

ການຈັດສັນຊັບພະຍາກອນ ຄວນເນັ້ນໃສ່ຂະແໜງການ ທີ່ມີຄວາມສ່ຽງສູງ ໂດຍອີງໃສ່ຂໍ້ມູນທີ່ໄດ້ຮັບ. ສຸດທ້າຍ, ການຮ່ວມມືສາກົນ ແມ່ນເປັນສິ່ງສຳຄັນຍິ່ງ ໂດຍ AMLIO ແລະ ໜ່ວຍງານບັງຄັບໃຊ້ກົດໝາຍ ຈະນຳໃຊ້ຄຳຮ້ອງຂໍ FIU ລະຫວ່າງປະເທດ ໃນເວລາເງິນ ທີ່ໄດ້ຈາກການກ່ຳອາຊະຍາກຳ ໄດ້ຖືກເຄື່ອນຍ້າຍອອກນອກປະເທດ.

ສະຫຼຸບແລ້ວ, ການບັນລຸ IO.6 ຕ້ອງອາໃສການປະສານງານລະດັບຊາດ ທີ່ອົງການຕ່າງໆນຳໃຊ້ຂໍ້ມູນຂ່າວກອງທາງການເງິນຢ່າງມີປະສິດທິພາບ, ບັນທຶກຜົນຮັບ ແລະ ສະໜັບສະໜູນກົນໄກການລາຍງານ ທີ່ເຂັ້ມແຂງ. ສປປ ລາວ ສາມາດສະແດງໃຫ້ເຫັນລະບົບ AML-CFT ທີ່ໃຊ້ງານໄດ້ຈິງ ແລະ ມີປະສິດທິພາບ ໄດ້ກໍຕໍ່ເມື່ອມີຫຼັກຖານຜົນກະທົບ ທີ່ເຫັນໄດ້ຢ່າງຊັດເຈນ.





ທ່ານ Alastair Bland, ຊ່ຽວຊານ ILSTA

ຜົນໄດ້ຮັບທັນທີ ຂໍ້ 7 (IO. 7) ເນັ້ນໃສ່ການສືບສວນ-ສອບສວນ ແລະ ການດຳເນີນຄະດີກ່ຽວກັບຄວາມຜິດຖານຟອກເງິນ, ຮັບປະກັນວ່າ ມາດຕະການລົງໂທດແມ່ນມີປະສິດທິພາບ, ສົມສ່ວນ ແລະ ເປັນທີ່ເຄັດຫລາບ. ສປປ ລາວ ຍັງມີຄວາມຄືບໜ້າ ພາຍຫຼັງໄດ້ນຳສົ່ງບົດລາຍງານ ຫຼັງຈາກຊ່ວງສັງເກດການປີ 2024 ເນື່ອງຈາກຍັງມີຊ່ອງວ່າງທີ່ສຳຄັນ ພາຍໃຕ້ແຜນດຳເນີນງານຂອງ FATF.

ສະນັ້ນ, ເພື່ອສະແດງໃຫ້ເຫັນປະສິດທິພາບ, ສປປ ລາວ ຕ້ອງເພີ່ມການ ສືບສວນ-ສອບສວນ ແລະ ການດຳເນີນຄະດີ ML, ໂດຍສະເພາະທີ່ ຕິດພັນກັບອາຊະຍາກຳທີ່ມີຄວາມສ່ຽງສູງ ເຊັ່ນ: ການຄ້າຂາຍຢາເສບຕິດ, ການຄ້າມະນຸດ, ການສໍ້ລາດບັງຫຼວງ ແລະ ຄວາມຜິດຖານສິ່ງແວດລ້ອມ ເຊິ່ງຕ້ອງອາໃສການຮ່ວມມືລະຫວ່າງປະເທດ.

ນອກຈາກນີ້, ອົງການ FATF ຍັງຄາດຫວັງໃຫ້ມີຫຼັກຖານ ທີ່ຊັດເຈນ ເຊິ່ງໃຫ້ຂໍ້ມູນລາຍລະອຽດກ່ຽວກັບບັນດາອົງການ ທີ່ເປັນຜູ້ພາຫາງໃນ ການດຳເນີນຄະດີ ML ແລະ ສໍ້ລາດບັງຫຼວງ, ຈຳນວນຄະດີ ທີ່ຕິດພັນກັບ ອາຊະຍາກຳທີ່ມີຄວາມສ່ຽງສູງ, ຈຳນວນຄະດີ ທີ່ນຳໄປສູ່ການສືບສວນ-ສອບສວນທາງການເງິນແບບຄູ່ຂະໜານ, ການດຳເນີນຄະດີ, ຫຼື ການຕັດສິນຄະດີ ແລະ ເຫດຜົນເບື້ອງຫຼັງ ທີ່ຈຳກັດຄວາມຄືບໜ້າຂອງ ການດຳເນີນຄະດີ (ຕ.ຢ. ຂາດການຝຶກອົບຮົມ ຫຼື ການຈັດລຽງບູລິມະ ສິດ). ສະນັ້ນ, ການຕິດຕາມຕົວຊີ້ວັດເຫຼົ່ານີ້ຢ່າງເປັນປະຈຳ ບໍ່ວ່າຈະເປັນ ລາຍເດືອນ ຫຼື ໄຕມາດ ໂດຍມີການລວບລວມຂໍ້ມູນຢ່າງຕໍ່ເນື່ອງຈົນເຖິງປີ 2030 ຈຶ່ງເປັນສິ່ງສຳຄັນ.

ການນຳໃຊ້ຂໍ້ມູນຂ່າວກອງທາງການເງິນຢ່າງມີປະສິດພາບ (FI) ແມ່ນສິ່ງສຳຄັນ. ອົງການ LEAs ຄວນຮ້ອງຂໍ ແລະ ໃຫ້ຄຳຄິດຄຳເຫັນ ຕໍ່ຂ່າວກອງທາງການເງິນຂອງ AMLIO ເພື່ອປັບປຸງຄຸນນະພາບ ແລະ ຜົນກະທົບ. ໃນສ່ວນຂອງໂຄງການຝຶກອົບຮົມ ຄວນເນັ້ນໃສ່ບັນດາ ອົງການ ທີ່ມີສິດອຳນາດທາງກົດໝາຍໃນການສືບສວນ-ສອບສວນ ແລະ ດຳເນີນຄະດີ ແລະ ຄວນເຊື່ອມໂຍງກັບຜົນໄດ້ຮັບ ທີ່ສາມາດ ວັດແທກໄດ້.

ການສືບສວນ-ສອບສວນທາງການເງິນແບບຄູ່ຂະໜານ ຕ.ຢ., ການຕິດຕາມຜົນໄດ້ຮັບຈາກການກ່ໍອາຊະຍາກຳໃນຄະດີຢາເສບຕິດ ຫຼື ການສໍ້ລາດບັງຫຼວງ ຄວນຖືເປັນເລື່ອງປົກກະຕິ ແລະ ໄດ້ຮັບການສະໜັບສະໜູນຈາກຂໍ້ມູນ ແລະ ກໍລະນີສຶກສາ.

ທັງຄະດີຟອກເງິນແບບລຳພັງ ແລະ ຄະດີ ຟອກເງິນ ທີ່ມີການເຊື່ອມໂຍງ ທັງສອງແມ່ນມີຄວາມສຳຄັນຍິ່ງ. ສຳລັບຂໍ້ກ່າວຫາກ່ຽວກັບການ ຟອກເງິນ, ຕ້ອງສະແດງໃຫ້ເຫັນໄດ້ຢ່າງຊັດເຈນແຫຼ່ງທີ່ມາຂອງອາຊະຍາກຳ ແລະ ເງິນທຶນ.

ສຸດທ້າຍແລ້ວ, ຄວາມສຳເລັດຂອງ IO. 7ຂຶ້ນກັບການປະສານງານລະດັບຊາດ. AMLIO ອາດເປັນຜູ້ພາຫາງໃນການລາຍງານ, ແຕ່ອົງການ LEAs ຕ້ອງສະໜອງຂໍ້ມູນ ແລະ ຜົນຂອງການດຳເນີນຄະດີ. ມີແຕ່ຜ່ານການຮ່ວມມື, ການມີຫຼັກຖານ ແລະ ຜົນກະທົບ ເທົ່ານັ້ນ ສປປ ລາວ ຈຶ່ງຈະສາມາດບັນລຸໄດ້ສິ່ງຄາດຫວັງຕ່າງໆຂອງອົງການ FATF.



4.1 ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທາງດ້ານ AML-CFT ແລະ ແຜນງານຕ່າງໆສຳລັບສະຖາບັນທີ່ບໍ່ນອນໃນຂະແໜງການເງິນ

ໃນວັນທີ 21 ກຸມພາ 2025, FATF ໄດ້ອອກຖະແຫຼງການສາທາລະນະ ຮັບຮອງຄຳໝັ້ນສັນຍາທາງການເມືອງອັນເຂັ້ມແຂງຂອງ ສປປ ລາວ ໃນ ການແກ້ໄຂບັນຫາການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ ແກ່ການກໍ່ການຮ້າຍ. ເຖິງແມ່ນວ່າ ຈະມີການປະຕິບັດຕາມມາດຕະຖານ ທາງດ້ານວິຊາການ, ແຕ່ປັດຈຸບັນແມ່ນໄດ້ເນັ້ນໃສ່ ປະສິດທິພາບ ທີ່ ສາມາດພິສູດໃຫ້ເຫັນໄດ້, ໂດຍສະເພາະຄວາມເຂົ້າໃຈ ແລະ ການຕອບ ໂຕ້ຕໍ່ກັບຄວາມສ່ຽງດ້ານການຟອກເງິນ, ການສະ ໜອງທຶນໃຫ້ແກ່ການກໍ່ ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການແຜ່ຂະຫຍາຍອາວຸດ ທຳລາຍລ້າງສູງ.

ສປປ ລາວ ໄດ້ໃຫ້ຄຳໝັ້ນສັນຍາ ທີ່ຈະເພີ່ມທະວີຄວາມເອົາໃຈໃສ່ ແລະ ເຂົ້າໃຈຕໍ່ຄວາມສ່ຽງເຫຼົ່ານີ້ ແລະ ປັບປຸງການຄຸ້ມຄອງຕາມຄວາມສ່ຽງ ໂດຍສະເພາະໃນຂະແໜງການກາຊີໂນ, ທະນາຄານ, ແລະ ຫົວໜ່ວຍ ທີ່ມີໜ້າທີ່ລາຍງານໃນເຂດເສດຖະກິດພິເສດ (SEZs). ແນວຄິດເລື່ອງ “ຄວາມສ່ຽງ” ເປັນຫົວໃຈສຳຄັນຂອງຂໍ້ກັງວົນຂອງອົງການ FATF ພາຍໃຕ້ຜົນໄດ້ຮັບທັນທີ ຂໍ້ 1. ເຖິງແມ່ນວ່າ ຈະມີຄວາມຄືບໜ້າແລ້ວ ກໍ່ຕາມ ແຕ່ອົງການ FATF ຄາດຫວັງວ່າ ຈະມີຫຼັກຖານ ທີ່ຊັດເຈນຍິ່ງຂຶ້ນ ກ່ຽວກັບຄວາມເຂົ້າໃຈແບບລົງເລິກ.



ທ່ານ Ian Matthews, ຊ່ຽວຊານ ILSTA

ບົດລາຍງານ MER ໃນປີ 2022 ເຫັນວ່າ ບໍ່ແມ່ນອາຊະຍາກຳ ທີ່ເປັນຄວາມຜິດຕົ້ນທັງໝົດໄດ້ຖືກປະເມີນ, ແລະ ການປະເມີນຄວາມສ່ຽງ ທາງດ້ານ TF ແມ່ນຍັງບໍ່ທັນໄດ້ດີເທົ່າທີ່ຄວນ ໂດຍສະເພາະໃນບໍລິບົດລະດັບພູມມີພາກ. ຂອບເຂດຊາຍແດນຂອງ ສປປ ລາວ ກໍ່ໃຫ້ເກີດ ຄວາມກັງວົນກ່ຽວກັບບົດບາດ ໃນຖານະເປັນປະເທດທາງຜ່ານສຳລັບການສະໜອງທຶນ ທີ່ຜິດກົດໝາຍ. ກາຊີໂນ ໄດ້ຖືກເນັ້ນໜັກເປັນ ຂົງເຂດທີ່ມີຄວາມອ່ອນໄຫວຫຼັກ ໂດຍ NRA ບໍ່ສາມາດປະເມີນໄດ້ຢ່າງຖືກຕ້ອງ. DNFBPs ເຊັ່ນ: ຂະແໜງອະສັງຫິມະຊັບ, ຂະແໜງ ກົດໝາຍ ກໍ່ຍັງຖືກຮຽກຮ້ອງໃຫ້ມີການປະເມີນຄວາມສ່ຽງທີ່ດີຂຶ້ນ. ຊ່ອງວ່າງອື່ນໆ ຄື ການເຂົ້າໃຈຕໍ່ອາຊະຍາກຳຂ້າມຊາດ, ການລົງທຶນ ຂອງຕ່າງປະເທດ, ແລະ ບັນດານິຕິບຸກຄົນ. FATF ເນັ້ນຍ້ຳເຖິງຄວາມຈຳເປັນໃນການນຳໃຊ້ແຫຼ່ງຂໍ້ມູນຢ່າງກ້ວາງຂວາງ ຈາກໜ່ວຍງານ ບັງຄັບໃຊ້ກົດໝາຍ ລວມທັງລາຍງານສາກົນຕ່າງໆ ເພື່ອປະກອບເປັນຂໍ້ມູນການປະເມີນຄວາມສ່ຽງ.

ດ້ວຍເຫດນີ້, ຈຶ່ງຄາດວ່າ ຈະມີການປະເມີນຄວາມສ່ຽງສະເພາະເປັນແຕ່ລະຂະແໜງການຢ່າງລະອຽດຍິ່ງຂຶ້ນ ໂດຍໜ່ວຍງານທີ່ກ່ຽວຂ້ອງ ທຸກພາກສ່ວນຈະເຂົ້າມາມີສ່ວນຮ່ວມຢ່າງກ້ວາງຂວາງຫຼາຍຂຶ້ນ ແທນທີ່ຈະອາໃສພຽງແຕ່ AMLIO ທຳນັ້ນ ໂດຍສະເພາະໜ່ວຍງານບັງຄັບ ໃຊ້ກົດໝາຍ ຄາດວ່າຈະມີສ່ວນຮ່ວມຢ່າງຕັ້ງໜ້າ ດ້ວຍການດຳເນີນການສືບສວນ-ສອບສວນ ເພື່ອເພີ່ມທະວີຄວາມເຂົ້າໃຈຕໍ່ກັບຄວາມສ່ຽງ ໃນລະດັບປະເທດ. ຄຽງຄູ່ກັນນັ້ນ, ຂະແໜງການເອກະຊົນ ກໍ່ມີບົດບາດສຳຄັນໃນການເຮັດວຽກນີ້. ເຖິງແມ່ນວ່າ ການແບ່ງປັນຂໍ້ມູນ ກ່ຽວກັບຄວາມສ່ຽງອາດມີຄວາມລະອຽດອ່ອນກໍ່ຕາມ, ແຕ່ການເຮັດແບບນີ້ຈະຊ່ວຍໃຫ້ມີການເປີດເຜີຍຮູບແບບ ແລະ ຄວາມອ່ອນໄຫວ ທີ່ສຳຄັນ ຕໍ່ກັບການບໍລິຫານຄວາມສ່ຽງຢ່າງມີປະສິດທິຜົນ. ເພື່ອຮອງຮັບການແບ່ງປັນຂໍ້ມູນ ທີ່ມີຄວາມລະອຽດອ່ອນ, ຫຼາຍປະເທດ ຈຶ່ງ ມັກມີທາງເລືອກໃນການເຜີຍແຜ່ລາຍງານຊຸດຕ່າງໆໃຫ້ກັບຜູ້ຮັບຂໍ້ມູນທີ່ແຕກຕ່າງກັນ.

ສຸດທ້າຍແລ້ວ, ອົງການ FATF ກຳລັງຊອກຫາແນວທາງ ທີ່ຫຼາຍກ່ວາການປະຕິບັດຕາມລະບຽບທາງດ້ານວິຊາການຈາກ ສປປ ລາວ. ປະເທດລາວ ຕ້ອງສະແດງໃຫ້ເຫັນການດຳເນີນງານຕ່າງໆ ບໍ່ພຽງແຕ່ສອດຄ່ອງກັບກັບຂໍ້ກຳນົດ ໃຫ່ານັ້ນ ແຕ່ຍັງຕ້ອງມີຂໍ້ມູນຄົບຖ້ວນ, ມີເປົ້າໝາຍ, ແລະ ສະແດງໃຫ້ເຫັນໄດ້ເຖິງປະສິດທິຜົນຢ່າງຊັດເຈນ ໂດຍຕັ້ງຢູ່ບົນພື້ນຖານຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບຄວາມສ່ຽງ ສະເພາະຂອງຕົນ.



ແຜນການດຳເນີນງານ 8.1 ແລະ 8.2 ການຍຶດຊັບສິນ ແລະ ການດຳເນີນຄະດີ, ການລັກລອບຂົນເງິນຕາ ລະຫວ່າງປະເທດ ແລະ ການຮ່ວມມືສາກົນ



ທ່ານ Tom Hansen, ຊ່ຽວຊານ ILSTA

ຜົນໄດ້ຮັບທັນທີ ຂໍ້ 7 ແລະ ຂໍ້ 8 ແມ່ນມີຄວາມສຳຄັນຍິ່ງຕໍ່ການປະເມີນລະບົບ AML-CFT ຂອງ ສປປ ລາວ. ໃນຂະນະທີ IO. 7 ເນັ້ນໃສ່ການສືບສວນ-ສອບສວນ ແລະ ການດຳເນີນຄະດີກ່ຽວກັບຄວາມຜິດຖານຟອກເງິນ, IO. 8 ປະເມີນການຍຶດ ແລະ ຮິບຊັບສິນທີ່ໄດ້ຈາກການກໍ່ອາຊະຍາກຳ. ເຖິງແມ່ນວ່າ ຕາມທີ່ໄດ້ຍົກໃຫ້ເຫັນໃນບົດລາຍງານຫຼັງຈາກຊ່ວງສັງເກດການ ປີ 2024 ການດຳເນີນການດັ່ງກ່າວ ແມ່ນມີຄວາມຄືບໜ້າແດ່ແລ້ວກໍ່ຕາມ ແຕ່ກໍຍັງມີຊ່ອງວ່າງສຳຄັນຫຼາຍຢ່າງຢູ່.

ຕົວຢ່າງ : ສປປ ລາວ ຕ້ອງກຳນົດຢ່າງຊັດເຈນວ່າ ການສືບສວນ-ສອບສວນ ແລະ ການດຳເນີນຄະດີຟອກເງິນ ເລີ່ມຕົ້ນເມື່ອໃດ ແລະ ຮັບປະກັນວ່າ ມີການສືບສວນ-ສອບສວນແບບຄູ່ຂະໜານ ສຳລັບອາຊະຍາກຳທີ່ມີຄວາມສ່ຽງສູງ ເຊັ່ນ: ການສໍ້ລາດບັງຫຼວງ, ການຄ້າຂາຍຢາເສບຕິດ ແລະ ຄວາມຜິດຖານສິ່ງແວດລ້ອມ.

ເພື່ອບັນລຸໄດ້ວັດຖຸປະສົງຂອງ IO. 7, ສປປ ລາວ ຄວນກຳນົດ ແລະ ຕິດຕາມການສືບສວນ-ສອບສວນ ແລະ ການດຳເນີນຄະດີຟອກເງິນ ເຊັ່ນດຽວກັນກັບການໃຫ້ບູລິມະສິດຕໍ່ປະເພດອາຊະຍາກຳທີ່ມີຄວາມສ່ຽງສູງ. AMLIO ຄວນນຳໃຊ້ຂ່າວກອງຢ່າງມີປະສິດທິພາບ ແລະ ຮັບປະກັນວ່າ ມີການໃຫ້ຄຳຄິດຄຳເຫັນຢ່າງເປັນປະຈຳຈາກອົງການ LEAs. ສຸດທ້າຍ, ຂໍ້ມູນທີ່ກ່ຽວຂ້ອງຄວນຖືກເກັບກຳ ແລະ ວິເຄາະຢ່າງເປັນປະຈຳ.

ການສືບສວນ-ສອບສວນແບບຄູ່ຂະໜານຕ້ອງໄດ້ຖືກບັນທຶກ ເຖິງແມ່ນວ່າ ຈະບໍ່ມີການດຳເນີນຄະດີກໍ່ຕາມ ເພາະຖືວ່າ ເປັນຕົວຊີ້ບອກທີ່ສຳຄັນຂອງປະສິດທິຜົນ.

ພາຍໃຕ້ IO. 8, ສປປ ລາວ ຈຳເປັນຕ້ອງນຳຍຸດທະສາດການຍຶດຊັບສິນແຫ່ງຊາດມາໃຊ້, ສ້າງຄວາມເຂັ້ມແຂງໃຫ້ກັບການຮ່ວມລະຫວ່າງປະເທດ, ແລະ ປັບປຸງການຕິດຕາມ ແລະ ຄຸ້ມຄອງຊັບສິນ. ເງິນທຶນທີ່ຖືກຍຶດ ຄວນຖືກເກັບຮັກສາໄວ້ ແລະ ນຳເອົາມາໃຊ້ເປັນຈຸດປະມານໃນການດຳເນີນວຽກງານ AML-CFT.

ບູລິມະສິດທີ່ສຳຄັນ ເຊັ່ນ: ການຝຶກອົບຮົມໃຫ້ກັບອົງການຕ່າງໆທີ່ກ່ຽວຂ້ອງ, ການເພີ່ມທະວີການແບ່ງປັນຂໍ້ມູນຂ່າວກອງ, ເຄື່ອງມືດ້ານກົດໝາຍ ເຊັ່ນ: ຂໍ້ກຳນົດທາງດ້ານການຫລົບຫລີກການເສຍອາກອນ, ການປັບປຸງການຕິດຕາມຊັບສິນ ທີ່ຖືກຍຶດ ແລະ ກໍລະນີສຶກສາທີ່ມີຜົນຮັບລະຫວ່າງປະເທດ.

ການປະສານງານລະດັບຊາດ, ການປັບປຸງກົດໝາຍ, ແລະ ການລົງທຶນໃສ່ຊັບພະຍາກອນ ແມ່ນເປັນສິ່ງສຳຄັນຍິ່ງ. ຖ້າປາດສະຈາກການດຳເນີນການຢ່າງຮີບດ່ວນແລ້ວ, ສປປ ລາວ ອາດມີຄວາມສ່ຽງຕົກຢູ່ໃນບັນຊີດຳຂອງອົງການ FATF.



ແຜນການດຳເນີນງານ 11.2 ການຄຸ້ມຄອງ FI's ແລະ DNFBPs ເພື່ອປະຕິບັດຕາມພັນທະທາງດ້ານ TFS PF



ທ່ານ Ian Matthews, ຊ່ຽວຊານ ILSTA

ຖະແຫຼງການສາທາລະນະຂອງອົງການ FATF ເມື່ອເດືອນກຸມພາ 2025 ໄດ້ເນັ້ນຍ້ຳ ເຫັນໄດ້ຮັບທັນທີ ຂໍ້ 3 ແລະ 4, ເນັ້ນໃສ່ການສ້າງຄວາມເຂັ້ມແຂງໃຫ້ກັບອົງການ ຄຸ້ມຄອງຕາມຄວາມສ່ຽງຕໍ່ຂະແໜງການກາຊີໂນ, ທະນາຄານ ແລະ ຫ້ວໜ່ວຍທີ່ມີ ໜ້າທີ່ລາຍງານ (REs) ຢູ່ໃນ SEZs, ຄ່ຽງຄູ່ກັບການປັບປຸງການກວດກາແບບພໍດີ ແລະ ເໝາະສົມ.

IO. 3 ມຸ້ງເປົ້າໄປທີ່ບັນດາຜູ້ຄຸ້ມຄອງດູແລສະຖາບັນການເງິນ ແລະ DNFBPs ເພື່ອຮັບປະກັນວ່າ ເຂົາເຈົ້າມີການຕິດຕາມຄວາມສ່ຽງຢ່າງມີປະສິດທິພາບ ລວມທັງ ຂະແໜງການໃໝ່ ເຊັ່ນ: ຜູ້ໃຫ້ບໍລິການຊັບສິນສະເໝືອນຈິງ (VASPs) ເຊິ່ງຕ້ອງໄດ້ ປະຕິບັດຕາມພັນທາງດ້ານ AML-CFT ຕາມລະດັບຄວາມສ່ຽງ. ຢ່າງໃດກໍ່ຕາມ, ຖ້າ ປາດສະຈາກຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ກັບຄວາມສ່ຽງຂອງການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍແລ້ວ (ຕາມທີ່ໄດ້ເນັ້ນຍ້ຳໃນ IO. 1), ການ ທີ່ຈະບັນລຸ IO. 3 ແລະ IO. 4 ກໍ່ຈະມີອຸປະສັກທີ່ສຳຄັນ. ບົດລາຍງານ MER ສະແດງ ໃຫ້ເຫັນວ່າ ບາງຄັ້ງປະເທດຕ່າງໆ ກຳນົດໃຫ້ບາງຂະແໜງການມີຄວາມສ່ຽງຕ່ຳ ໂດຍ ບໍ່ໄດ້ໃຫ້ເຫດຜົນທີ່ໜ້າເຊື່ອຖື ຜ່ານການປະເມີນຄວາມສ່ຽງແບບຮອບດ້ານ.

ຂະນະທີ IO. 3 ເນັ້ນໃສ່ການຄຸ້ມຄອງ, IO. 4 ເວົ້າເຖິງຫ້ວໜ່ວຍທີ່ມີໜ້າທີ່ລາຍງານ (REs), ຮຽກຮ້ອງໃຫ້ເຂົ້າເຈົ້າຕ້ອງນຳໃຊ້ມາດຕະການຕ່າງໆ ເຊັ່ນ: KYC, CDD, ແລະ ການເກັບບັນທຶກຂໍ້ມູນເອກະສານ. ໃນ ສປປ ລາວ ການລົງເຜີຍແຜ່ຕໍ່ REs ຍັງມີຄວາມຈຳກັດ, ຕາມທີ່ໄດ້ລະບຸໄວ້ໃນບົດ MER, ເຮັດໃຫ້ການຮັບຮູ້ກ່ຽວກັບພັນທະຂອງເຂົາເຈົ້າຕໍ່ກັບອົງການ AML-CFT ແລະ ຄວາມສ່ຽງ ຍັງຕ່ຳ.

ເຖິງແມ່ນວ່າ ອົງປະກອບກ່ຽວກັບການຄຸ້ມຄອງຕາມຄວາມສ່ຽງໃນປະເທດ ມີຢູ່ແດ່ແລ້ວກໍ່ຕາມ ແຕ່ກໍ່ຍັງມີຊ່ອງວ່າງ ທີ່ສຳຄັນຫຼາຍຢ່າງ. ຍົກຕົວຢ່າງ, ໃນ SEZs ມີການຕິດກວດກາຢ່າງຈຳກັດ, ແລະ ກາຊີໂນ ກໍ່ມີການປ່ຽນຜູ້ຄຸ້ມຄອງຈາກ AMLIO ໄປເປັນຜູ້ຄຸ້ມຄອງລາຍ ໃໝ່. ການກວດກາແບບພໍດີ ແລະ ເໝາະສົມ ທີ່ນຳໃຊ້ເພື່ອກວດສອບບຸກຄົນ ທີ່ຄວບຄຸມຂະແໜງການເງິນ ຈຳເປັນຕ້ອງໄດ້ດຳເນີນຢ່າງ ເຂັ້ມແຂງ ລວມທັງການກວດກາການປ່ຽນແປງກຳມະສິດ ແລະ ການຄວບຄຸມ.

ບັນຫາກ່ຽວກັບປະຕິບັດຕາມທາງດ້ານວິຊາການ ຍັງເປັນອຸປະສັກໃນການຈັດຕັ້ງປະຕິບັດ IO. 4. ສະຖາບັນຕ່າງໆ ບໍ່ສາມາດປະຕິບັດ ມາດຕະການປ້ອງກັນໄດ້ຢ່າງຖືກຕ້ອງ ຫາກຂາດກົດໝາຍ ແລະ ຄູ່ມື. ສະຖາບັນຫຼາຍແຫ່ງ ຂາດຄວາມຮັບຮູ້ຢ່າງເລິກເຊິ່ງຕໍ່ກັບຄວາມສ່ຽງ ທາງດ້ານ ML/TF, ໂດຍສະເພາະ ລະຫວ່າງການສຳພາດການປະເມີນຜົນ ເຫັນວ່າ ກາຊີໂນຫຼາຍແຫ່ງ ສະແດງໃຫ້ເຫັນຄວາມຮັບຮູ້ ທີ່ ຍັງຕ່ຳຕໍ່ວຽກງານດັ່ງກ່າວ.
ທຸລະກຳທີ່ໜ້າສົງໄສ (STRs) ເປັນໜຶ່ງຂໍ້ກັງວົນ ທີ່ໄດ້ຍົກຂຶ້ນໃນບົດລາຍງານ MER ໂດຍສະເພາະຈຳນວນການສົ່ງລາຍງານຈາກ DNFBPs ທີ່ຍັງຕ່ຳ. ສິ່ງນີ້ເປັນບັນຫາພື້ນຖານ ທີ່ຜູ້ປະເມີນມັກປະສົບພົບພໍ້ ປະເທດຕ່າງໆມີການລາຍງານໜ້ອຍກວ່າທີ່ຄາດຫວັງ. ຄ້າຍຄືກັນ, ເຖິງແມ່ນວ່າ ໄດ້ມີການລົງໂທດໃນ ສປປ ລາວ, ແຕ່ຈຳນວນການລົງໂທດ ທີ່ຍັງມີຢ່າງຈຳກັດນັ້ນ ກໍ່ໃຫ້ເກີດມີຄຳຖາມກ່ຽວກັບ ປະສິດທິຜົນ ແລະ ຄຸນຄ່າຂອງການຍັບຍັ້ງບໍ່ໃຫ້ເກີດສິ່ງນີ້.

ເພື່ອປັບປຸງແກ້ໄຂ, ຕາມບົດລາຍງານ MER ໄດ້ແນະນຳໃຫ້ ສປປ ລາວ ເຂັ້ມງວດການກວດແບບພໍດີ ແລະ ເໝາະສົມ, ສ້າງຄວາມເຂັ້ມແຂງ ໃຫ້ກັບອົງການຄຸ້ມຄອງໃນຂົງເຂດທີ່ມີຄວາມສ່ຽງສູງ (ເຊັ່ນ: ທະນາຄານ ແລະ ກາຊີໂນ), ແລະ ຂະຫຍາຍການຕິດຕາມກວດກາໄປຍັງ SEZs. ການລົງເຜີຍແຜ່ ແລະ ການຝຶກອົບຮົມ ຄວນສ້າງຄວາມເຂົ້າໃຈ ທັງຕໍ່ໜ້າທີ່ຂອງເຂົ້າເຈົ້າຕາມກົດໝາຍ ແລະ ຄວາມສ່ຽງຕົວຈິງ. ສຸດທ້າຍ, ການລົງໂທດທາງວິໄນ ຕ້ອງຖືການນຳມາໃຊ້ຢ່າງເປັນຍຸດທະສາດ, ບໍ່ແມ່ນພຽງແຕ່ຈະລົງໂທດຢ່າງດຽວ ແຕ່ຕ້ອງສະແດງໃຫ້ເຫັນ ໄດ້ເຖິງຄວາມສາມາດໃນການບັງຄັບໃຊ້ກົດໝາຍນຳອີກ.



ແຜນການດຳເນີນງານ ທີ 1.1: ການລະບຸຄວາມສ່ຽງກ່ຽວກັບ AML-CFT

ຜົນໄດ້ຮັບທັນທີ ຂໍ້ 11



ທ່ານ ນາງ Cecilia Marian, ຊ່ຽວຊານ ILSTA

ຜົນໄດ້ຮັບທັນທີ ຂໍ້ 11 ຂອງອົງການ FATF (IO. 11) ເນັ້ນໃສ່ ການລົງໂທດທາງການເງິນຕໍ່ເປົ້າໝາຍ ເພື່ອປ້ອງກັນການແຜ່ຂະຫຍາຍ ອາ ວຸດທຳລາຍລ້າງສູງ (PF). ເປົ້າໝາຍເພື່ອຢຸດຕິບຸກຄົນ ແລະ ສະຖາບັນ ທີ່ກ່ຽວຂ້ອງກັບການສະໜອງທຶນໃຫ້ແກ່ການແຜ່ຂະຫຍາຍ PF ຈາກການເຂົ້າເຖິງ, ການເຄື່ອນຍ້າຍ, ຫຼື ການນຳໃຊ້ຊັບສິນ ຕາມທີ່ ກຳນົດໄວ້ໃນມະຕິຂອງສະພາຄວາມໝັ້ນຄົງສະຫະປະຊາຊາດ.

ໃນ ສປປ ລາວ, MER ໄດ້ມີການລະບຸຊ່ອງຫວ່າງຫຼາຍຢ່າງໃນການຈັດຕັ້ງ ປະຕິບັດ IO. 11. ມີການເນັ້ນໃຫ້ເຫັນວ່າ, ເຖິງແມ່ນວ່າ AMLIO ຈະຖືກ ເບິ່ງວ່າ ເປັນໜ່ວຍງານທີ່ຮັບຜິດຊອບ, ແຕ່ພາລະບົດບາດຍັງບໍ່ໄດ້ຖືກ ກຳນົດໄວ້ຢ່າງຊັດເຈນໃນກົດໝາຍ. ນອກຈາກນັ້ນ, ການຄຸ້ມຄອງ ແລະ ການບັງຄັບໃຊ້ກົດໝາຍ ແມ່ນຂ້ອນຂ້າງອ່ອນແອ, ຂາດຄູ່ມືສຳລັບ ສະຖາບັນການເງິນ ແລະ DNFBPs, ແລະ ການລົງໂທດສຳລັບການບໍ່ ປະຕິບັດຕາມແມ່ນຍັງມີໜ້ອຍ. ສະຖາບັນຂະໜາດນ້ອຍຍັງສະແດງໃຫ້ ເຫັນຄວາມເຂົ້າໃຈ ທີ່ມີຢູ່ຢ່າງຈຳກັດຕໍ່ກັບພັນທະຂອງເຂົາເຈົ້າ, ແລະ ມີການລົງເຜີຍແຜ່ ຫຼື ຝຶກອົບຮົມຂ້ອນຂ້າງໜ້ອຍ ໃນການແກ້ໄຂບັນຫານີ້.

ນອກຈາກຊ່ອງຫວ່າງເຫຼົ່ານີ້ແລ້ວ, ສິ່ງທ້າທາຍກ່ຽວກັບການສື່ສານ ກໍ່ຍັງມີ ຢູ່ ຍ້ອນບັນຊີລາຍຊື່ບຸກຄົນຕ້ອງຫ້າມ ມີແຕ່ເປັນພາສາອັງກິດເທົ່ານັ້ນ, ແລະ ບັນດາສະຖາບັນມັກຈະປະສົບກັບບັນຫາຜົນບວກປອມ (false positives) ທີ່ເກີດຈາກລາຍຊື່ພື້ນຖານດັ່ງກ່າວ. ສຸດທ້າຍ, ຂອບກົດໝາຍ ທີ່ກ່ຽວຂ້ອງກັບຂັ້ນຕອນການລາຍງານຊັບສິນທີ່ຖືກອາຍັດ ໄວ້ໃນ ສປປ ລາວ ຍັງບໍ່ຊັດເຈນ.

ເພື່ອແກ້ໄຂບັນຫາຕ່າງໆທີ່ໄດ້ລະບຸໄວ້ໃນ MER ແລະ ອີງຕາມຖະແຫຼງການສາທາລະນະຂອງ FATF ທີ່ອອກໃນວັນທີ 21 ກຸມພາ 2025, ຫຼັງຈາກ ສປປ ລາວ ຖືກຈັດຢູ່ໃນບັນຊີສີເທົາ, ແນວທາງແກ້ໄຂທີ່ເປັນໄປໄດ້ ແມ່ນຈະຕ້ອງສຸມໃສ່: ການສ້າງຄວາມເຂັ້ມແຂງໃຫ້ແກ່ຂອບ ກົດໝາຍສຳລັບການລົງໂທດ PF; ການເພີ່ມປະສິດທິພາບຂອງການຄຸ້ມຄອງ ແລະ ການບັງຄັບໃຊ້; ການປັບປຸງການສື່ສານໂດຍ ການສະໜອງບັນຊີລາຍຊື່ບຸກຄົນຕ້ອງຫ້າມ ທີ່ຖືກແປ ແລະ ອັບເດດເປັນປະຈຳ; ແລະ ການກຳນົດຂັ້ນຕອນ ທີ່ຊັດເຈນສຳລັບການແກ້ໄຂ ຜົນບວກປອມ ແລະ ການລາຍງານຊັບສິນທີ່ຖືກອາຍັດ.

ຂໍ້ແນະນຳ ທີ 5, 6, 7 ແລະ 10

ການປະເມີນການປະຕິບັດຕາມທາງດ້ານວິຊາການ ແມ່ນການສຶກສາວ່າ ກົດໝາຍ, ລະບຽບການ ແລະ ລະບົບສະຖາບັນຂອງ ສປປ ລາວ ສອດຄ່ອງກັບມາດຕະຖານຂອງອົງການ FATF ຄືແນວໃດ. ອົງການ FATF ໄດ້ລະບຸຂໍ້ບົກຜ່ອງທີ່ສຳຄັນ ແລະ ຄາດຫວັງວ່າ ສປປ ລາວ ຈະແກ້ໄຂບັນຫາເຫຼົ່ານີ້ ຜ່ານການປະຕິຮູບ ທີ່ຖືກຕ້ອງກັບເປົ້າໝາຍພາຍໃຕ້ ຂໍ້ແນະນຳ ທີ 5, 6, 7, ແລະ 10 - ແຕ່ລະຂໍ້ແມ່ນມີຄວາມ ຈຳເປັນສຳລັບການສ້າງຄວາມເຂັ້ມແຂງໃນການຕໍ່ສູ້ຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການແຜ່ ຂະຫຍາຍອາວຸດທຳລາຍລ້າງສູງ ແລະ ການຟອກເງິນ.



ເລີ່ມຈາກ**ຂໍ້ແນະນຳທີ 5,** ເຊິ່ງກ່າວເຖິງການກຳນົດການສະໜອງທຶນໃຫ້ແກ່ການກໍ່ການຮ້າຍເປັນຄວາມຜິດທາງອາຍາ, ໃນບົດລາຍງານ MER ເຫັນວ່າ ກົດໝາຍທີ່ມີຢູ່ຂອງ ສປປ ລາວ ປະຕິບັດໄດ້ຕາມຂໍ້ແນະນຳພຽງແຕ່ບາງສ່ວນເທົ່ານັ້ນ ເຖິງແມ່ນວ່າ TF ຖືກກຳນົດໃຫ້ເປັນຄວາມຜິດທາງອາຍາຢູ່ໃນປະມວນກົດໝາຍອາຍາ ແລະ ກົດໝາຍ AML ກໍ່ຕາມ, ແຕ່ບົດບັນຍັດສ່ວນໃຫຍ່ແມ່ນເນັ້ນໃສ່ພຽງແຕ່ຄວາມພະຍາຍາມໃນການສະໜອງທຶນ, ໂດຍບໍ່ໄດ້ສະທ້ອນໃຫ້ເຫັນເຖິງຂອບເຂດທີ່ກວ້າງຂວາງ ທີ່ກຳນົດໄວ້ໃນມາດຕະຖານສາກົນ ແລະ ສົນທິສັນຍາ TF ຢ່າງຄົບຖ້ວນ. ທີ່ໜ້າສັງເກດຄື ກົດໝາຍຈຳເປັນຕ້ອງຄອບຄຸມການສະໜອງທຶນໃຫ້ແກ່ຜູ້ກໍ່ການຮ້າຍ ແລະ ການເຄື່ອນໄຫວຂອງເຂົາຂອງເຈົ້າໄວ້ຢ່າງຊັດເຈນ. ຍັງບໍ່ທັນມີຄວາມຊັດເຈັນວ່າ TF ເປັນຄວາມຜິດຕົ້ນສຳລັບ ML ຢ່າງເປັນທາງການ ຫຼື ບໍ່. ມາດຕະການລົງໂທດທີ່ມີຢູ່ໃນປັດຈຸບັນ ຖືວ່າຍັງອ່ອນແອ, ແລະ ຄວາມບໍ່ສອດຄ່ອງລະຫວ່າງກົດໝາຍ AML ແລະ ປະມວນກົດໝາຍອາຍາ ເຮັດໃຫ້ການບັງຄັບໃຊ້ມີຄວາມຫຍຸ້ງຍາກ. ດັ່ງນັ້ນ, ການດັດແກ້ກົດໝາຍທັງສອງສະບັບ ເພື່ອຮັບປະກັນຄວາມສອດຄ່ອງ ແລະ ຄອບຄຸມຢ່າງຄົບຖ້ວນ ຈຶ່ງມີຄວາມຈຳເປັນ.

ຂໍ້ແນະນຳ ທີ 6 ກ່ຽວຂ້ອງກັບການລົງໂທດທາງດ້ານການເງິນຕໍ່ເປົ້າໝາຍ ທີ່ກ່ຽວຂ້ອງກັບ TF. ມີບັນຫາຫຼາຍຢ່າງ ໄດ້ຖືກລະບຸ ເຊັ່ນ: ມາດຕະຖານທີ່ບໍ່ສອດຄ່ອງສຳລັບການກຳນົດບຸກຄົນ, ຂະບວນການຖອນລາຍຊື່ທີ່ບໍ່ຊັດເຈນ, ແລະ ການປົກປ້ອງ ທີ່ຍັງບໍ່ພຽງພໍຕໍ່ບຸກຄົນທີ່ສາມ ທີ່ສຸດຈະລິດ. ນອກຈາກນັ້ນ, ລາຍຊື່ ທີ່ຖືກກຳນົດ ມີແຕ່ເປັນພາສາອັງກິດເທົ່ານັ້ນ ແລະ REs ຂາດຄູ່ມືທີ່ຊັດເຈນກ່ຽວກັບພັນທະຂອງເຂົາເຈົ້າໃນການອາຍັດຊັບສິນ. ການແກ້ໄຂບັນຫາເຫຼົ່ານີ້ ຈຳເປັນຕ້ອງມີການແກ້ໄຂກົດໝາຍ ເພື່ອກຳນົດແຈ້ງຂະບວນການສຳລັບການກຳນົດ ແລະ ການຖອນລາຍຊື່, ປັບປຸງການປົກປ້ອງບຸກຄົນທີສາມ ແລະ ຮັບປະກັນການສື່ສານຫຼາຍພາສາທີ່ທັນການ. ນອກຈາກນີ້ ຈຳເປັນຕ້ອງມີການອອກຄູ່ມືທີ່ຊັດເຈນສຳລັບ REs.

ຂໍ້ແນະນຳ ທີ 7 ເນັ້ນໃສ່ການລົງໂທດ ທີ່ຕິດພັນກັບ PF. ໃນກໍລະນີນີ້, ການຊັກຊ້າໃນການອາຍັດຊັບສິນ ທີ່ຖືກກຳນົດ, ປົກກະຕິແລ້ວແມ່ນພາຍໃນສອງຫາສາມວັນ, ເຮັດໃຫ້ປະສິດທິພາບການດຳເນີນງານຫຼຸດລົງ. ຄວາມຮັບຜິດຊອບຂອງ ສະຖາບັນ ທີ່ກ່ຽວຂ້ອງກັບຄຳສັ່ງອາຍັດຊັບສິນ ຍັງບໍ່ທັນໄດ້ກຳນົດໄວ້ຢ່າງຈະແຈ້ງ, ແລະ ຂໍ້ຫ້າມໃນການໃຫ້ທຶນ ຫຼື ການບໍລິການແກ່ບຸກຄົນທີ່ກຳນົດ ຍັງບໍ່ທັນພຽງພໍ. ນອກຈາກນີ້, ຄູ່ມືທີ່ເປັນແນວທາງໃນການຈັດການກັບການຖອນລາຍຊື່ ຫຼື ການຍົກເລີກການອາຍັດຊັບສິນ ແມ່ນຍັງມີຢູ່ຢ່າງຈຳກັດ. ມາດຕະການລົງໂທດ ຍັງຖືກເບິ່ງວ່າ ບໍ່ທັນສົມສ່ວນ ຫຼື ເປັນທີ່ເຄັດຫລາບ. ເພື່ອແກ້ໄຂບັນຫານີ້, ສປປ ລາວ ຕ້ອງປັບປຸງຂອບກົດໝາຍຂອງຕົນ ເພື່ອຮັບປະກັນການອາຍັດຊັບສິນໄດ້ທັນທີ, ອະທິບາຍແຈ້ງພັນທະໃນການປະຕິບັດຕາມ ແລະ ໃຫ້ຄຳແນະນຳຢ່າງລະອຽດແກ່ REs.

ຕໍ່ກັບ ຂໍ້ແນະນຳ ທີ 10, ເຊິ່ງເປັນໜຶ່ງໃນ “6 ຂໍ້ໃຫຍ່” ຂອງອົງການ FATF, ໂດຍເນັ້ນໃສ່ CDD ເປັນຫຼັກ. ບັນຫາສຳຄັນໃນ ສປປ ລາວ ແມ່ນຄຳນິຍາມຂອງຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ເຊິ່ງໃນປັດຈຸບັນ ຍັງບໍ່ເປັນໄປຕາມມາດຕະຖານຂອງອົງການ FATF. ຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ແມ່ນບຸກຄົນທຳມະດາ ທີ່ຄວບຄຸມບໍລິສັດ ຫຼື ນິຕິບຸກຄົນ, ແຕ່ແນວຄວາມຄິດນີ້ ຍັງບໍ່ໄດ້ສະທ້ອນໃຫ້ເຫັນໄດ້ຢ່າງຊັດເຈນໃນກົດໝາຍຂອງລາວ. ຊ່ອງຫວ່າງນີ້ ອາດຂັດຂວາງການສືບສວນ-ສອບສວນ. ປະເທດຕ້ອງຮັບຮອງ ແລະ ນຳໃຊ້ຄຳນິຍາມທີ່ເໝາະສົມ, ຮຽກຮ້ອງໃຫ້ມີການລະບຸຕົວຕົນ ແລະ ພິສູດຢັ້ງຢືນຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ແລະ ຮັບປະກັນວ່າ REs ເຂົ້າໃຈຕໍ່ຈຸດປະສົງຂອງການພົວພັນກັບລູກຄ້າດັ່ງກ່າວ. CDD ຄວນນຳໃຊ້ທຸກຄັ້ງ ທີ່ມີຄວາມສົງໃສກ່ຽວກັບ ML ຫຼື TF, ໂດຍບໍ່ຄຳນຶງເຖິງວົງເງິນ ຫຼື ຂໍ້ຍົກເວັ້ນໃດໆ.

ເພື່ອຕອບສະໜອງຕໍ່ຂໍ້ຮຽກຮ້ອງຂອງ ຂໍ້ແນະນຳ ທີ 5, 6, 7 ແລະ 10, ສປປ ລາວ ຕ້ອງແກ້ໄຂຊ່ອງຫວ່າງດ້ານວິຊາການຫຼາຍຢ່າງ ໂດຍການປັບປຸງກົດໝາຍຂອງຕົນ, ອະທິບາຍແຈ້ງຄວາມຮັບຜິດຊອບ, ປັບປຸງກົນໄກການບັງຄັບໃຊ້, ແລະ ສະ ເໜີແນວທາງທີ່ເປັນປະໂຫຍດໃຫ້ກັບບັນດາຜູ້ທີ່ມີສ່ວນຮ່ວມ ທີ່ກ່ຽວຂ້ອງ. ບາດກ້າວເຫຼົ່ານີ້ ແມ່ນມີຄວາມຈຳເປັນເພື່ອຕອບສະໜອງຄວາມຄາດຫວັງຂອງອົງການ FATF ແລະ ສ້າງລະບົບທີ່ມີປະສິດທິພາບຫຼາຍຂຶ້ນສຳລັບການຕໍ່ສູ້ກັບອາຊະຍາກຳທາງດ້ານການເງິນ.



ຂັ້ນຕອນການຮ່ວມມືລະຫວ່າງປະເທດທາງອາຍາ ຂອງ ສປປ ລາວ



ທ່ານ ນ. ວິໄລສິນ ແດນທັນສາ,
ຮອງຫົວໜ້າກົມແຜນການ ແລະ ຮ່ວມມືສາກົນ, ອົງການໄອຍະການປະຊາຊົນສູງສຸດຂອງ ສປປ ລາວ

ຂອບນິຕິກຳ ທີ່ຕິດພັນກັບ MLA ໃນ ສປປ ລາວ ສາມາດເບິ່ງໄດ້ໃນ ປະມວນກົດ ໝາຍອາຍາ (2017), ກົດໝາຍວ່າດ້ວຍການດຳເນີນ ຄະດີອາຍາ (2017), ກົດໝາຍວ່າດ້ວຍຂັ້ນຕອນການດຳເນີນຄະດີ ເຍົາວະຊົນ (2013), ກົດໝາຍວ່າດ້ວຍ MLA ທາງອາຍາ (2020) ຫຼື ຄູ່ມື MLA (2024).

ສປປ ລາວ ໄດ້ສ້າງຂອບກົດໝາຍສຳລັບການຮ່ວມມືລະຫວ່າງປະເທດ ທາງອາຍາ ໂດຍຜ່ານການເຂົ້າຮ່ວມໃນສົນທິສັນຍາສາກົນ ແລະ ສອງ ຝ່າຍຫຼາຍສະບັບກ່ຽວກັບບັນຫາອາຍາ. ສິ່ງເຫຼົ່ານີ້ລວມມີ ສົນທິສັນຍາ ຂອງອົງການສະຫະປະຊາຊາດ ວ່າດ້ວຍການຕ້ານອາຊະຍາກຳຂ້າມ ຊາດ ທີ່ມີການຈັດຕັ້ງ (UNTOC) ປີ 2003, ສົນທິສັນຍາຊ່ວຍເຫຼືອເຊິ່ງ ກັນ ແລະ ກັນທາງດ້ານກົດໝາຍຂອງອາຊຽນ (MLAT) ປີ 2004, ແລະ ສົນທິສັນຍາຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍສອງຝ່າຍກັບ ຫວຽດນາມ (1998), ຈີນ (1999), ແລະ ເກົາຫຼີເໜືອ (2008). ພາຍໃນ ປະເທດ, ສປປ ລາວ ໄດ້ອອກກົດໝາຍວ່າດ້ວຍການຮ່ວມມືລະຫວ່າງ ປະເທດທາງອາຍາ ໃນເດືອນທັນວາ 2020. ນອກຈາກນັ້ນ, ປະເທດຍັງ ເປັນສະມາຊິກຂອງເຄືອຂ່າຍຍຸຕິທຳອາຊີຕາເວັນອອກສຽງໃຕ້ (SEA-Just), ເຊິ່ງໄດ້ຖືກສ້າງຕັ້ງຂຶ້ນໃນປີ 2020 ເພື່ອສົ່ງເສີມການຮ່ວມມືດ້ານ ຕຸລາການພາຍໃນພາກພື້ນ.

ອົງການໄອຍະການປະຊາຊົນສູງສຸດເຮັດໜ້າທີ່ເປັນສູນກາງ ແລະ ເປັນອົງການປະສານງານຫຼັກສຳລັບການຊ່ວຍເຫຼືອເຊິ່ງກັນແລະກັນ ທາງດ້ານກົດໝາຍ, ຮັບຜິດຊອບໃນການວິເຄາະຄຳຮ້ອງຂໍ, ຕິດຕໍ່ພົວພັນກັບອົງການພາຍໃນທີ່ກ່ຽວຂ້ອງ, ແລະ ການສື່ສານກັບລັດທີ່ ຮ້ອງຂໍ. ປະເພດຄຳຮ້ອງຂໍ ທີ່ສາມາດແກ້ໄຂໄດ້ພາຍໃຕ້ກົດໝາຍ MLA ຂອງປະເທດລາວ ແມ່ນໄດ້ລະບຸໄວ້ໃນ ມາດຕາ 7. ໃນທາງກັບ ກັນ, ມາດຕາ 8 ລະບຸເງື່ອນໄຂ ທີ່ຄຳຮ້ອງຂໍ MLA ອາດຈະຖືກປະຕິເສດ, ລວມທັງຂໍ້ກັງວົນກ່ຽວກັບອະທິປະໄຕ, ການບໍ່ມີຄວາມຜິດທາງ ອາຍາຕາມກົດໝາຍຂອງທັງສອງປະເທດ, ແລະ ລັກສະນະທາງການເມືອງຂອງຄວາມຜິດພື້ນຖານ. ເຈົ້າໜ້າທີ່ຕ່າງປະເທດ ທີ່ມີຈຸດປະສົງ ທີ່ຈະຍື່ນຄຳຮ້ອງຂໍ MLA ຕ້ອງປະຕິບັດຕາມ ມາດຕາ 9 ສຳລັບແນວທາງການປະຕິບັດ, ແລະ ຄຳຮ້ອງຂໍຂອງເຂົາເຈົ້າ ຕ້ອງປະຕິບັດຕາມ ມາດຕະຖານດ້ານວິຊາການ ທີ່ກຳນົດໄວ້ໃນ ມາດຕາ 10.

ມີທ່າອ່ຽງເພີ່ມຂຶ້ນຢ່າງຕໍ່ເນື່ອງຂອງຈຳນວນຄຳຮ້ອງຂໍ MLA ທີ່ ສປປ ລາວ ໄດ້ຮັບ ແລະ ດຳເນີນການ. ຄູ່ຮ່ວມງານຫຼັກສຳລັບການຮ້ອງ ຂໍ ທັງຂາເຂົ້າ ແລະ ຂາອອກ ແມ່ນຫວຽດນາມ, ໄທ ກໍ່ມີປະລິມານຄຳຮ້ອງຂໍຂ້ອນຂ້າງສູງເຊັ່ນດຽວກັນ. ນອກຈາກນີ້, ສປປ ລາວ ຍັງໄດ້ ດຳເນີນການ MLA ກັບບັນດາປະເທດ ເຊັ່ນ: ຍີ່ປຸ່ນ, ສະຫະລັດອາເມລິກາ, ເຢຍລະມັນ, ຈີນ ແລະ ເປຣູ, ເຖິງແມ່ນວ່າຈະມີສັດສ່ວນ ທີ່ ໜ້ອຍກວ່າກໍຕາມ.

ໃນການດຳເນີນການຕາມຄຳຮ້ອງຂໍ MLA, ອົງການໄອຍະການປະຊາຊົນສູງສຸດປະເຊີນກັບອຸປະສັກອັນໃຫຍ່ຫຼວງ ທີ່ເກີດຈາກ ຄວາມແຕກຕ່າງທາງດ້ານພາສາ ແລະ ຄວາມເຂົ້າໃຈ ທີ່ຈຳກັດກ່ຽວກັບລະບົບກົດໝາຍ ແລະ ກົດໝາຍຂອງປະເທດອື່ນໆ. ການບໍ່ມີ ກຳນົດເວລາ ທີ່ຊັດເຈນ ຍິ່ງເຮັດໃຫ້ບັນຫາເຫຼົ່ານີ້ຮຸ່ນແຮງຂຶ້ນ. ຍຸດທະສາດ ທີ່ພິຈາລະນາເພື່ອເອົາຊະນະສິ່ງທ້າທາຍເຫຼົ່ານີ້ ຄື ການແລກປ່ຽນ ຂໍ້ມູນທີ່ກວ້າງຂວາງ, ການເຮັດຂໍ້ຕົກລົງທາງກົດໝາຍສອງຝ່າຍກັບປະເທດຕ່າງໆ ໃຫ້ຫລາຍຂຶ້ນ ແລະ ການສ້າງລະບົບບໍລິຫານຂໍ້ມູນ MLA ທີ່ມີປະສິດທິພາບຫຼາຍຂຶ້ນ.

ການຟອກເງິນ, ການຮິບທາງແພ່ງ ແລະ ການດຳເນີນຄະດີອາຍາທີ່ກ່ຽວຂ້ອງ



ທ່ານ Nat Namitchaitham,
ໄອຍະການກ່ຽວກັບ ML ແລະ ການຍຶດຊັບສິນ, OAG ແຫ່ງປະເທດໄທ

ທ່ານ Nat Namitchaitham ໄດ້ກ່າວເຖິງບັນຫາການດຳເນີນຄະດີກ່ຽວກັບການຟອກເງິນ ແລະ ການຍຶດຊັບສິນໃນປະເທດໄທ. ການຟອກເງິນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ຂອງພະລາຊະດີກາ ວ່າດ້ວຍການປ້ອງກັນ AML ຄອບຄຸມ ຕັ້ງແຕ່ການໂອນຊັບສິນ ທີ່ໄດ້ມາຈາກການກໍ່ອາຊະຍາກຳ, ການປົກປິດຊັບສິນ ຫຼື ແຫຼ່ງທີ່ມາຂອງຊັບສິນ ຈົນເຖິງການນຳໃຊ້ຊັບສິນ ທີ່ໄດ້ມາຈາກການກະທຳຜິດທາງອາຍາ. ກົດໝາຍວ່າດ້ວຍ AML ຂອງໄທ ຖືວ່າເປັນການກະທຳຜິດທີ່ຮ້າຍແຮງ ເນື່ອງຈາກຜົນກະທົບຕໍ່ຄວາມປອດໄພຂອງປະຊາຊົນ, ໄດ້ດຳເນີນຄະດີກ່ຽວກັບການຟອກເງິນແລ້ວ 29 ຄະດີ, ເຊິ່ງໃນນັ້ນ ລວມມີຄະດີ ທີ່ເປັນຄວາມຜິດຕົ້ນ 21 ຄະດີ ແລະ ຄວາມຜິດທີ່ກ່ຽວຂ້ອງອື່ນໆ ອີກ 8 ຄະດີ.

ກ່ຽວກັບການຍຶດຊັບສິນ, ຜູ້ນຳສະເໜີໄດ້ຊີ້ແຈງວ່າ ເຖິງແມ່ນວ່າ ສິດທິໃນຊັບສິນ ຈະເປັນສິດຂັ້ນພື້ນຖານ, ແຕ່ກໍ່ບໍ່ແມ່ນສິດທິ ທີ່ສົມບູນ ແລະ ສາມາດຖືກຍຶດໄດ້ຫາກກ່ຽວຂ້ອງກັບກິດຈະກຳ ທີ່ຜິດກົດໝາຍອາຍາ. ແທ້ຈິງແລ້ວ, ຈຸດປະສົງຫຼັກຂອງການຍຶດຊັບສິນແມ່ນເພື່ອປ້ອງກັນ ອັນຕະລາຍ, ຂັດຂວາງຜູ້ກະທຳຜິດຈາກຜົນກຳໄລ ທີ່ຜິດກົດໝາຍ, ແລະ ສະກັດກັ້ນອາຊະຍາກຳໃນອະນາຄົດ.

ທ່ານ Namitchaitham ໄດ້ກຳນົດສອງປະເພດຫຼັກສຳລັບການຍຶດຊັບສິນພາຍໃນລະບົບກົດໝາຍຂອງໄທ ຄື: ປະເພດຄະດີອາຍາ ແລະ ຄະດີສະເພາະ ທີ່ກ່ຽວຂ້ອງກັບຄະດີຟອກເງິນ.

ໃນຄະດີອາຍາ, ການຍຶດຊັບສິນແມ່ນຢູ່ພາຍໃຕ້ປະມວນກົດໝາຍອາຍາ ແລະ ປະມວນກົດໝາຍວິທີພິຈາລະນາການດຳເນີນຄະດີອາຍາ, ໂດຍນຳໃຊ້ທັງການຍຶດຊັບສິນ (ສຳລັບສິ່ງຂອງຕ້ອງຫ້າມ, ເຄື່ອງມືໃນການກໍ່ອາຊະຍາກຳ, ແລະ ຊັບສິນ ທີ່ໄດ້ມາຈາກການກໍ່ອາຊະຍາກຳ) ແລະ ການຍຶດຊັບສິນ ທີ່ອີງໃສ່ມູນຄ່າ (ເມື່ອຊັບສິນໃດຊັບສິນໜຶ່ງບໍ່ສາມາດຕິດຕາມໄດ້). ບົດບັນຍັດທາງກົດໝາຍທີ່ກ່ຽວຂ້ອງແມ່ນໄດ້ລະບຸໄວ້ໃນປະມວນກົດໝາຍອາຍາຂອງໄທ ແລະ ປະມວນກົດໝາຍອາຍາ ວ່າດ້ວຍຢາເສບຕິດ ແລະ ຢາເສບຕິດ ທີ່ຜິດກົດໝາຍ.

ສຳລັບຄະດີ ML, ຂອບກົດໝາຍສ່ວນໃຫຍ່ແມ່ນພົບເຫັນໄດ້ຢູ່ໃນພະລາຊະດີກາ ວ່າດ້ວຍ MLA ແລະ ພະລາຊະດີກາ ວ່າດ້ວຍການປ້ອງກັນການສໍ້ລາດບັງຫຼວງ, ເຊິ່ງລວມເຖິງແນວທາງສຳລັບການປະເມີນມູນຄ່າຊັບສິນ. ນອກຈາກນີ້, ປະມວນກົດໝາຍວ່າດ້ວຍຢາເສບຕິດ ອະນຸຍາດໃຫ້ມີການຍຶດຊັບສິນທີ່ເຊື່ອມໂຍງກັບການກະທຳຜິດກ່ຽວກັບຢາເສບຕິດ ເຖິງແມ່ນວ່າ ບາງກໍລະນີບໍ່ມີຄຳສັ່ງສານມາກ່ອນກໍ່ຕາມ. ປະມວນກົດໝາຍອາຍາ, ປະມວນກົດໝາຍວ່າດ້ວຍຢາເສບຕິດ, ແລະ ດຳລັດ ທີ່ກ່ຽວຂ້ອງອື່ນໆ ກໍ່ສາມາດບັງຄັບໃຊ້ຄະດີເຫຼົ່ານີ້ໄດ້ເຊັ່ນດຽວກັນ. ສິ່ງທີ່ໜ້າສັງເກດແມ່ນມາດຕະຖານຂອງຫຼັກຖານສຳລັບການຮິບຊັບສິນ ໂດຍທົ່ວໄປແລ້ວແມ່ນຕ່ຳກວ່າມາດຕະຖານ ທີ່ກຳນົດເພື່ອພິສູດຄວາມຜິດທາງອາຍາ ໂດຍໄອຍະການຕ້ອງສະແດງໃຫ້ເຫັນເຖິງແຫຼ່ງທີ່ມາ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຫຼື ການນຳໃຊ້ຊັບສິນທີ່ຖືກຍຶດ.

ທ່ານ Namitchaitham ໄດ້ສະຫຼຸບ ໂດຍເນັ້ນໜັກເຖິງສິ່ງທ້າທາຍໃນການຍຶດຊັບສິນ ເຊັ່ນ: ຄຳນິຍາມທາງກົດໝາຍ ທີ່ຍັງບໍ່ຊັດເຈນ, ມູນຄ່າທີ່ບໍ່ແນ່ນອນຂອງຊັບສິນ ເຊັ່ນ: ສະກຸນເງິນດິຈິຕອນ ແລະ ຊ່ອງທາງ ທີ່ຈຳກັດສຳລັບເຈົ້າຂອງຊັບໃນການໂຕ້ແຍ້ງການຍຶດດັ່ງກ່າວ. ທ່ານໄດ້ຍົກຕົວຢ່າງກໍລະນີສຶກສາ ທີ່ສະແດງໃຫ້ເຫັນຄວາມຫຍຸ້ງຍາກລຳບາກທີ່ກ່ຽວຂ້ອງກັບເຮືອລົ້ມໃນຄະດີການຄ້າມະນຸດ ແລະ ຄວາມເສຍຫາຍຕໍ່ໂຄງສ້າງພື້ນຖານສາທາລະນະ ທີ່ມີມູນຄ່າຫຼາຍກວ່າມູນຄ່າຂອງລົດບັນທຸກ ທີ່ບັນທຸກນ້ຳໜັກເກີນ.



ທ່ານ Tanin Pradit,
ໄອຍະການ, ສຳນັກງານໄອຍະການສູງສຸດ
ແຫ່ງປະເທດໄທ

ທ່ານ Tanin Pradit ໄດ້ສະຫຼຸບຂັ້ນຕອນທັງສາມຂອງການຟອກເງິນ ໄວ້ ຄື: ການວາງເງິນ, ໂດຍການນຳເງິນ ທີ່ຜິດກົດໝາຍເຂົ້າສູ່ລະບົບການເງິນ (ຕ.ຢ., ການຊື້ຊັບສິນ, ເງິນຝາກທະນາຄານ, ການລົງທຶນໃນປະກັນໄພ); ການສ້າງຊັ້ນປົກປິດ, ໂດຍການແຍກເງິນ ທີ່ໄດ້ມາຢ່າງຜິດກົດໝາຍຈາກ ແຫຼ່ງທີ່ມາ ດ້ວຍການເຮັດທຸລະກຳ ທີ່ມີຄວາມສັບຊ້ອນ (ຕ.ຢ., ການລົງທຶນ, ການຊື້ອະສັງຫາລິມະຊັບ, ການຄອບຄອງຊັບສິນ); ແລະ ການລວບລວມກັບຄືນ, ໂດຍການໃຫ້ເງິນທີ່ໄດ້ຖືກຟອກແລ້ວ ເບິ່ງຄືວ່າ ເປັນເງິນທີ່ໄດ້ມາຈາກທຸລະກິດ ທີ່ຖືກຕ້ອງຕາມກົດໝາຍ ດ້ວຍການນຳ ເອົາກັບຄືນເຂົ້າສູ່ລະບົບເສດຖະກິດ (ຕ.ຢ., ການນຳເອົາໄປລວມເຂົ້າ ກັບລາຍຮັບ ທີ່ຖືກກົດໝາຍ ໂດຍຜ່ານບໍລິສັດໃດໜຶ່ງ).

ພາຍໃຕ້ກົດໝາຍຂອງໄທ, ເງິນທີ່ໄດ້ຈາກການກໍ່ອາຊະຍາກຳ ໝາຍເຖິງ ຊັບສິນທີ່ກ່ຽວຂ້ອງໂດຍກົງກັບອາຊະຍາກຳທີ່ເປັນຄວາມຜິດຕົ້ນ ຊຶ່ງຊັບສິນເຫຼົ່ານັ້ນ ເປັນຊັບສິນທີ່ຜິດກົດໝາຍ, ແລະ ລວມທັງລາຍຮັບ ໃດໆ ທີ່ເກີດຂຶ້ນຈາກຊັບສິນເຫຼົ່ານີ້. ຕົວຢ່າງຂອງຊ່ອງທາງການວາງເງິນ ທີ່ຜູ້ກະທຳຜິດໃຊ້ ໄດ້ແກ່ ເງິນຝາກທະນາຄານ, ກຳມະທັນປະກັນໄພ, ການຊື້ຫຸ້ນ, ທຸລະກຳອະສັງຫາລິມະສັບ, ການແລກປ່ຽນ ເງິນຕາຕ່າງປະເທດ, ການໂອນກຳມະສິດໂດຍຕົວແທນ, ເງິນຝາກອອມ ຊັບຂອງສະຫະກອນ, ການປົກປິດເງິນຝາກຢູ່ຕ່າງປະເທດ, ແລະ ການລົງທຶນໃນພັນທະບັດ.

ຂອບກົດໝາຍຂອງໄທກ່ຽວກັບຂະບວນການຕິດຕາມ, ການຍຶດ ແລະ ການຮິບຊັບສິນ ກຳນົດໃຫ້ເຈົ້າໜ້າທີ່ AMLO ເຮັດການສືບສວນ-ສອບສວນ ພາຍຫຼັງອາຊະຍາກຳຄວາມຜິດຕົ້ນໃດໜຶ່ງ, ລາຍງານໃຫ້ຄະນະກຳມະການ AMLO ແຫ່ງຊາດ ຮັບຊາບ ເມື່ອພົບຊັບສິນທີ່ ກ່ຽວຂ້ອງ, ແລະ ຄະນະກຳມະການອອກຄຳສັ່ງຍຶດ ຫຼື ອາຍັດຊັບສິນພາຍໃນ 90 ວັນ. ໂດຍທົ່ວໄປແລ້ວ, ຊັບສິນທີ່ຖືກຍຶດພາຍໃຕ້ມາດ ຕະການທາງແພ່ງຈະຕົກເປັນຂອງລັດ, ແຕ່ສາມາດນຳໄປໃຊ້ເພື່ອຊົດເຊີຍຜູ້ເຄາະຮ້າຍໃນຄະດີສໍ້ໂກງໄດ້. ເຈົ້າຂອງຊັບສິນມີສິດທີ່ຈະ ຄັດຄ້ານການຍຶດໂດຍການພິສູດແຫຼ່ງທີ່ມາຂອງເງິນທຶນ ທີ່ຖືກຕ້ອງຕາມກົດໝາຍຂອງເຂົາເຈົ້າ.

ສິ່ງສຳຄັນ, ຕ້ອງມີຫຼັກຖານການກະທຳຜິດອາຊະຍາກຳ ທີ່ເປັນຄວາມຜິດຕົ້ນ ກ່ອນການດຳເນີນການຍຶດຊັບສິນ ທີ່ໄດ້ຈາກການກະທຳຜິດ ທາງອາຍາດັ່ງກ່າວ, ແລະ ການຍຶດຊັບສິນສາມາດດຳເນີນການໄດ້ ໂດຍບໍ່ຕ້ອງມີການຈັບກຸ່ມ ຖ້າຫາກພິສູດໄດ້ວ່າ ແຫຼ່ງທີ່ມາຂອງຊັບສິນ ນັ້ນ ມາຈາກການກະທຳຜິດທາງອາຍາ. ຄຳຕັດສິນຂອງສານສູງສຸດໃນປະເທດໄທ ໄດ້ກຳນົດວ່າ ເຖິງແມ່ນວ່າຜູ້ກະທຳຜິດຈະຖືກປ່ອຍຕົວ ຈາກຄະດີຄວາມຜິດ, ແຕ່ຊັບສິນກໍຍັງສາມາດຖືກຍຶດໂດຍລັດໄດ້ ເຊິ່ງເນັ້ນຍ້ຳເຖິງຄວາມສຳຄັນຂອງແຫຼ່ງທີ່ມາ ທີ່ຜິດກົດໝາຍຂອງຊັບສິນ.



ເວທີເສວະນາ - ປະສົບການຂອງປະເທດໄທ: ຜົນກະທົບກ່ຽວກັບ "ການຖືກຈັດເຂົ້າໃນບັນຊີເທົ່າ" ຕໍ່ຂະແໜງການທະນາຄານ



ຜູ້ຮ່ວມເສວະນາ:

- ທ່ານ ພັດທຣະວຸດ ກອນສົມບັດ,ຜູ້ອຳນວຍການອາວຸໂສ, ຝ່າຍກຳກັບ ແລະ ຕິດຕາມຄວາມສ່ຽງດ້ານການຟອກເງິນ, ທະນາຄານໄທພານິດ ແລະ ຜູ້ແທນສະມາຄົມທະນາຄານໄທ
- ທ່ານ ໄພສານ ວໍຣະເສດສິຣິ, ຮອງກຳມະການຜູ້ຈັດການອາວຸໂສຂອງທະນາຄານກະຊິກອນໄທ
- ທ່ານ ສົມປະສົງ ໂພທິສານ, ຫົວໜ້າພະແນກຄຸ້ມຄອງຄວາມສ່ຽງ ແລະ ຕ້ານການຟອກເງິນ, ທະນາຄານການຄ້າຕ່າງປະເທດລາວ (BCEL)

ພິທີກອນ:

ພິທີກອນ: ຂໍໃຫ້ຜູ້ຕ່າງໜ້າຈາກ BCEL ປະກອບຄຳເຫັນຕໍ່ກັບ ການທີ່ ສປປ ລາວ ຖືກຈັດເຂົ້າໃນບັນຊີສີເທົາ ຈະມີຜົນກະທົບແນວໃດຕໍ່ຂະແໜງການທະນາຄານຂອງປະເທດ ແລະ ຄວນໃຫ້ບູລິມະສິດມາດຕະການຮີບດ່ວນໃດແດ່ ເພື່ອແກ້ໄຂຂໍ້ບົກຜ່ອງທີ່ຖືກພົບ?



ພານະທ່ານ ນາງ ມໍລະກົດ ສະຫວັດດີ,
ເອກອັກຄະລັດຖະທູດແຫ່ງ ຣາຊະອານາຈັກໄທ ປະຈຳ ສປປ ລາວ

BCEL, ໃນຖານະທີ່ເປັນໜຶ່ງໃນທະນາຄານອັນດັບໃຫຍ່ຂອງ ສປປ ລາວ, ໄດ້ເນັ້ນໃຫ້ເຫັນໄດ້ເຖິງຄວາມຮັບຮູ້ບັນຫາກ່ຽວກັບການຟອກເງິນ ກ່ອນຈະຖືກຈັດເຂົ້າໃນບັນຊີເທົ່າ. ຕົວແທນຂອງ BCEL ຄາດຄະເນຜົນກະທົບຕ່າງໆ ເຊັ່ນ: ຄວາມຫຍຸ້ງຍາກທີ່ເພີ່ມຂຶ້ນໃນການເຮັດທຸລະກຳພາຍໃນ ແລະ ລະຫວ່າງປະເທດ, ການກວດສອບທີ່ເຂັ້ມງວດຂຶ້ນຈາກທະນາຄານຕົວແທນ ແລະ ຄູ່ຮ່ວມງານ ນຳໄປສູ່ການຫຼຸດລົງຂອງລາຍຮັບ ເນື່ອງຈາກຕົ້ນທຶນ ທີ່ເພີ່ມຂຶ້ນ, ແລະ ການຫຼຸດລົງຂອງກິດຈະກຳກັບທະນາຄານຕົວແທນ.

ກ່ຽວກັບມາດຕະການຮີບດ່ວນທີ່ຕ້ອງດຳເນີນການ, BCEL ຮັບຮູ້ເຖິງຄວາມຈຳເປັນໃນການຈັດຕັ້ງປະຕິບັດ ແລະ ເຜີຍແຜ່ກົດໝາຍ, ລະບຽບການ ແລະ ເຄື່ອງມືທາງກົດໝາຍໃໝ່ໆ ໃຫ້ກັບພະນັກງານ ແລະ ລູກຄ້າ. ນອກຈາກນີ້, ຄາດວ່າ ຄ່າໃຊ້ຈ່າຍຈະມີການເພີ່ມຂຶ້ນ ອັນເນື່ອງມາຈາກການຖືກຈັດໃນບັນຊີສີເທົ່າ ແລະ ຈະສົ່ງຜົນກະທົບຕໍ່ຊັບພະຍາກອນມະນຸດ ເຊິ່ງຈຳເປັນຕ້ອງມີການຈັດຝຶກອົບຮົມກ່ຽວກັບລະບຽບການທີ່ໄດ້ຮັບການອັບເດດ.

ພິທີກອນ: ຂໍໃຫ້ທາງສະມາຄົມທະນາຄານໄທແລກປ່ຽນ ໃນຖານະທີ່ປະເທດໄທເຄີຍຕົກຢູ່ໃນບັນຊີເທົາຂອງອົງການ FATF ຕັ້ງແຕ່ປີ 2009 ຫາ 2013. ມີມາດຕະການຫຍັງແດ່ທີ່ໄດ້ຈັດຕັ້ງປະຕິບັດເພື່ອບັນລຸການຖອນອອກຈາກບັນຊີດັ່ງກ່າວ ແລະ ຊ່ວງຕົກຢູ່ໃນສະຖານະນີ້ ໄດ້ມີຜົນກະທົບຫຍັງແດ່ຕໍ່ຂະແໜງການທະນາຄານ ໂດຍສະເພາະໃນແງ່ຂອງຄວາມໝັ້ນໃຈຂອງລູກຄ້າ ແລະ ນັກລົງທຶນ?

ສະມາຄົມທະນາຄານໄທ



ທະນາຄານໄທປະສົບກັບສິ່ງທ້າທາຍຫຼາຍຢ່າງ ທີ່ສະທ້ອນໃຫ້ເຫັນເຖິງສິ່ງທີ່ BCEL ໄດ້ອະທິບາຍ, ໂດຍສະເພາະແມ່ນຂະບວນການກັ່ນຕອງທີ່ເຂັ້ມງວດຂຶ້ນ ພ້ອມກັບພັນທະທີ່ເພີ່ມຂຶ້ນ ແລະ ຄ່າໃຊ້ຈ່າຍໃນການດຳເນີນງານ. ການຕົກຢູ່ໃນບັນຊີເທົາມີຜົນກະທົບທາງອ້ອມໃນທາງລົບ ຕໍ່ກິດຈະກຳຂອງພາກເອກະຊົນ ແລະ ກະແສເງິນລົງທຶນທີ່ໄຫຼເຂົ້າຈາກນາໆຊາດ ທີ່ມີຂອບນິຕິກຳຕ້ານການຟອກເງິນທີ່ເຂັ້ມແຂງ ເຊິ່ງສົ່ງຜົນໃຫ້ການດຶງດູດລູກຄ້າຫຼຸດລົງ. ເຖິງແມ່ນວ່າ ປະເທດໄທຈະຖືກຖອນອອກຈາກບັນຊີເທົາຂອງອົງການ FATF ໃນປີ 2013 ແລ້ວກໍ່ຕາມ, ແຕ່ໄພຂົ່ມຂູ່ຂອງອາຊະຍາກຳຂ້າມຊາດ ກໍ່ຍັງມີຢູ່ຢ່າງຕໍ່ເນື່ອງ ເຮັດໃຫ້ຈຳເປັນຕ້ອງມີມາດຕະການທີ່ເຂັ້ມງວດຢ່າງຕໍ່ເນື່ອງເຊັ່ນດຽວກັນ. ໃນໄລຍະທົດສະວັດທີ່ຜ່ານມາ, ສິ່ງນີ້ໄດ້ນຳໄປສູ່ການປະຕິບັດ ທີ່ເຂັ້ມງວດຢ່າງມີໄນຍະສຳຄັນ ເຊັ່ນ: ການຕິດຕາມລູກຄ້າ, ການກວດຈັບສິ່ງທີ່ຜິດປົກກະຕິ, ການກວດສອບບັນຊີລາຍຊື່ຕ້ອງຫ້າມ, ແລະ STR ພາຍໃນທະນາຄານໄທ. ຂົງເຂດຫຼັກ ທີ່ໄດ້ຮັບການປັບປຸງນັບຕັ້ງແຕ່ທີ່ໄດ້ຈັດເຂົ້າໃນບັນຊີເທົາແມ່ນ ການສ້າງ ແລະ ປັບປຸງລະບົບ KYC/CDD ແລະ ຄວາມອາດສາມາດໃນການບໍລິຫານບັນຊີລາຍຊື່ບຸກຄົນຕ້ອງຫ້າມ, ແກ້ໄຂຊ່ອງຫວ່າງການປະຕິບັດຕາມຂໍ້ກຳນົດທາງວິຊາການເບື້ອງຕົ້ນ.



ທະນາຄານກະຊິກອນໄທ

ການທີ່ອົງການ FATF ໄດ້ຈັດປະເທດໄທເຂົ້າໃນບັນຊີເທົາ ໃນປີ 2009 ກໍ່ໃຫ້ເກີດຜົນຮັບທີ່ສຳຄັນສາມຢ່າງ ຄື: ທະນາຄານກະສິກອນຖືກລະບຸວ່າ ມີຄວາມສ່ຽງສູງ ສົ່ງຜົນໃຫ້ມີການປັບໂຄງສ້າງການຊຳລະເງິນຂອງຄູ່ຮ່ວມງານ ແລະ ການເຮັດທຸລະກຳລະຫວ່າງປະເທດເພີ່ມຂຶ້ນ; ລູກຄ້າຕ້ອງປະເຊີນກັບຕົ້ນທຶນທີ່ສູງຂຶ້ນສຳລັບການໂອນເງິນລະຫວ່າງປະເທດ; ແລະ ທະນາ ຄານຕ້ອງແບກຫາບພາລະຄ່າໃຊ້ຈ່າຍຢ່າງຫຼວງຫຼາຍ ເຊິ່ງຈຳເປັນຕ້ອງມີການຍົກລະດັບລະບົບທີ່ສຳຄັນຫຼາຍຢ່າງ ເພື່ອປະຕິບັດໄດ້ຕາມມາດຕະ ຖານຂອງອົງການ FATF.

ເມື່ອຫວນຄືນຫຼັງເຫັນວ່າ ມາດຕະການ ທີ່ເຂັ້ມງວດເຫຼົ່ານີ້ ມີຄວາມຈຳເປັນ ແລະ ເປັນປະໂຫຍດຕໍ່ຄວາມພະຍາຍາມໃນການປາບປາມອາຊະຍາກຳຢ່າງມີປະສິດທິພາບ. ຂັ້ນຕອນ KYC ທີ່ສຳຄັນ ທີ່ນຳມາໃຊ້ປະກອບການກວດສອບລາຍຊື່ບຸກຄົນຕ້ອງຫ້າມ ເພື່ອປ້ອງກັນການເຮັດທຸລະກຳກັບບຸກຄົນ ທີ່ຖືກກຳນົດ ແລະ ການຈັດອັນດັບຄວາມສ່ຽງ ເພື່ອໃຫ້ສາມາດເພີ່ມທະວີການຕິດຕາມລູກຄ້າທີ່ມີຄວາມສ່ຽງສູງໃຫ້ໄດ້ດີຂຶ້ນ. ການສ້າງຕັ້ງລະບົບ AML-CFT/PF ທີ່ຄົບຖ້ວນ ປະກອບດ້ວຍຫຼາຍອົງປະກອບສຳຄັນຫຼາຍຢ່າງ ເຊັ່ນ: ເຕັກໂນໂລຊີການຈົດຈຳໃບໜ້າ, ຂັ້ນຕອນການຄັດກອງບັນຊີຕ້ອງຫ້າມ, ວິທີການຈັດອັນດັບຄວາມສ່ຽງ (ໂດຍເນັ້ນໃສ່ລູກຄ້າ ທີ່ມີຄວາມສ່ຽງສູງ), ຄວາມສາມາດໃນການຕິດຕາມທຸລະກຳ (ສຳລັບການລະບຸ ແລະ ການບໍລິຫານ STR), ແລະ ລະບົບລາຍງານທຸລະກຳສຳລັບການສົ່ງຂໍ້ມູນໄປຍັງເຈົ້າໜ້າທີ່ AML.

● **ພິທີກອນ:** ຂໍໃຫ້ທາງ BCEL ອະທິບາຍກ່ຽວກັບສິ່ງທ້າທາຍຫຼັກໆ ທີ່ BCEL ປະເຊີນຢູ່ໃນການຈັດຕັ້ງປະຕິບັດມາດຕະການ AML/CFT ທີ່ມີປະສິດທິພາບແມ່ນຫຍັງ ແລະ ສິ່ງທ້າທາຍເຫຼົ່ານີ້ໄດ້ຮັບການແກ້ໄຂແນວໃດ?

ມີຄວາມຄືບໜ້າໃນດ້ານການພັດທະນາລະບົບໃນ ສປປ ລາວ - ເຫັນໄດ້ຈາກການນຳໃຊ້ລະບົບຈັດຈຳໃບໜ້າໃນແພລດຟອມ 'BCEL One' - ແຕ່ຍັງຈຳເປັນຕ້ອງມີຄວາມພະຍາຍາມເພີ່ມຕື່ມອີກ ເພື່ອເຊື່ອມຕໍ່ຂ່ອງວ່າງນີ້ກັບລະບົບທີ່ທັນສະໄໝກວ່າ ເຊັ່ນ: ລະບົບໃນປະເທດໄທ. ປັດໄຈສຳຄັນສຳລັບຄວາມສຳເລັດໃນອະນາຄົດຄື ການໄດ້ຮັບການຮ່ວມມືທີ່ເຂັ້ມແຂງໃນລະດັບຊາດ ແລະ ການສະໜັບສະໜູນຢັ່ງເອົາໃຈໃສ່ ຈາກບັນດາຄູ່ຮ່ວມງານ ແລະ ອົງການຈັດຕັ້ງສາກົນ.

● **ພິທີກອນ:** ຂໍໃຫ້ທາງ ສະມາຄົມທະນາຄານໄທ ເວົ້າເຖິງສິ່ງທ້າທາຍຫຼັກ ທີ່ສະມາຄົມທະນາຄານໄທປະເຊີນໃນການປ້ອງກັນການຟອກເງິນແມ່ນຫຍັງ, ແລະ ທາງສະມາຄົມ ມີນະໂຍບາຍ ຫຼື ຂອບການເຮັດວຽກຫຍັງແດ່ ເພື່ອແກ້ໄຂບັນຫາເຫຼົ່ານັ້ນ?

ສະມາຄົມທະນາຄານໄທ

ໃນອະດີດ, ຄວາມສ່ຽງຫຼັກຂອງການຟອກເງິນໃນລະດັບປະເທດຂອງປະເທດໄທແມ່ນການຄ້າຂາຍຢາເສບຕິດ ແລະ ການສໍ້ລາດບັງຫຼວງ ໃນຂະນະທີ່ ກິດຈະກຳທາງອາຍາອື່ນໆມີຜົນກະທົບ ທີ່ຈຳກັດ. ເຖິງແມ່ນວ່າຈະມີຄວາມກ້າວໜ້າໃນການຕິດຕາມ ແລະ ເຝົ້າລະວັງກ່ຽວກັບທຸລະກຳທີ່ກ່ຽວຂ້ອງກັບການສໍ້ລາດບັງຫຼວງ, ແຕ່ກໍ່ຍັງມີຄວາມຈຳເປັນໃນການປັບປຸງຢ່າງຕໍ່ເນື່ອງ. ຕົວຢ່າງ, ການເກີດຂຶ້ນຂອງເຕັກໂນໂລຍີໃໝ່ໄດ້ນຳມາສູ່ກິດຈະກຳ ແລະ ທ່າອ່ຽງທາງອາຍາໃໝ່ ເຊັ່ນ: ການສໍ້ໂກງບາງປະເພດ, ການໃຊ້ຕົວແທນໃນການເປີດບັນຊີ, ແລະ ການແຮັກລະບົບ ເຊິ່ງຈຳເປັນຕ້ອງມີການກະກຽມຄວາມພ້ອມດ້ານເຕັກໂນໂລຍີທີ່ກ້າວໜ້າ. ອາຊະຍາກອນສະແດງໃຫ້ເຫັນເຖິງການປັບຕົວຢ່າງວ່ອງໄວ ແລະ ຄວາມສະຫຼາດ ເຊິ່ງມັກຈະກ້າວໜ້າກ່ວາວິທີການກວດຈັບ ທີ່ມີຢູ່ໃນປັດຈຸບັນ. ສະມາຄົມທະນາຄານໄທໄດ້ສະຫຼຸບວ່າ ສິ່ງທ້າທາຍທີ່ສຳຄັນຢ່າງຕໍ່ເນື່ອງແມ່ນການສົ່ງເສີມການຮ່ວມມືຈາກຂະແໜງການທີ່ບໍ່ແມ່ນທະນາຄານ, ລວມທັງຂະແໜງ DNFBPs ແລະ ຂະແໜງການເງິນດິຈິຕອນ ທີ່ເກີດຂຶ້ນໃໝ່.

ຄຳຄິດເຫັນ, ຖາມ-ຕອບ ຕໍ່ເວທີເສວະນາ

● **ຄຳຖາມ ທີ 1** (ຈາກສານປະຊາຊົນ ແຂວງຫຼວງພະບາງ): ໃນແງ່ຄວາມຮັບຜິດຊອບຂອງທະນາຄານຕໍ່ລູກຄ້າຂອງຕົນ, ຖ້າຫາກເງິນຫາຍໄປຈາກບັນຊີຂອງລູກຄ້າຢ່າງກະທັນຫັນ, ມີກົນໄກໃດແດ່ທີ່ຈະຕິດຕາມທຸລະກຳ, ແລະ ໃຜເປັນຜູ້ຮັບຜິດຊອບຕໍ່ການສູນເສຍດັ່ງກ່າວ?

ໃນການຕອບຄຳຖາມກ່ຽວກັບເງິນທີ່ຫາຍໄປ, BCEL ຢືນຢັນວ່າ ທະນາຄານຕ້ອງຮັບຜິດຊອບ ຖ້າເງິນທີ່ຝາກໄວ້ຫາຍສາບສູນຢ່າງກະທັນຫັນ. ສະມາຄົມທະນາຄານໄທໄດ້ຊີ້ແຈງວ່າ ຄວາມຮັບຜິດຊອບແມ່ນຂຶ້ນກັບພຶດຕິການສະເພາະຂອງແຕ່ລະກໍລະນີ ໂດຍລະບຸວ່າ ສຳລັບບັນຊີ ທີ່ບໍ່ມີການເຄື່ອນໄຫວ ແລະ ເງິນຫາຍໄປຢ່າງກະທັນຫັນ, ທະນາຄານຈະຕ້ອງໃຫ້ການຊົດເຊີຍ. ຢ່າງໃດກໍຕາມ, ໃນກໍລະນີທີ່ກ່ຽວຂ້ອງກັບການເຮັດທຸລະກຳໃນໂທລະສັບມືຖື, ຄວນມີການສອບສວນຫາສາເຫດ ເພື່ອພິສູດວ່າລູກຄ້າເປັນຜູ້ຮັບຜິດຊອບ ຫຼື ບໍ່. ການໂຈມຕີແບບ phishing ຈະຖືກປະຕິບັດແຕກຕ່າງອອກໄປ ໂດຍສະເພາະຫາກກ່ຽວຂ້ອງກັບລະບົບການຈັດຈຳໃບໜ້າ ເຊິ່ງອາດຈະຕ້ອງດຳເນີນການທາງສານ. ທະນາຄານໄທໄດ້ລະບຸວ່າ ຖ້າລູກຄ້າໄດ້ດຳເນີນການດ້ວຍຕົນເອງ, ສຸດທ້າຍແລ້ວ ພວກເຂົາຕ້ອງຮັບຜິດຊອບຕໍ່ການສູນເສຍ ທີ່ເກີດຂຶ້ນ.



● **ຄຳຖາມ ທີ 2** (ທ່ານ ພູໂຂງ ສີສຸລາດ, DTL, MOFA): ມື້ວານນີ້ ໄດ້ມີການກ່າວເຖິງການຖືກຈັດໃນບັນຊີເທົ່າ ອາດຫຼຸດກະແສການລົງທຶນໄດ້ເຖິງ 7%. ຈາກປະສົບການຂອງທ່ານ, ທ່ານໄດ້ສັງເກດເຫັນວ່າ ການລົງທຶນຫຼຸດລົງ ພາຍຫຼັງໄດ້ຖືກຈັດໃນບັນຊີດັ່ງກ່າວບໍ່?

ເອກອັກຄະລັດຖະທູດແຫ່ງລາຊະອານາຈັກໄທປະຈຳ ສປປ ລາວ ໄດ້ໃຫ້ຂໍ້ສັງເກດວ່າ ສຳລັບປະເທດໄທ, ການລົງທຶນໂດຍກົງຈາກຕ່າງປະເທດທັງໝົດບໍ່ໄດ້ຮັບຜົນກະທົບໂດຍກົງຈາກບັນຊີເທົ່າ. ທ່ານນາງໄດ້ອະທິບາຍເພີ່ມຕື່ມວ່າ ການຕັດສິນໃຈການລົງທຶນໂດຍກົງຈາກຕ່າງປະເທດ (FDI) ແມ່ນອີງໃສ່ປັດໃຈຫຼາຍຢ່າງ ທີ່ປະເມີນສະພາບແວດລ້ອມທາງທຸລະກິດຂອງປະເທດນັ້ນໆ ເຊັ່ນ: ສະພາບເສດຖະກິດໂດຍລວມ, ຄວາມພ້ອມຂອງລະບົບປະຕູດຽວ (Single Window), ຄວາມເຊື່ອໝັ້ນໃນຄວາມສາມາດຂອງລັດຖະບານໃນການອອກຈາກບັນຊີເທົ່າ, ແລະ ຄວາມສະດວກໃນການດຳເນີນທຸລະກິດ.

ສະມາຄົມທະນາຄານໄທລາຍງານວ່າ ທະນາຄານຕ່າງໆບໍ່ໄດ້ເກັບກຳຂໍ້ມູນສະເພາະກ່ຽວກັບເລື່ອງນີ້ໃນເວລາ ທີ່ໄດ້ຖືກຈັດເຂົ້າໃນບັນຊີ ເທົາ. ເຖິງຢ່າງໃດກໍ່ຕາມ, ເຂົາເຈົ້າໄດ້ເນັ້ນໜັກເຖິງປັດໄຈທີ່ສຳຄັນຢ່າງໜຶ່ງ ຄື: ການບໍ່ປະຕິບັດຕາມຂໍ້ຮຽກຮ້ອງຂອງຄູ່ຮ່ວມງານອາດຈະ ເຮັດໃຫ້ຄູ່ຮ່ວມງານນັ້ນຢຸດການເຮັດວຽກກັບປະເທດໄທ, ໂດຍບໍ່ຄຳນຶງເຖິງຜົນກະທົບໂດຍກົງຈາກການລົງທຶນໂດຍກົງຈາກຕ່າງປະເທດ. ນອກຈາກນີ້, ເຂົາເຈົ້າຍັງໄດ້ລະບຸໃຫ້ເຫັນເຖິງຄວາມຫຍຸ້ງຍາກທີ່ເພີ່ມຂຶ້ນໃນການໃຫ້ເງິນກູ້ແກ່ບັນດາປະເທດ ທີ່ມີຄວາມສ່ຽງສູງຍ້ອນ ຄວາມບໍ່ເຕັມໃຈຂອງຄູ່ຮ່ວມງານ ເຊິ່ງເປັນສາເຫດໃຫ້ມີການປະຕິເສດເງິນກູ້ ຫຼື ຈຳນວນເງິນກູ້ ທີ່ຫຼຸດລົງ. ທະນາຄານກະຊິກອນໃຫ້ ຄວາມເຫັນຕື່ມວ່າ ການຖືກຈັດເຂົ້າໃນບັນຊີເທົາ ຈະສົ່ງຜົນກະທົບຕໍ່ປະລິມານທຸລະກຳປະຈຳປີທີ່ທະນາຄານສາມາດຈັດການໄດ້.



● **ຄຳຖາມ ທີ** (ທ່ານ ສັກປະເສີດ ສີສຸກ, MOFA): ນັກລົງທຶນພົບສິ່ງທ້າທາຍຫຍັງ ແດ່ໃນປະເທດໄທໃນຊ່ວງໄລຍະເວລາຖືກຈັດຢູ່ໃນບັນຊີສີເທົາ ແລະ ການເຮັດທຸລະ ກຳລະຫວ່າງ ມີພັດທະນາການ ແນວໃດກ່ອນ ແລະ ຫຼັງການຈັດເຂົ້າໃນບັນຊີເທົາ?

ທະນາຄານໄທໄດ້ອະທິບາຍວ່າ ເຂົາເຈົ້າໄດ້ປະເມີນທຸລະກຳເປັນແຕ່ລະລາຍໂດຍ ພິຈາລະນາປັດໄຈຕ່າງໆ ເຊັ່ນ: ໂປຣໄຟລ໌ຂອງບຸກຄົນ ຫຼື ລັກສະນະຂອງທຸລະກິດ. ການພິຈາລະນາລວມເຖິງວ່າ ທຸລະກິດດັ່ງກ່າວຈັດຢູ່ໃນໝວດ ທີ່ມີຄວາມສ່ຽງສູງ ຫຼື ບໍ່ ແລະ ຈຸດປະສົງຂອງທຸລະກຳ. BCEL ຍັງຊີ້ໃຫ້ເຫັນວ່າ ການຂາດການດຳເນີນ CDD ຫຼື KYC ຢ່າງລະອຽດໃນທຸລະກຳ ອາດນຳໄປສູ່ການດຳເນີນຂັ້ນຕອນ ທີ່ແກ່ ຍາວເວລາດົນຂຶ້ນ.





ສະຫຼຸບຜົນການປະຊຸມ - ສະຫຼຸບ, ຜົນໄດ້ຮັບ ແລະ ບາດກ້າວຕອນຕໍ່ໄປ

ເຖິງແມ່ນວ່າ ເສັ້ນທາງຂ້າງໜ້າຈະມີຄວາມທ້າທາຍສູງ ແລະ ຕ້ອງໃຊ້ຄວາມພະຍາຍາມຢ່າງຕໍ່ເນື່ອງເປັນເວລາຫຼາຍປີເພື່ອແກ້ໄຂບັນຫາຕ່າງໆ ທີ່ໄດ້ລະບຸໄວ້ຫຼັງຈາກ POPR, ແຕ່ກໍ່ມີບູລິມະສິດສຳຄັນ ທີ່ຕ້ອງໃຫ້ຄວາມສົນໃຈເປັນພິເສດ. ບົດຮຽນຈາກປະເທດອື່ນໆສະແດງໃຫ້ເຫັນວ່າ ວິທີການທີ່ຄອບຄຸມ ບໍ່ວ່າຈະຢູ່ໃນຂອບເວລາໃດກໍ່ຕາມ, ແມ່ນສິ່ງຈຳເປັນເພື່ອແກ້ໄຂບັນຫາຕ່າງໆ ຕາມລາຍການທີ່ໄດ້ກຳນົດ ເພື່ອຮັບມືກັບສິ່ງທ້າທາຍເຫຼົ່ານີ້ຢ່າງມີປະສິດທິພາບ, ພວກເຮົາຕ້ອງມີສະຕິ, ຍອມຮັບຄວາມເປັນຈິງ ແລະ ມີຄວາມມຸ່ງໝັ້ນຕໍ່ບົດຮຽນທີ່ສຳຄັນ ທີ່ໄດ້ຮັບຈາກກອງປະຊຸມນີ້:

- **ຄວາມເປັນເອກະພາບ** “ແນວທາງແບບອົງລວມຂອງລັດຖະບານ” ຮຽກຮ້ອງໃຫ້ມີການຮ່ວມມື ແລະ ຄວາມຮັບຜິດຊອບຮ່ວມກັນໃນທົ່ວທຸກຂົງເຂດພາກລັດ;
- **ການວາງແຜນຍຸດທະສາດ** ທີ່ກຳນົດບູລິມະສິດໄວ້ຢ່າງຊັດເຈນສຳລັບການຈັດຕັ້ງປະຕິບັດມາດຕະການ, ການສ້າງຄວາມເຂັ້ມແຂງໃຫ້ແກ່ການບັງຄັບໃຊ້ກົດໝາຍ, ການຄຸ້ມຄອງ ແລະ ການດຳເນີນຄະດີ;
- **ເນັ້ນໃສ່ການຈັດຕັ້ງປະຕິບັດ ແລະ ການບັນລຸຜົນໄດ້ຮັບທີ່ຢ່າງເປັນຮູບປະທຳ,** ນອກເໜືອຈາກການປະຕິບັດຕາມທາງດ້ານວິຊາການເທົ່ານັ້ນ;
- ເນັ້ນໃຫ້ເຫັນຢ່າງຊັດເຈນ ເຖິງ**ຕົວຊີ້ບອກທີ່ສຳຄັນຂອງອົງການ FATF** ເຊັ່ນ: ຄະນະກຳມະການເຮັດວຽກ ແລະ ການປະສານງານໃນການລາຍງານ;
- ການ**ຮ່ວມມືພາຍໃນ ແລະ ສາກົນ** ທີ່ເຂັ້ມແຂງ ສອດຄ່ອງກັບຄຳໝັ້ນສັນຍາໃນລະດັບພາກພື້ນ ແລະ ລະດັບໂລກ;
- **ການຈັດສັນຊັບພະຍາກອນ**ແບບຍຸດທະສາດ ອາດຈະຕ້ອງມີການຈັດສັນຄືນໃໝ່ ເພື່ອສະໜັບສະໜູນຂະບວນການທີ່ສຳຄັນນີ້;



ທ່ານ Tom Hansen, ຊ່ຽວຊານ ILSTA

ໃຊ້ຄວາມຊ່ວຍເຫຼືອຈາກຜູ້ຊ່ຽວຊານເພື່ອໃຫ້ໄດ້ຮັບຂໍ້ມູນແບບລົງເລິກ ແລະ ປະສົບການຂອງເຂົາເຈົ້າ.





ຄຳກ່າວປິດ

ສະຖານທູດໄທມີຄວາມຍິນດີ ແລະ ເປັນກຽດທີ່ໄດ້ຮ່ວມມືກັບ ສະຖາບັນ ILSTA ແລະ ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງ ສຳລັບກອງ ປະຊຸມທີ່ສຳຄັນນີ້ ເຊິ່ງມີຈຸດປະສົງເພື່ອສ້າງຄວາມເຂັ້ມແຂງຂີດ ຄວາມອາດສາມາດຂອງ ສປປ ລາວ ໃນຂົງເຂດທີ່ສຳຄັນກ່ຽວກັບ AML-CFT. ມີຜູ້ເຂົ້າຮ່ວມງານຢ່າງຫຼວງຫຼາຍ ຫຼາຍກວ່າ 200 ທ່ານ ແລະ ການລົງທະບຽນ ທີ່ມີໜາກຜົນ ເປັນສິ່ງສະແດງເຖິງຄວາມ ສຳເລັດຂອງກອງປະຊຸມໃນຄັ້ງນີ້. ໃນຖານະທີ່ເປັນປະເທດ ເພື່ອນບ້ານ ທີ່ໃກ້ຊິດ ແລະ ເປັນຄູ່ຮ່ວມພັດທະນາ ທີ່ມີຄວາມໝັ້ນ ໝັ້ນ, ປະເທດໄທພ້ອມແລ້ວ ທີ່ຈະສະເໜີການຮ່ວມມື ແລະ ການ ສະໜັບສະໜູນຢ່າງຕໍ່ເນື່ອງແກ່ ສປປ ລາວ ຕໍ່ທຸກບາດກ້າວຂອງ ເສັ້ນທາງໄປສູ່ການຫຼຸດພົ້ນອອກຈາກບັນຊີເທົາຂອງອົງການ FATF. ກອງປະຊຸມໃນເທື່ອນີ້ ໄດ້ນຳເອົາປະສົບການຂອງປະເທດ ໄທໃນການແກ້ໄຂບັນຫາ ເພື່ອຫຼຸດພົ້ນອອກຈາກບັນຊີເທົາ ມາແລກປ່ຽນ ແລະ ກອງປະຊຸມຄັ້ງນີ້ ກໍ່ເປັນໂອກາດເທື່ອທີສາມ ທີ່ ສະຖານທູດໄທໄດ້ໃຫ້ການສະໜັບສະໜູນຢ່າງຕັ້ງໜ້າແກ່ ສປປ ລາວ ໃນການເສີມສ້າງພູມມີທັດດ້ານ AML-CFT ຂອງໄທ.

ສະຖານທູດໄທຮັບຮູ້ເຖິງຄວາມສຳຄັນ ແລະ ຄວາມຈຳເປັນຍິ່ງ ສຳລັບ ສປປ ລາວ ໃນການເພີ່ມທະວີຂີດຄວາມອາດສາມາດຂອງ ຕົນໃນຂົງເຂດນີ້. ການຖືກຈັດໃນບັນຊີສີເທົາມີຄວາມສ່ຽງສູງ ລວມ ທັງຕົ້ນທຶນໃນການເຮັດທຸລະກຳທີ່ເພີ່ມຂຶ້ນ ແລະ ຄວາມຊັກຊ້າໃນ ການດຳເນີນການ ດັ່ງທີ່ໄດ້ຍົກໃຫ້ເຫັນມາແລ້ວກ່ອນໜ້ານີ້. ດ້ວຍ ຄວາມເຊື່ອໝັ້ນຢ່າງແຮງກ້າໃນການນຳພາຂອງຄະນະກຳມະການ ປະສານງານແຫ່ງຊາດກ່ຽວກັບການຕ້ານການຟອກເງິນ, ໄທເຊື່ອ ວ່າ ສປປ ລາວ ຈະແກ້ໄຂບັນຫານີ້ໄດ້ຢ່າງສຳເລັດຜົນ ແລະ ບັນລຸ ເປົ້າໝາຍໃນການອອກຈາກບັນຊີສີເທົາໃນອະນາຄົດອັນໃກ້ນີ້.



ພານະທ່ານ ນາງ ມໍລະກົດ ສະຫວັດດີ,
ເອກອັກຄະລັດຖະທູດແຫ່ງ ຣາຊະອານາຈັກໄທ
ປະຈຳ ສປປ ລາວ

ການເຂົ້າຮ່ວມກອງປະຊຸມລະດັບຊາດຂອງຄະນະຜູ້ແທນລະດັບ ສູງຈາກ ສປປ ລາວ ສະແດງໃຫ້ເຫັນຢ່າງຈະແຈ້ງເຖິງຄວາມມຸ້ງ ໝັ້ນທາງການເມືອງອັນແຮງກ້າຂອງລັດຖະບານໃນການອອກຈາກ ບັນຊີເທົາຂອງອົງການ FATF ແລະ ຮັບປະກັນການປະຕິບັດຕາມ ມາດຕະຖານຂອງອົງການ FATF. ເປັນທີ່ຈະແຈ້ງວ່າ ການປະຕິບັດຕາມມາດຖານຂອງອົງການ FATF ກ່ຽວກັບການ ຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ ການຮ້າຍ ຢ່າງມີປະສິດທິພາບນັ້ນ ຈຳເປັນຕ້ອງມີວິທີການທີ່ ຄົບຖ້ວນ ແລະ ຮອບດ້ານຈາກທຸກພາກສ່ວນຂອງລັດຖະບານ ແລະ ສະຖາບັນ ILSTA ພ້ອມແລ້ວທີ່ຈະໃຫ້ການຊ່ວຍເຫຼືອດ້ານ ວິຊາການທີ່ຈຳເປັນ ເພື່ອສະໜັບສະໜູນຄວາມພະຍາຍາມນີ້. ກອງ ປະຊຸມລະດັບຊາດເປັນເວທີໃນການສົນທະນາແລກປ່ຽນ ປະສົບການຢ່າງຫ້າວຫັນ, ໂດຍເນັ້ນໜັກເຖິງຄວາມສົນໃຈ ຢ່າງຫຼວງຫຼາຍຕໍ່ບັນຫານີ້ໃນ ສປປ ລາວ ແລະ ພາກພື້ນ ຜ່ານເວທີ ເສວະນາ ທີ່ມີໜ່ວຍງານ FIUs ແລະ ພາກເອກະຊົນ ລວມທັງ ທະນາຄານຕ່າງໆເຂົ້າຮ່ວມ. ທ່ານ Philippart ໄດ້ສະຫຼຸບໂດຍ ເນັ້ນໜັກເຖິງຄວາມສຳຄັນພື້ນຖານຂອງການຮ່ວມມືລະຫວ່າງ ປະເທດ ແລະ ພາກພື້ນ, ບໍ່ພຽງແຕ່ໃນບໍລິບົດຂອງ AML-CFT ເທົ່ານັ້ນ ແຕ່ຍັງລວມເຖິງໃນຂອບເຂດກ້ວາງກວ່ານັ້ນ ຄືຄວາມ ກ້າວໜ້າຂອງການປົກຄອງທີ່ດີ ແລະ ລັດແຫ່ງກົດໝາຍ ອີກດ້ວຍ.



ທ່ານ ຣິຊາດ ຟິລິບປາດ,
ປະທານ ສະຖາບັນ ILSTA



ທ່ານ ນາງ ຂັນແກ້ວ ຫຼ້າມະນີເງົາ
ຮອງຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ



ທ່ານ ຄຳເພັດ ສົມວໍລະຈິດ,
ຮອງຫົວໜ້າໄອຍະການ, ອົງການໄອຍະການປະຊາຊົນສູງສຸດ ຂອງ ສປປ ລາວ

ທ່ານ ສົມວໍລະຈິດ ໄດ້ສະແດງຄວາມຂອບໃຈຕໍ່ ທ່ານ Richard Philippart ແລະ ສະຖາບັນ ILSTA ສຳລັບການສະໜັບສະໜູນຢ່າງຕໍ່ເນື່ອງໃຫ້ແກ່ ອົງການໄອຍະການປະຊາຊົນ ຂອງລາວ ເຊິ່ງ ກອງປະຊຸມລະດັບຊາດໃນເທື່ອນີ້ ໄດ້ສະແດງໃຫ້ເຫັນຄວາມສຳເລັດອີກຄັ້ງ. ທ່ານຍັງໄດ້ສະແດງຄວາມຂອບໃຈຕໍ່ສະຖານທູດໄທ ແລະ ບັນດາຊ່ຽວຊານ ທີ່ເຂົ້າຮ່ວມ ທີ່ໄດ້ແບ່ງປັນຄວາມຮູ້ ແລະ ປະສົບການທີ່ລ້ຳຄ່າໃນການສະໜັບສະໜູນຄວາມພະຍາຍາມຂອງ ສປປ ລາວ ໃນການຫຼຸດພົ້ນອອກຈາກບັນຊີເທົາຂອງອົງການ FATF.

ໃນອະນາຄົດ, ທ່ານ ຄຳເພັດ ສົມວໍລະຈິດ ໄດ້ຊຸກຍູ້ໃຫ້ໜ່ວຍງານ ທີ່ກ່ຽວຂ້ອງທັງໝົດຂອງລາວ, ໂດຍສະເພາະແມ່ນທະນາຄານແຫ່ງ ສປປ ລາວ ແລະ ອົງການໄອຍະການປະຊາຊົນສູງສຸດ, ໃຊ້ປະໂຫຍດຢ່າງເຕັມທີ່ສຳລັບຂໍ້ມູນ, ຄວາມຮູ້ ແລະ ຄວາມເຂົ້າໃຈ ທີ່ໄດ້ຮັບໃນກອງປະຊຸມແຫ່ງຊາດຄັ້ງນີ້. ທ່ານໄດ້ເນັ້ນໜັກເຖິງຄວາມຈຳເປັນ ບໍ່ພຽງແຕ່ການເຜີຍແຜ່ຄວາມຮູ້ເທົ່ານັ້ນ ແຕ່ຍັງຕ້ອງມີການວາງແຜນ ແລະ ການດຳເນີນການຢ່າງຈິງຈັງ ພາຍໃຕ້ການຊີ້ນຳ-ນຳພາຂອງຄະນະກຳມະການປະສານງານແຫ່ງຊາດກ່ຽວກັບການຕ້ານການຟອກເງິນ.

ທ່ານສົມວໍລະຈິດ ຍັງໄດ້ເນັ້ນໜັກເຖິງຄວາມຮັບຜິດຊອບອັນສຳຄັນຂອງເຈົ້າໜ້າທີ່ທຸກຂັ້ນໃນການບັງຄັບໃຊ້ມາດຕະການທາງກົດໝາຍ ແລະ ລະບຽບການທີ່ຈຳເປັນ. ທ່ານໄດ້ກ່າວວ່າ ການດຳເນີນການດັ່ງກ່າວ ຈະເປັນການປະກອບສ່ວນອັນໃຫຍ່ຫຼວງໃນການສ້າງຄວາມເຊື່ອໝັ້ນໃຫ້ກັບປະຊາຊົນ ແລະ ນັກລົງທຶນໃນອະນາຄົດ. ສຸດທ້າຍນີ້, ທ່ານສົມວໍລະຈິດ ໄດ້ສະແດງຄວາມຂອບໃຈອີກຄັ້ງຕໍ່ສະຖາບັນ ILSTA ແລະ ລັດຖະບານຂອງປະເທດລຸກຊຳບວກ ຕໍ່ການສະໜັບສະໜູນອັນຍາວນານ ແລະ ສະແດງຄວາມຫວັງວ່າ ທັງສອງຝ່າຍຈະຍັງສືບຕໍ່ມຸ້ງໝັ້ນຢ່າງຕໍ່ເນື່ອງໃນອະນາຄົດ.

ເນື້ອໃນ

ວັນທີ 25 ມີນາ 2025	
ບົດກ່າວຂອງບຸກຄົນສຳຄັນ	
ອົງການໄອຍະການປະຊາຊົນສູງສຸດ ຂອງ ສປປ ລາວ (SPP)	ທ່ານ ຄຳເພັດ ສົມວໍລະຈິດ, ຮອງຫົວໜ້າ ອົງການໄອຍະການປະຊາຊົນສູງສຸດ
ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ປະທານ ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ	ພະນະທ່ານ ສະເໜີມໄຊ ກົມມະສິດ
ສະຖານທູດລຸກຊຳບວກ ປະຈຳ ສປປ ລາວ	ພະນະທ່ານ ໂທມາດສ ແລມມາຣ໌, ອຸປະທູດ
ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ (ILSTA)	ທ່ານ ອີຊາດ ຟີລິບປາດ, ປະທານ ແລະ ຫົວໜ້າສະຖາບັນ
ຫົວຂໍ້ນຳສະເໜີ	
ພາລະບົດບາດຂອງອົງການຕ້ານການຟອກເງິນສາກົນ (FATF) ແລະ ຄະນະທົບທວນການຮ່ວມມືສາກົນ (ICRG) ຂໍ້ກຳນົດສຳລັບການລາຍງານ ຂອງ ຄະນະທົບທວນການຮ່ວມມືສາກົນ (ICRG) ຜົນກະທົບທາງເສດຖະກິດທີ່ອາດຈະເກີດຂຶ້ນ ເນື່ອງຈາກການຖືກຈັດເຂົ້າໃນບັນຊີ ເທົາ “Greylisting” ຂອງ ອົງການ FATF	ຊ່ຽວຊານສະຖາບັນ ILSTA ທ່ານ Tom Hansen ທ່ານ Ian Matthews ທ່ານ Alastair Bland ທ່ານນາງ Cecilia Marian
ການຈັດການ-ຄຸ້ມຄອງຂະບວນການຂອງຄະນະທົບທວນການຮ່ວມມືສາກົນ(I-CRG Processes) ແລະ ການລາຍງານ ສຳລັບ ສປປ ລາວ	ທ່ານນາງ ວິນຄຳ ລຸນທອນ, ຮັກສາການ ຫົວໜ້າ ສຳນັກງານຂໍ້ມູນຕ້ານການຟອກເງິນ
ເວທີເສວະນາ: “ໜ່ວຍງານນຳພາວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງບັນດາປະເທດ ແລະ ບົດຮຽນທີ່ຖອດຖອນໄດ້ ໃນລະຫວ່າງຂະບວນການຂອງ ICRG”	ພິທີກອນ: ຊ່ຽວຊານສະຖາບັນ ILSTA - ທ່ານ Tom Hansen ຜູ້ຮ່ວມເສວະນາ: ທ່ານ Heng Bomakara, ຫົວໜ້າໜ່ວຍງານຂ່າວກອງທາງການເງິນ ປະເທດກຳປູເຈຍ, ທ່ານ ສັຈໄຊ ແສງເສໂຍ, ສຳນັກງານປ້ອງກັນ ແລະ ປາບປາມການຟອກເງິນ, ປະເທດໄທ ທ່ານ Arnold Frane, ໜ່ວຍງານຂ່າວກອງທາງການເງິນ ປະເທດ ຟີລິບປິນ ທ່ານ ທິບສະຫວັນ ວົງພະນະຄອນ, ສຳນັກງານຂໍ້ມູນຕ້ານການຟອກເງິນ, ສປປ ລາວ.
“ຄວາມສຳຄັນຂອງການຮ່ວມມືລະຫວ່າງປະເທດທາງອາຍາ ຕໍ່ການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍທີ່ມີປະສິດທິຜົນ” ການກູ້ຄືນຊັບສິນຈາກການກໍ່ອາຊະຍາກຳ, ການຮ່ວມມືແບບເປັນທາງການ ແລະ ແບບບໍ່ເປັນທາງການ (ແຜນດຳເນີນງານ-ຜົນຮັບທັນທີ IO. 7 ແລະ IO. 8)	ທ່ານ ຈຸມພົນ ພັນສຳອິດ, ຮອງຫົວໜ້າສຳນັກງານໄອຍະການສູງສຸດ ແຫ່ງປະເທດໄທ
ວັນທີ 26 ມີນາ 2025	
ພາກແບ່ງຫ້ອງປະຊຸມ **ຫົວຂໍ້: ການດຳເນີນການຕາມແຜນດຳເນີນງານຂອງ ICRG ແລະ ການຈັດຕັ້ງປະຕິບັດທີ່ມີປະສິດທິຜົນ**	
ແຜນດຳເນີນງານ ລາຍການທີ 3.1 a) b) c) ແລະ 4.1: ການຈັດຕັ້ງປະຕິບັດການຄວບຄຸມວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ແຜນງານສຳລັບ ສະຖາບັນການເງິນ ແລະ ສະຖາບັນທຸລະກິດ ແລະ ວິຊາຊີບທີ່ບໍ່ແມ່ນທາງການເງິນ (DNFBPs)	ຊ່ຽວຊານສະຖາບັນ ILSTA: ທ່ານ Tom Hansen ແລະ ທ່ານ Alastair Bland

ແຜນດຳເນີນງານ ລາຍການທີ 6.1 a) b) c) d) ຂໍ້ມູນຂ່າວກອງທາງດ້ານການເງິນ ແລະ ແຜນດຳເນີນງານ ລາຍການທີ 7.1 / 7.2 ການບັງຄັບໃຊ້ກົດໝາຍ	ຊ່ຽວຊານສະຖາບັນ ILSTA: ທ່ານ Ian Matthews
ແຜນດຳເນີນງານ ລາຍການທີ 8.1 ແລະ 8.2 ການຍຶດຊັບ ແລະ ການດຳເນີນຄະດີ, ການລັກລອບຂົນເງິນຂ້າມແດນ ແລະ ການຮ່ວມມືລະຫວ່າງປະເທດທາງອາຍາ	ຊ່ຽວຊານສະຖາບັນ ILSTA: ທ່ານ Tom Hansen
ແຜນດຳເນີນງານ ລາຍການທີ 11.2 ການຄຸ້ມຄອງສະຖາບັນທາງການເງິນ ແລະ ສະຖາບັນທຸລະກິດ ແລະ ວິຊາຊີບທີ່ບໍ່ແມ່ນທາງການເງິນ (DNFBPs) ກ່ຽວກັບ ການປະຕິບັດພັນທະການລົງໂທດທາງການເງິນຕາມເປົ້າໝາຍທີ່ຖືກກຳນົດ ແລະ ການສະໜອງທຶນໃຫ້ແກ່ການແຜ່ຂະຫຍາຍອາວຸດທຳລາຍລ້າງສູງ ແລະ ແຜນດຳເນີນງານ ລາຍການທີ 1.1: ການລະບຸຄວາມສ່ຽງດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ	ຊ່ຽວຊານສະຖາບັນ ILSTA: ທ່ານ Ian Matthews ແລະ ທ່ານນາງ Cecilia Marian
ຫົວຂໍ້ການນຳສະເໜີ	
ຂະບວນການຮ່ວມມືລະຫວ່າງປະເທດ ທາງອາຍາ ຂອງ ສປປ ລາວ	ທ່ານ ນາງ ວິໄລສິນ ແດນທັນສາ, ຮອງຫົວໜ້າກົມແຜນການ ແລະ ການຮ່ວມມືກັບຕ່າງປະເທດ, ອົງການໄອຍະການປະຊາຊົນສູງສຸດ
ການຟອກເງິນ, ການຮິບຊັບທາງແພ່ງ ແລະ ການດຳເນີນຄະດີອາຍາທີ່ກ່ຽວຂ້ອງ	ທ່ານ ນັດ ນາມິທໄຊຍະທັມ, ໄອຍະການພາກຄະດີຟອກເງິນ ແລະ ການຮິບຊັບສິນ, ສຳນັກງານໄອຍະການສູງສຸດ ແຫ່ງປະເທດໄທ, ທ່ານ ທານິນ ປຣາດິດ, ໄອຍະການ ປະຈຳ ສຳນັກງານໄອຍະການສູງສຸດ ແຫ່ງປະເທດໄທ
ເວທີເສວະນາ: ປະສົບການຂອງປະເທດໄທ ຜົນກະທົບຂອງ “ບັນຊີເທົ່າ” ຕໍ່ພາກທະນາຄານ	ພິທີກອນ: ພະນະທ່ານນາງ ມໍລະກົດ ສີສະຫວັດ, ເອກອັກຄະລັດຖະທູດໄທ ປະຈຳ ສປປ ລາວ ຜູ້ຮ່ວມເສວະນາ: ທ່ານ ພັດທຣະວຸດ ກອນສົມບັດ, ຮອງປະທານຜູ້ອາວຸໂສ ດ້ານການຄວບຄຸມ ແລະ ຕິດຕາມຄວາມສ່ຽງດ້ານການຟອກເງິນ, ທະນາຄານໄທພານິດ ທັງເປັນຕົວແທນໃຫ້ແກ່ ສະມາຄົມທະນາຄານໄທ ທ່ານ ໄພສານ ວໍຣະເສດສິຣິ, ຮອງກຳມະການຜູ້ຈັດການອາວຸໂສຂອງ ທະນາຄານກະຊິກອນໄທ ທ່ານ ສົມປະສົງ ໂພທິສານ, ຫົວໜ້າພະແນກຄວບຄຸມຄວາມສ່ຽງ ແລະ ການຕ້ານການຟອກເງິນ, ທະນາຄານການຄ້າຕ່າງປະເທດ ລາວ ມະຫາຊົນ.
ພາກການປະຊຸມໃຫຍ່ສຸດທ້າຍ	
ສະຫຼຸບ-ສັງລວມກອງປະຊຸມ “ຂໍ້ສະຫຼຸບລວມ, ຜົນຮັບ ແລະ ບາດກ້າວຕໍ່ໄປ”	ຊ່ຽວຊານສະຖາບັນ ILSTA: ທ່ານ Tom Hansen
ກ່າວປິດກອງປະຊຸມ	ພະນະທ່ານນາງ ມໍລະກົດ ສີສະຫວັດ, ເອກອັກຄະລັດຖະທູດໄທ ປະຈຳ ສປປ ລາວ ທ່ານ ຣິຊາດ ຟິລິບປາດ, ປະທານ ແລະ ຫົວໜ້າສະຖາບັນ ILSTA ທ່ານ ຄຳເພັດ ສົມວໍລະຈິດ, ຮອງຫົວໜ້າ ອົງການໄອຍະການປະຊາຊົນສູງສຸດ
ເອກະສານຊ້ອນທ້າຍ	
ຕາຕະລາງຄຳອະທິບາຍອັກສອນຫຍໍ້	

ເອກະສານຊ້ອນທ້າຍ

ຕາຕະລາງອະທິບາຍຄຳສັບຫຍໍ້

AML	ການຕ້ານການຟອກເງິນ
AMLC	ສະພາທີ່ປຶກສາຕ້ານການຟອກເງິນຂອງຟີລິບປິນ
AMLIO	ສຳນັກງານຂໍ້ມູນຕ້ານການຟອກເງິນ, ທະນາຄານແຫ່ງ ສປປ ລາວ
AMLO	ສຳນັກງານປ້ອງກັນ ແລະ ປາບປາມການຟອກເງິນຂອງໄທ
APG	ກຸ່ມຕ້ານການຟອກເງິນປະຈຳພາກພື້ນອາຊີ-ປາຊີຟິກ
CAFIU	ໜ່ວຍງານຂໍ້ມູນຂ່າວກອງທາງການເງິນກຳປູເຈຍ
CDD	ການຊອກຮູ້ລາຍລະອຽດຂອງລູກຄ້າ
CFT	ການຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ
DD	ການຊອກຮູ້ລາຍລະອຽດ
DNFBPs	ສະຖາບັນທີ່ບໍ່ນອນໃນຂະແໜງການເງິນ
FATF	ອົງການຕ້ານຟອກເງິນສາກົນ
FDI	ການລົງທຶນໂດຍກົງຂອງຕ່າງປະເທດ
FIUs	ໜ່ວຍງານຂ່າວກອງທາງການເງິນ
FSRB	ອົງກອນພາກພື້ນຂອງອົງການ FATF
ICRG	ກຸ່ມທົບທວນການຮ່ວມມືລະຫວ່າງປະເທດ
ILSTA	ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ
IMF	ກອງທຶນການເງິນສາກົນ
IO	ຜົນໄດ້ຮັບທັນທີ
KYC	ການາຊອກຮູ້ຈັກລູກຄ້າຂອງທ່ານ
LEAs	ອົງການບັງຄັບໃຊ້ກົດໝາຍ
ME	ການປະເມີນຜົນຮອບດ້ານ
MER	ບົດລາຍງານການປະເມີນຜົນຮອບດ້ານ
MLA	ການຮ່ວມມືລະຫວ່າງປະເທດທາງອາຍາ
MLAT	ສົນທິສັນຍາຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍຂອງອາຊຽນ
NACC	ສະພາປະສານງານ AML-CFT ແຫ່ງຊາດຟີລິບປິນ
NCC	ຄະນະກຳມະການປະສານງານແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ
NRA	ການປະເມີນຄວາມສ່ຽງລະດັບຊາດ
OAG of Thailand	ສຳນັກງານໄອຍະການສູງສຸດແຫ່ງປະເທດໄທ
PF	ການສະໜອງທຶນໃຫ້ແກ່ການແຜ່ຂະຫຍາຍອາວຸດທຳລາຍລ້າງພານ
POPR	ບົດລາຍງານພາຍຫຼັງຊ່ວງສັງເກດການ
REs	ຫົວໜ່ວຍທີ່ມີໜ້າທີ່ລາຍງານ
SEAJust	ເຄືອຂ່າຍຍຸຕິທຳອາຊີຕາເວັນອອກສ່ຽງໃຕ້
SEZs	ເຂດເສດຖະກິດພິເສດ
SOPs	ຄູ່ມືການດຳເນີນງານທີ່ເປັນມາດຕະຖານ
SPP	ອົງການໄອຍະການປະຊາຊົນສູງສຸດ
STRs	ບົດລາຍງານທຸລະກຳທີ່ໜ້າສົງໄສ
UNTOC	ສົນທິສັນຍາສະຫະປະຊາຊາດຕ້ານອາຊະຍາກຳທີ່ມີການຈັດຕັ້ງຂ້າມຊາດ
VASPs	ຜູ້ໃຫ້ບໍລິການຊັບສິນສະເໝືອນຈິງ

ຮູບພາບບັນຍາກາດກອງປະຊຸມ











MEMO

Date	Month	Year